**ຄະນະຜູ້ຈັດທໍາ ບົດຮຽນພຣະຄັມພີ ພາສາລາວ**

**Copyright © 2014 by BAPTISTWAY PRESS®.**

**ສງວນລິກຂະສິດ**

ອະນຸຍາດໃຫ້ຄຣິສຕະຈັກເຮັດກ໊ອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນ ໂດຍທີ່ບໍ່ໄດ້ຂຽນຄໍາຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ໄດ້ຄັດມາຈາກປຶ້ມພຣະຄັມພີທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິກຂະສິດຂອງປຶ້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທໍາອິດ: ເດືອນ ມີນາ 2004

BAPTISTWAY Management Team

Executive Director, Baptist General Convention of Texas: David Hardage
Director, Church Ministry Resources: Chris Liebrum
Director, Bible Study/Discipleship: Phil Miller

Publisher, BAPTISTWAY PRESS®: Scott Stevens

Language Materials Team

Bible Study Writer for Lessons 1, 2, 3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1, 2, 3
Phaisane Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons 4, 5, 6, 7
Bounchanh Vongsurith, Lao Congregation of First Baptist Church, Amarillo, TX
Editor for Lessons 4, 5, 6, 7
Phaisane Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons 8, 9, 10
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 8, 9, 10
Phaisane Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons 11, 12, 13 and Christmas
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 11, 12, 13 and Christmas
Phaisane Somsith, Homprakhoon Baptist Church, Dallas, Texas

Facilitator for the LAOTIAN TEAM: Joe Haag

Patty Lane, Director, Office of Intercultural Initiatives, Baptist General Convention of Texas

# ບົດຮຽນທີ 1
## ການຝຶກຝົນຝ່າຍ ພຣະວິນຍານ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ມາຣະໂກ 1:21-39

**ພູມຫລັງຂອງພຣະຄັມພີ**: ມາຣະໂກ 1:1-39

**ຈຸດສຳຄັນສຳລັບບົດຮຽນນີ້**: ພຣະເຢຊູຊົງເຄື່ອນໄຫວໄປມາໂດຍຣິດອຳນາດຂອງພຣະວິນຍານບໍຣິສຸດ, ບໍ່ວ່າຈະເປັນການສິດສອນ ການປິ່ນປົວພະຍາດ ແລະການຂັບໄລ່ຜີຮ້າຍຕ່າງໆ

**ຄຳຖາມເພື່ອການຄົ້ນຄວ້າ**: ພວກເຮົາຈະຈົດຈຳເອົາຢ່າງໃດ ແລະຈະມີຄວາມຮັບຜິດຊອບຢ່າງໃດຕໍ່ພຣະວິນຍານບໍຣິສຸດໃນຊີວິດຂອງພວກເຮົາ

**ຈຸດປະສົງຂອງບົດຮຽນນີ້**: ເພື່ອຈະຈົດຈຳແລະມີຄວາມຮັບຜິດຊອບຕໍ່ພຣະວິນຍານບໍຣິສຸດ ຕົວຂອງຂ້ອຍເອງຈະເຮັດຢ່າງໃດຕໍ່ຊີວິດ

### ຄຳນຳ

ຕອນນີ້ເປັນຕາເບິ່ງດີ, ເບິ່ງແມ ພໍ່, ນີ້ຄືຮູບພາບຕຳຣວດໄລ່ຣົດ ແລ້ວກໍຣະເບີດຂຶ້ນເລີຍ. ລູກສາວຂອງຂ້າພະເຈົ້າມັກເບິ່ງແລະກໍສົນໃຈຫລາຍໃນຕອນບ່າຍໆ, ເວລາທີ່ກິນປ໊ອບຄອນ (ເຂົ້າຕອກແຕກ) ແລະໄອສຄຣີມທີ່ໂຮງໜັງນ້ອຍໆແຫ່ງນຶ່ງ. ຂ້າພະເຈົ້າກໍມັກເບິ່ງໜັງແບບປະຈົນພັຍ, ຊຶ່ງລູກສາວ ກິມມະລີ ຂອງຂ້າພະເຈົ້າກໍຮູ້ດີ. ສຳລັບຂ້າພະເຈົ້າແລ້ວ ຂ້າພະເຈົ້າກໍຍັງຢ້ານໃນການທີ່ເຫັນເຣື່ອງທີ່ເກີດຂຶ້ນໃນໜັງນັ້ນ.

ປຶ້ມພຣະຄັມພີມາຣະໂກ ກໍສາມາດເວົ້າໄດ້ວ່າເປັນປຶ້ມແຫ່ງການສະແດງອອກ ແມ່ນການປະຈົນພັຍຂອງຂ່າວປະເສີດ. ປຶ້ມນີ້ໄດ້ເນັ້ນໜັກຫລາຍໃນການກະທຳການອັສຈັນຂອງພຣະເຢຊູແລະໃຊ້ການຍົກຕົວຢ່າງ, ພວກສາວົກກໍມີຄວາມສົນໃຈຫລາຍໃນການກະທຳນັ້ນ ເພາະພວກເພິ່ນໄດ້ເຫັນຢ່າງຈະແຈ້ງ, ແລະເພື່ອພວກເພິ່ນຈະໄດ້ບັນທຶກໄວ້ໃນປຶ້ມຂອງພວກເພິ່ນເອງ.

ມີຄວາມແຕກຕ່າງກັນຫລາຍແທ້ໆ ລະຫວ່າງການສະແດງໜັງຮອລລີວູດ ແລະການສະແດງອອກຢູ່ໃນປຶ້ມຂ່າວປະເສີດມາຣະໂກນັ້ນ ງ່າຍແລະເປັນເອກລັກຫລາຍກວ່າ. ຂ້າພະເຈົ້າຄົງຈະບໍ່ກ້າໄປແຂວນຢູ່ປີກເຮືອບິນທີ່ກຳລັງບິນຢູ່ທີ່ສູງ, ຂ້າພະເຈົ້າຄົງຈະບໍ່ກ້າຂັບຣົດສະປອດທີ່ພຸ້ງຂຶ້ນໄປສູງໆ. ຢ່າງໃດກໍຕາມ, ຂ້າພະເຈົ້າກໍມີປະສົບການໃນພລັງອຳນາດຂອງພຣະເຢຊູ. ທ່ານກໍອາດຈະມີເໝືອນກັນ. ບົດຮຽນໃນຊ່ວງຕໍ່ໄປນີ້ ພວກເຮົາຈະເຮັດວຽກຮ່ວມກັບມາຣະໂກແລະຮ່ວມຮັບປະສົບການແລະການປະຈົນພັຍຮ່ວມກັບພຣະເຢຊູ.

ໃນການເປີດປຶ້ມມາຣະໂກນີ້ແມ່ນການເປີດສາກທີ່ແທ້ຈິງ ຖ້າເປັນພາສາບ້ານເຮົາກໍອາດຈະເອີ້ນໄດ້ວ່າອອກແຂກ: ຊຶ່ງປະກອບດ້ວຍທັມມະຊາດ, ສຽງດົນຕຣີ ແລະສຽງເວົ້າອັນດັງກ້ອງສະນັ່ນ ເພື່ອຊັກຊວນໃຫ້ຄົນມາເບິ່ງດ້ວຍສາຍຕາຂອງເຂົາເອງ.

## 1. <u>ສິດອຳນາດໃນການປະກາດ</u>: (ມາຣະໂກ 1:21-22)

ຕອນເຊົ້າວັນອາທິດ ກິຈວັດປະຈຳວັນຂອງຄອບຄົວຂ້າພະເຈົ້າແມ່ນເປັນໄປຢ່າງນີ້: ບາງຄົນຍັງງ້ວງນອນຢູ່, ບາງຄົນກໍຫາເກີບ, ບາງຄົນກໍຕ້ອງລີດສິ້ງ. ບາງຄົນກໍປັ້ນເຂົ້າເຊົ້າຢູ່ບ່ອນຈອດຣົດຂອງໂບດ ເພາະກິນຢູ່ບ້ານບໍ່ທັນໝູ່. ເວລາພວກເຮົາຜ່ານປະຕູໂບດເຂົ້າໄປ ພວກເຮົາຈະໄດ້ຍິນສຽງຄຳອ້ອນວອນອະທິຖານ, ສຽງດົນຕຣີຢ່າງມ່ວນຊື່ນ, ແລະສຽງຄຳເທສນາອັນດັງກ້ອງສະນັ່ນ.

ສຳລັບພວກຄົນຢິວທີ່ໄປໂບດໃນວັນຊະບາໂຕ ພວກເຂົາຈະກ່າວວ່າ ມາຣະໂກບົດທີ 1 ອາດຈະເວົ້າໄດ້ວ່າເປັນການນະມັສການແບບຄອບຄົວ ຊຶ່ງປະກອບດ້ວຍນັກເທດທີ່ມາເທສນາສິດສອນໃຫ້. ຢ່າງໃດກໍຕາມໃນວັນຊະບາໂຕຄັ້ງນີ້ ທຸກຢ່າງແມ່ນແຕກຕ່າງຫລາຍ. ຄຣູສອນກໍເປັນຄົນໜຸ່ມແລະຜູ້ທີ່ສັ່ງສອນກໍເປັນຜູ້ທີສັ່ງສອນດ້ວຍສິດອຳນາດຢ່າງແທ້ຈິງ. ພວກທີ່ຮັບຟັງກໍພາກັນຮັບຟັງຢ່າງຕັ້ງໃຈ ເພາະຄຳສັ່ງສອນບໍ່ເໝືອນຄຳສອນທີ່ເຄີຍໄດ້ຟັງມາ. ຜູ້ຄົນທີ່ໄດ້ຟັງກໍຕະລຶງງຶງງັນ ອັສຈັນໃຈ ໃນຄຳສອນນັ້ນ.(1:22)

ພວກເຮົາຄົງຈະເຂົ້າໃຈໃນຄຳເວົ້າຂອງພຣະເຢຊູ ຄາວສມັຍທີ່ພຣະອົງຍັງດຳເນີນຢູ່ໃນໂລກນີ້. ກ່ອນທີ່ພຣະອົງຈະສະເດັດຂຶ້ນສູ່ສວັນພຣະອົງໄດ້ກ່າວຕອນນຶ່ງວ່າ ຣິດທານຸພາບທັງສິ້ນໃນສວັນກໍດີແລະໃນແຜ່ນດິນໂລກກໍດີຊົງມອບໄວ້ແກ່ເຮົາແລ້ວ. (ມັດທາຍ 28:18) ຄຳເວົ້າຂອງພຣະຢຊູທີ່ກ່າວໃນຕອນນີ້ແມ່ນສະທ້ອນເຖິງວ່າພຣະອົງໄດ້ຮັບສິດອຳນາດຈາກພຣະບິດາໂດຍສົມບູນແລ້ວ.

ພວກເຮົາຍັງຈື່ໄດ້ບໍ່ວ່າພຣະອົງມີຣິດອຳນາດໃນການສິດສອນ? ພວກເຮົາໄດ້ເຂົ້າໃຈບໍ່ວ່າຄຳສອນຂອງພຣະອົງແຕກຕ່າງຈາກຄຳສອນຂອງຜູ້ອື່ນ? ພວກເຮົາຍັງໄດ້ເຫັນແລ້ວວ່າ ກຸ່ມຄົນທີ່ມາຣະໂກໄດ້ກ່າວເຖິງການອັສຈັນໃຈໃນຄວາມຈິງຈາກຄຳເວົ້າຂອງພຣະເຢຊູ. ຢ່າງໃດກໍຕາມ ໃນຂະນະທີ່ສຶກສາປຶ້ມຂ່າວປະເສີດມາຣະໂກຢູ່ນີ້ ຂໍໃຫ້ພວກເຮົາທັງຫລາຍຈົ່ງເຊື່ອໝັ້ນໃນຄຳສອນຂອງພຣະອົງດ້ວຍຈິດໃຈແລະເປີດແນວຄິດໃຫ້ກວ້າງ ເພື່ອຮັບເອົາຄວາມຈິງ ເພາະຄວາມຈິງເທົ່ານັ້ນທີ່ຈະເຮັດໃຫ້ທ່ານເປັນອິສລະໄດ້ (ໂຢຮັນ 8:32)

## 2. <u>ສິດອຳນາດໃນການຂັບໄລ່ຜີ</u> (ມາຣະໂກ 1:23-24)

ໜັງດີຈະຕ້ອງມີນັກສະແດງທີ່ດີ, ນັກສະແດງທີ່ດີຕ້ອງມີທ່າທີ, ມີບົດບາດດີ. ການຕໍ່ສູ້ກັນຕ້ອງໃຫ້ສົມຈິງສົມຈັງລະຫວ່າງຜູ້ຮ້າຍແລະພຣະເອກ. ໃນຕອນນີ້ ມາຣະໂກກໍຢາກຈະໃຫ້ພວກເຮົາເຫັນຣິດອຳນາດຂອງພຣະເຢຊູໃນພຣະວິຫານ, ມີຊາຍຄົນນຶ່ງທີ່ມີຜີຖ່ອຍຮ້າຍສິງຢູ່ ນີ້ບໍ່ໄດ້ແມ່ນແຜນການທີ່ຈັດຕຽມໄວ້ແຕ່ແມ່ນການປະເຊີນໜ້າຂອງພຣະເຢຊູກັບມານຊາຕານ, ມັນຮ້ອງຂຶ້ນວ່າ ເຢຊູໄທນາຊາເຣັດເອີຍ, ທ່ານມາຫຍຸ້ງກ່ຽວກັບ

ພວກເຮົາເຮັດຫຍັງ ທ່ານມາທຳລາຍພວກເຮົາບໍ ທ່ານແມ່ນຜູ້ໃດພວກເຮົາກໍຮູ້ແລ້ວ ທ່ານຄືຜູ້ບໍຣິສຸດຂອງພຣະເຈົ້າ. (ມາຣະໂກ 1:23-24)

ໃນຊີວິດຂອງພວກເຮົາເດ ແມ່ນຫຍັງມີອຳນາດໃນຊີວິດຂອງເຮົາ? (Cell phone, Tablets, laptop,...) ພວກເຮົາຈະມີສິດອຳນາດຂັບໄລ່ມັນຫລືບໍ່? ຫລືວ່າພວກເຮົາຈະໃຫ້ສິ່ງໃດສິ່ງນຶ່ງມາມີອິດທິພົນໃນຕົວເຮົາຊັ້ນບໍ? ຢ່າລືມຣິດແລະອຳນາດຂອງພຣະເຢຊູຕ້ອງມີຊັຍຊະນະຢ່າງແນ່ນອນ.

## 3. <u>ສິດອຳນາດໃນການເສີມສ້າງຜົນງານ:</u> (ມາຣະໂກ 1:25-34)

ຄຳເວົ້າແຕ່ລະຄຳແມ່ນມີຜົນຂອງມັນເອງ. ສຸພາສິດ 18:21 ຄວາມຕາຍແລະຄວາມເປັນຢູ່ທີ່ອຳນາດຂອງລີ້ນ. ພວກເຮົາຮູ້ວ່າຄຳເວົ້າຂອງພຣະເຢຊູມີພລັງອຳນາດ ເພາະພຣະອົງຊົງກ່າວຢ່າງໃດທຸກສິ່ງກໍເປັນຢ່າງນັ້ນ. ພຣະອົງກ່າວກັບທັມຊາດ, ທັມຊາດກໍຟັງ; ພວກຢູ່ໃນພຣະວິຫານກໍຕັ້ງໃຈຟັງພຣະອົງ. ພຣະອົງສັ່ງວິນຍານຊົ່ວ, ວິນຍານຊົ່ວກໍຟັງ. ພຣະເຢຊູຊົງກ່າວວ່າມິດແມ ອອກຈາກຄົນນີ້ເສັຽ (ມາຣະໂກ 1:25). ພວກເຮົາມາເບິ່ງຣິດອຳນາດດ້ວຍກັນ. ພຣະເຢຊູບໍ່ໄດ້ໃຫ້ໂອກາດມານແຕ່ຢ່າງໃດເລີຍ, ພຣະອົງຊົງບອກມັນວ່າມິດແມ ແລະອອກຈາກຄົນນີ້ເສັຽ. ຜີຖ່ອຍຮ້າຍນັ້ນກໍອອກໄປ.

ຄຳເວົ້າຂອງພຣະເຢຊູເໝືອນກັບວ່າເປັນການອັສຈັນ. ພຣະອົງຊົງມີອຳນາດຢ່າງແນ່ນອນ, ຝູງຊົນທັງຫລາຍກໍແປກປລາດ ແລະຖາມກັນວ່າເປັນຈັ່ງໃດໜໍຄົນຜູ້ນີ້ ຄຳສັ່ງສອນກໍໃໝ່ ຣິດອຳນາດກໍເໜືອທຸກຢ່າງ ແມ່ນແຕ່ສັ່ງຜີມັນກໍຍັງຟັງ. (ມາຣະໂກ 1:27) ຊື່ສຽງຂອງພຣະອົງກໍຊ່າລືໄປ.

ບໍ່ວ່າພຣະອົງຈະໄປທາງໃດ ພຣະອົງຊົງກະທຳການປົດປ່ອຍໃຫ້ຜູ້ທີ່ຢູ່ອ້ອມຂ້າງຂອງພຣະອົງຫາຍຈາກໂຣກພັຍໄຂ້ເຈັບ. ພຣະອົງໄດ້ປິ່ນປົວແມ່ເມັຽຂອງເປໂຕທີ່ກຳລັງປ່ວຍຢູ່. (ມາຣະໂກ 1:31) ພໍຕົກຕອນແລງມາກໍມີຄົນນຳຄົນປ່ວຍມາໃຫ້ພຣະອົງປິ່ນປົວເປັນຈຳນວນຫລາຍ.(ມາຣະໂກ 1:32-34) ຕົວທ່ານເດ ທ່ານເຄີຍມີບັນຫາຫລືບໍ່? ຈົ່ງເຊື່ອໃນຣິດອຳນາດຂອງພຣະເຢຊູ, ຂໍທ່ານຢ່າໄດ້ສົງສັຍ ເພາະຄົນທີ່ສົງສັຍ ແມ່ນຄົນທີ່ຂາດຄວາມເຊື່ອ. ພຣະອົງຈະມອບສັນຕິສຸກໃຫ້ແກ່ທ່ານຢ່າງເກີນຄວາມຄາດໝາຍ ແລະເກີນຄວາມເຂົ້າໃຈທຸກຢ່າງ. (ຟີລິບປອຍ 4:7) ທ່ານເຄີຍໄດ້ຮັບຫລືແບກພາຣະໜັກບໍ່? ຈົ່ງມາຫາພຣະອົງ (ມັດທາຍ11:28) ແລະທ່ານຍັງຕ້ອງການຫຍັງອີກ (ຟີລິບປອຍ 4:19)

ຈົ່ງຕິດຕາມຜູ້ທີ່ມີປະສົບການທາງດ້ານຄວາມເຊື່ອ ແລະສັງເກດເບິ່ງຣິດອຳນາດຂອງພຣະເຢຊູໃນຕົວລາວ.

## 4. <u>ສິດອຳນາດໃນການຮັບໃຊ້ແລະການປ່ຽນແປງ:</u> (ມາຣະໂກ 1: 35-39)

ສິດອຳນາດບາງຄັ້ງກໍແມ່ນຢູ່ຢ່າງງຽບໆ ຄືການອະທິຖານ. ພຣະເຢຊູຊົງຕື່ນແຕ່ເດິກ ອອກໄປທີ່ປ່ຽວແລ້ວກໍອ້ອນວອນອະທິຖານ. ຝ່າຍຊີໂມນແລະຄົນທັງຫລາຍກໍຊອກຫາພຣະອົງ ເມື່ອພົບແລ້ວພວກເຂົາທູນພຣະ

ອົງວ່າ ພວກເຮົາສແວງຫາພຣະອົງ(ມາຣະໂກ 1:37). ພຣະອົງບໍ່ໄດ້ຕອບຫຍັງເລີຍ ພຽງແຕ່ພຣະອົງກ່າວວ່າ ໃຫ້ພວກເຮົາທັງຫລາຍໄປທີ່ບ້ານເມືອງນີ້ ເພື່ອຈະໄດ້ປະກາດ ທີ່ເຮົາມາກໍເພື່ອການນີ້ແຫລະ.

ຊາວກາເປນາອູມຮູ້ຈັກພຣະເຢຊູດີວ່າພຣະອົງມີຄໍາສອນອັນແຕກຕ່າງຈາກຄົນອື່ນ. ບຸດມະນຸດບໍ່ໄດ້ມາເພື່ອຮັບການປະຕິບັດ ແຕ່ມາເພື່ອຈະປະຕິບັດເຂົາ. (ມັດທາຍ 20:28) ຖ້າເບິ່ງໄປອີກຢ່າງນຶ່ງແລ້ວກໍເໝືອນວ່າພຣະເຢຊູຈະໄປອີກທີ່ນຶ່ງ. (1:38) ແລະພຣະອົງກໍອອກປະກາດທົ່ວແຂວງຄາລີເລ.

ເມື່ອເບິ່ງສິດອໍານາດຂອງພຣະເຢຊູແລ້ວ ພຣະອົງເຮັດໃຫ້ຄົນມີອິສລະພາບຈາກຜີມານ ແລະອິສລະພາບຈາກຄວາມເຈັບໄຂ້. ພວກເຮົາຈະຮັບສິດອໍານາດຂອງພຣະເຢຊູນີ້ໄດ້ບໍ່?

## <u>ຄວາມໝາຍແລະພາກປະຕິບັດ</u>

ໃນເວລາທີ່ພຣະອົງດໍາເນີນຊີວິດຢູ່ໃນໂລກນີ້, ຢາກບອກຢ່າງຈະແຈ້ງເລີຍວ່າພຣະອົງມີສິດອໍານາດທີ່ຈະກະທໍາທຸກຢ່າງ. ໃນຄໍາສອນ ພຣະອົງກໍສາມາດໄຈ້ແຍກອອກຈາກການສິດສອນແບບຊາວໂລກ ເມື່ອມີວິນຍານຊົ່ວມາລົບກວນ ພຣະອົງກໍຊົງກໍາຈັດມັນອອກໄປ. ເມື່ອມີການເຈັບເປັນພຣະອົງກໍຊົງປິ່ນປົວພວກເຂົາດ້ວຍຣິດອໍານາດ.

ສິ່ງທີ່ຖືກຊົງສ້າງກໍຢໍາເກງຣິດອໍານາດຂອງພຣະອົງ. ພຣະເຢຊູຊົງນໍາຄົນເຂົ້າມາຫາພຣະອົງດ້ວຍຄວາມຮັກ, ດ້ວຍພຣະພອນແລະດ້ວຍການປ່ຽນແປງຊີວິດ. ຂໍໃຫ້ຊີວິດຂອງພວກເຮົາໄດ້ມີຣິດອໍານາດຂອງພຣະເຢຊູໃນທຸກສ່ວນຂອງຮ່າງກາຍຂອງພວກເຮົາ.

## <u>ຄໍາຖາມ</u>:

1. ທ່ານຍັງພໍຈື່ໄດ້ແດ່ບໍ່ ວ່າເທື່ອທ້າຍສຸດທີ່ທ່ານພົບກັບຜູ້ມີອໍານາດສູງສຸດ ແມ່ນຜູ້ໃດ ແລະຢູ່ໃສ?
2. ຄໍາສອນໃນຕອນໃດທີ່ພຣະເຢຊູຊົງບອກວ່າພຣະອົງຊົງມີຣິດອໍານາດ?
3. ແມ່ນຫຍັງທີ່ມີຣິດອໍານາດໜ້ອຍທີ່ສຸດທີ່ພວກເຮົາໄດ້ພົບຜ່ານມາ?
4. ພວກເຮົາຈະເຮັດຢ່າງໃດເພື່ອຈະໄດ້ມີປະສົບການໃນຣິດອໍານາດຂອງພຣະເຢຊູເຂົ້າມາຢູ່ໃນຊີວິດ?
5. ແມ່ນຫຍັງທີ່ກີດກັ້ນ ບໍ່ໃຫ້ພວກເຮົາໄດ້ຮັບສິດອໍານາດຈາກພຣະເຢຊູໃນວັນນີ້?

*ບພ*

# ບົດຮຽນທີ 2

# <u>ການປິ່ນປົວແລະການອະພັຍໂທດ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້</u>**: ມາຣະໂກ 2:1-12

**<u>ພູມຫລັງຂອງພຣະຄັມພີ</u>**: ມາຣະໂກ 2:1-12

**<u>ຈຸດສຳຄັນສຳລັບບົດຮຽນນີ້</u>**: ພຣະເຢຊູຊົງສຳແດງເອກລັກຂອງຕົນເອງໂດຍການປິ່ນປົວຄົນເປັນຫູ່ອຍ ແລະການອະພັຍຄວາມຜິດບາບ

**<u>ຄຳຖາມເພື່ອການຄົ້ນຄວ້າ</u>**: ແມ່ນຫຍັງຄືການເຊື່ອມໂຍງລະຫວ່າງຄວາມເຊື່ອ, ການປິ່ນປົວ ແລະການ ອະພັຍຄວາມຜິດບາບ

**<u>ຈຸດປະສົງຂອງບົດຮຽນນີ້</u>**: ເພື່ອຈະໜູນໃຈໃຫ້ມີຄວາມເຊື່ອ ແລະເຊື່ອວ່າພຣະເຢຊູຄືທີ່ມາຂອງການປິ່ນ ປົວ, ການໃຫ້ອະພັຍຄວາມຜິດບາບ

## <u>ຄຳນຳ</u>

ໃຜຊິບໍ່ຢາກກິນອາຫານທ່ຽງຄາບລະ 50 ເຊັນ. ນັກຮຽນໃນວິທະຍາລັຍບອກວ່າຂ້ອຍບໍ່ຫິວ? ນີ້ລະຄືເຫດຜົນ ທີ່ 50 ເຊັນ ຄ່າຄາບເຂົ້າທີ່ນັກຮຽນແບັບຕິສມັກກິນໃນໂຮງຮຽນ. ຫລາຍຢ່າງດີໆທີ່ມີໃນໂຮງຮຽນ, ນັກຮຽນພໍ ໃຈໃນຣາຄາອາຫານເພາະວ່າມັນຖືກ. ມີນັກເທດທີ່ມີປະສົບການສັບປ່ຽນກັນມາແບ່ງປັນພຣະຄຳວັນລະສິບ ຫ້ານາທີກ່ອນກິນອາຫານ.

ພວກນັກສຶກສາທັງຫລາຍກໍມີໂອກາດດີທັງກິນທັງຄຸຍກັນໄປນຳ, ຄາວດຽວກໍມີຄົນຍ່າງອອກຍ່າງເຂົ້າ, ເພາະ ເຖິງເວລາເຂົ້າຮຽນແລ້ວ ໃນຂະນະທີ່ນັກເທດກຳລັງເທສນາຢູ່, ສຽງຖ້ວຍສຽງຊາມສຽງຈອກກໍດັງອຶກກະທຶກ. ອາຈານຄົນນຶ່ງເວົ້າກັບຜູ້ອຳນວຍການໂຮງຮຽນວ່າ ເທື່ອໜ້າບໍ່ຕ້ອງເຊີນຂ້າພະເຈົ້າກັບມາອີກ, ເພາະສຽງລົບ ກວນຫລາຍໂພດ ແລະເວລາເທດກໍສັ້ນໂພດ ຄວນຈະໃຫ້ເວລາຢ່າງໜ້ອຍສາມສິບນາທີບົດເທສນາຈຶ່ງຈະ ຄົບຖ້ວນ.

ພຣະເຈົ້າທຳງານໃນເວລາມີຝູງຊົນຫລາຍໆແລະທີ່ມີສຽງອຶກທຶກໄດ້ບໍ່? ຂ່າວປະເສີດມາຣະໂກກ່າວວ່າພຣະ ເຢຊູເທສນາໃນຈຳນວນຝູງຊົນມາກມາຍ, ປິ່ນປົວໂຣກພັຍ, ແລະອະພັຍໂທດບາບໄປພ້ອມໆກັນ ໃນເວລາ ທີ່ມີໂອກາດແລະເວລາສັ້ນທີ່ສຸດ.

### 1. **<u>ພຣະເຢຊູຢູ່ໃນຖ້າມກາງຝູງຊົນທີ່ອຶລອຶນ</u>**: (ມາຣະໂກ 2:1-2)

ແຕ່ລະຄົນກໍເວົ້າເຖິງກິດຕິສັບຂອງພຣະເຢຊູ. ຕັ້ງແຕ່ພຣະອົງເລີ້ມຕົ້ນສອນຢູ່ໃນພຣະວິຫານເປັນຕົ້ນມາ ທຸກ ຄົນກໍຮູ້ວ່າຄຳສອນຂອງພຣະອົງແຕກຕ່າງ.(1:22) ພຣະອົງຊົງກ່າວດ້ວຍສິດອຳນາດ. ພຣະອົງຊົງຂັບໄລ່ຜີ

ພວກຜີກໍຟັງພຣະອົງ (1:25-26) ພຣະອົງຊົງປິ່ນປົວຄົນເຈັບ ບໍ່ພຽງແຕ່ຜູ້ດຽວ...ພຣະອົງປິ່ນປົວຫລາຍໆຄົນ. ພຣະອົງຍັງໄດ້ຂັບໄລ່ຜີຫລາຍໂຕ. (1:34)

ໃນວັນນີ້ ພຣະອົງຢູ່ໃນເຮືອນຫລັງນຶ່ງ ຝູງຊົນຢ່າງຫລວງຫລາຍກໍມາຊຸມນຸມກັນຈົນວ່າບໍ່ມີບ່ອນຈະຮັບໄດ້ຕໍ່ໄປ ພຽງແຕ່ຈະເຂົ້າໃກ້ປະຕູກໍບໍ່ໄດ້ ພຣະອົງໄດ້ເທສນາໃຫ້ພວກເຂົາຟັງ (2:2) ພຣະອົງມີວິທີສອນທີ່ແຕກຕ່າງກັນກັບຄົນຈຳນວນຫລາຍຫລືຕົວຕໍ່ຕົວ. ຄົນຈຳນວນຫລາຍບາງຄົນກໍສົນໃຈແລະບາງຄົນກໍຢາກມາເຫັນຝູງຊົນຫລາຍຊື່ໆ. ບໍ່ພຽງແຕ່ທີ່ນັ້ນຍັງມີຄົນຫລັ່ງໄຫລມາເພີ້ມເຕີມອີກຢູ່ບໍ່ຂາດສາຍ, ເຖິງແມ່ນວ່າຈະໄດ້ຢືນຢູ່ນອກປະຕູຫລືໄກແດ່ກໍອົດທົນເອົາ. ບາງຄົນກໍຈົ່ມ ບາງຄົນກໍເວົ້າ ແລະຈົ່ງຈື່ໄວ້ວ່າພຣະເຢຊູເທສນາຈາກບໍ່ມີເຮືອນ ແລະບໍ່ມີໄມໂຄຣໂຟນເໝືອນທຸກວັນນີ້.

ຢ່າງໃດກໍຕາມພຣະເຢຊູບໍ່ເຄີຍປະລະໂອກາດທີ່ດີໆຢ່າງນີ້ໃນການປ່າວປະກາດ. ພຣະອົງເທສນາໃນຂະນະທີ່ມີການອຶລອຶນກັນຢູ່. ທຸກວັນນີ້ ຄື້ນລົບກວນຂອງພວກເຮົາມີຫລາຍຄື້ນ ແລະເປັນການຍາກທີ່ຈະຮັບຟັງຄື້ນຂອງພຣະເຢຊູໄດ້. ພວກເຮົາຍັງມີຫລາຍຄື້ນຢູ່ບໍ ທີ່ດຶງພວກເຮົາອອກຈາກຄື້ນຂອງພຣະອົງ? ບໍ່ແມ່ນຈະມີທ່ານພຽງຄົນດຽວດອກ ພຣະທັມເອຊາຢາ 59:2 ໄດ້ເວົ້າກັບພວກເຮົາວ່າດັ່ງນີ້: ແຕ່ວ່າຄວາມຊົ່ວຊ້າຂອງເຈົ້າທັງຫລາຍໄດ້ກະທຳໃຫ້ເກີດການແຍກລະຫວ່າງເຈົ້າກັບພຣະເຈົ້າຂອງເຈົ້າ ແລະບາບຂອງເຈົ້າໄດ້ບັງພຣະພັກຂອງພຣະອົງເສັຽຈາກເຈົ້າ ພຣະອົງຈຶ່ງບໍ່ໄດ້ຍິນ. ພີ່ນ້ອງເອີຍ ຈະໄກຫລືໃກ້ພຣະອົງກໍຢູ່ກັບເຮົາແລະໄດ້ຍິນພວກເຮົາ ຂໍພວກເຮົາຈົ່ງຟັງພຣະອົງ. ພຣະອົງມີຖ້ອຍຄຳອັນຕລອດໄປເປັນນິດ.
*ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ ຖ້າຜູ້ໃດຟັງຄຳຂອງເຮົາ ແລະວາງໃຈໃນພຣະອົງຜູ້ຊົງໃຊ້ເຮົາມາຜູ້ນັ້ນກໍມີຊີວິດອັນຕລອດໄປເປັນນິດ ແລະບໍ່ເຂົ້າໃນການພິພາກສາ ແຕ່ໄດ້ຜ່ານພົ້ນຈາກຄວາມຕາຍໄປສູ່ຊີວິດແລ້ວ. ໂຢຮັນ 5:24*

## 2. **<u>ແມ່ນຫຍັງຄືຄວາມເຊື່ອ?</u>**: (ມາຣະໂກ 2:3-5)

ຖ້າຈະເວົ້າໄປກໍຄົງຍືດຍາວ, ຈະເວົ້າໃນວັກນີ້ທີ່ພວກເຮົາກຳລັງຮຽນກັນຢູ່ນີ້ຄື ມີຄົນຈຳພວກນຶ່ງໄດ້ນຳຄົນເປັ້ຽຜູ້ນຶ່ງມາຫາພຣະອົງມີສີ່ຄົນຫາມ. ນີ້ບໍ່ແມ່ນວຽກງ່າຍພໍທີ່ໃດ. ຄົນຈຳພວກນີ້ຈະຕ້ອງໄດ້ຄິດໄລ່, ຈະຂໍທົນທາງເຂົ້າໄປຢ່າງໃດ, ຈະເຮັດວິທີໃດຈຶ່ງຈະເຂົ້າຫາພຣະອົງໄດ້, ໄລຍະທາງທີ່ຫາມມາກໍເມື່ອຍລ້າລົງທຸກເວລາ.

ເມື່ອມາເຖິງແລ້ວພວກເຂົາກໍມາຮວມຄວາມຄິດ ຫາວິທີຈະເຂົ້າໄປຫາພຣະເຢຊູແຕ່ກໍເປັນໄປບໍ່ໄດ້. ມີວິທີດຽວຄືຂຶ້ນເທິງຫລັງຄາ, ເປີດຫລັງຄາ ແລ້ວກໍຢ່ອນຄົນເປັ້ຽລົງມາຫາພຣະອົງ.

ເມື່ອພຣະອົງເຫັນເພື່ອນທັງສີ່ຄົນຂອງຄົນເປັ້ຽນັ້ນ ພຣະອົງກໍຊົງເຫັນຄວາມເຊື່ອຂອງພວກເຂົາ. ພວກເຮົາກໍສາມາດເຫັນຄວາມເຊື່ອໄດ້ໃນການກະທຳ, ພຣະເຢຊູຊົງເຫັນຄວາມເຊື່ອຂອງພວກເຂົາໃນຄວາມອົດທົນ, ໃນຄວາມເສັຽສະລະ ແລະໃຄວາມເມຕຕາສົງສານຂອງພວກເຂົາ. ບໍ່ມີສິ່ງໃດທີ່ຈະມາກີດກັ້ນການກະທຳຂອງພວກເຮົາໄດ້ ຖ້າພວກເຮົາຫາກມີຄວາມເຊື່ອຢ່າງແທ້ຈິງ.

ພຣະເຢຊູຈະສາມາດເຫັນຄວາມເຊື່ອນຳພວກເຮົາໄດ້ບໍ່? ຖ້າໄດ້, ແມ່ນຫຍັງຄືຄວາມເຊື່ອ? ຄວາມເຊື່ອຂອງພວກເຮົາຈະບໍ່ມີຂອບເຂດ ຢູ່ທີ່ໃດພວກເຮົາກໍ່ສາມາດມີໄດ້ ຄົນອື່ນອາດຈະເຫັນຄວາມເຊື່ອຂອງພວກເຮົາໄດ້ໃນເວລາພວກເຮົາຫາກປິ່ນແກ້ມອີກຂ້າງນຶ່ງໃຫ້ຄົນອື່ນຕົບ. (ມັດທາຍ 5:39) ຄົນອື່ນອາດຈະເຫັນໄດ້ໃນເມື່ອພວກເຮົາຫາກເອົາເສື້ອຜ້າໃຫ້ທານແກ່ຄົນອື່ນ ຫລືເອົາແກ້ວນ້ຳໃຫ້ຄົນອື່ນທີ່ຫິວກະຫາຍດື່ມ. (ມາຣະໂກ 9:41) ຄົນອື່ນຈະເຫັນຄວາມເຊື່ອຂອງພວກເຮົາ ເມື່ອພວກເຮົາຫາກເພີ້ມຫລັກກິໂລໃຫ້ກັບເຂົາເວລາຍ່າງ.(ມັດທາຍ 5:41) ຄົນອື່ນຈະເຫັນຄວາມເຊື່ອຂອງພວກເຮົາ ເມື່ອພວກເຮົາຫາກຮັກສັດຕຣູຜູ້ທີ່ກຽດຊັງເຮົາ. (ລູກາ 6:27) ຖ້າພວກເຮົາຫາກເຮັດໄດ້ພຣະເຢຊູກໍ່ຈະເຫັນຄວາມເຊື່ອນັ້ນຢູ່ໃນຕົວຂອງພວກເຮົາ.

## 3. <u>**ສອງຢ່າງນີ້ ອັນໃດຈະງ່າຍກວ່າກັນ?**</u>: (ມາຣະໂກ 2:5-12)

ພຣະເຢຊູໄດ້ປິ່ນປົວໂຣກພັຍໄຂ້ເຈັບມາແລ້ວຫລາຍຄົນ. ພຣະອົງຍັງຈະປິ່ນປົວອີກຢູ່ບໍ? ຄຳຕອບແມ່ນຂື້ນຢູ່ກັບຄວາມຕ້ອງການຂອງພວກເຮົາ. ພຣະເຢຊູກ່າວວ່າຢ່າງໃດ ກ່ອນທີ່ພຣະອົງຈະປົວຄົນເປັ້ຽນັ້ນ?

ພຣະເຢຊູຊົງກ່າວ, ແຕ່ວ່າຄຳເວົ້າຂອງພຣະອົງນັ້ນເປັນຄຳເວົ້າທີ່ທຸກຄົນບໍ່ໄດ້ຄາດໝາຍໄວ້. ລູກເອີຍ ຜິດບາບຂອງເຈົ້າໄດ້ຮັບອະພັຍແລ້ວ. ສຽງນີ້ແມ່ນສຽງຂອງພຣະເຢຊູຢ່າງແນ່ນອນ, ເປັນສຽງທີ່ດັງຢູ່ໃນຫ້ອງແລະເປັນສຽງທີ່ບໍ່ເຄີຍມີຜູ້ໃດໄດ້ຍິນເລີຍ. ສຽງຂອງພຣະອົງປະກາດກ້ອງເຖິງການອະພັຍໂທດຕໍ່ຄົນເປັ້ຽ. ສີ່ຄົນທີ່ອອກແຮງງານໜັກແລະຢູ່ເທິງຫລັງຄາເຮືອນກໍຍັງປ່ອນຄໍອອກມາຟັງສຽງນັ້ນ. ພວກຄຣູສອນສາສນາບາງຄົນກໍຢູ່ທີ່ນັ້ນດ້ວຍ ພວກເຂົາກໍ່ພາກັນຄິດໃນໃຈວ່າເປັນຫຍັງຄົນນີ້ຈຶ່ງເວົ້າແນວນັ້ນ ເປັນການໝິ່ນປມາດພຣະເຈົ້າແທ້ ໃຜຈະຍົກຄວາມຜິດບາບໄດ້ເວັ້ນແຕ່ພຣະເຈົ້າເທົ່ານັ້ນ. (ມາຣະໂກ 2:7)

ບັນດາຄຣູສອນທັງຫລາຍເຂົາຮູ້ດີເຖິງເຣື່ອງຂອງພຣະເຈົ້າແລະການອະພັຍໂທດຂອງພຣະອົງ. ພຣະກະຣຸນາ ແລະການອະພັຍໂທດເປັນຂອງອົງພຣະຜູ້ເປັນເຈົ້າ..(ດານີເອນ 9:9) ເຮົາຄືພຣະອົງນັ້ນຜູ້ລົບລ້າງຄວາມລະເມີດ (ຄວາມຜິດບາບ) ຂອງເຈົ້າ… (ເອຊາຢາ 43:25) ໃຜເດຈະເປັນພຣະເຈົ້າເໝືອນພຣະອົງຜູ້ຊົງຍົກໂທດຄວາມຊົ່ວຊ້າ ແລະຊົງໃຫ້ອະພັຍການລະເມີດແກ່ຄົນທີ່ເຫລືອຢູ່ອັນເປັນມໍລະດົກຂອງພຣະອົງ...? (ມີກາ 7:18)

ໃນຂະນະທີ່ພວກເຂົາກຳລັງຄິດຢູ່ນັ້ນ ພຣະເຢຊູກໍ່ຊົງຊາບແລະພຣະອົງຊົງກ່າວວ່າ ເປັນຫຍັງພວກທ່ານຈຶ່ງພາກັນຄິດຢ່າງນີ້. ພຣະເຢຊູຈຶ່ງຖາມພວກເຂົາວ່າ: ຈະບອກຄົນເປັ້ຽວ່າຢ່າງໃດ?ຜິດບາບຂອງເຈົ້າໄດ້ຮັບອະພັຍແລ້ວ ຫລືຈະບອກວ່າ: ຈົ່ງລຸກຂຶ້ນເອົາບ່ອນນອນຂອງເຈົ້າຍ່າງໄປ. ອັນໃດຈະງ່າຍກວ່າກັນ.

ສຳລັບມະນຸດແລ້ວບໍ່ມີອັນງ່າຍ ແລະມະນຸດກໍບໍ່ສາມາດເຮັດໄດ້. ສຳລັບພຣະເຈົ້າແລ້ວພຣະອົງມີພລັງອຳນາດທີ່ຈະເຮັດໄດ້ທຸກຢ່າງ. ພຣະເຢຊູເຮັດໄດ້ທັງສອງຢ່າງ. ເມື່ອເຫັນດັ່ງນັ້ນຄົນທັງຫລາຍກໍປລາດໃຈແລະສັຣເສີນພຣະເຈົ້າ. (ມາຣະໂກ 2:12)

## ຄວາມໝາຍແລະພາກປະຕິບັດ

ພວກເຮົາກໍມັກເປັນເລື້ອຍໆ, ຄວາມຕ້ອງການຂອງພວກເຮົາແມ່ນການປິ່ນປົວແລະການອະພັຍໂທດ, ທີ່ຈິງແລ້ວສິ່ງເຫລົ່ານີ້ແມ່ນມາຈາກພຣະເຢຊູ. ເມື່ອພວກເຮົາບໍ່ຄາດຫວັງຈາກພຣະອົງ, ຄວາມບໍ່ຄາດຫວັງນັ້ນແຫລະທີ່ແຍກພວກເຮົາອອກຈາກພຣະອົງ. ພຣະອົງພ້ອມທີ່ຈະຮັບໃຊ້ພວກເຮົາ, ພວກເຮົາຕ້ອງຢູ່ໃກ້ພຣະອົງ ເພາະພຣະອົງຊົງຢູ່ໃກ້ພວກເຮົາ.

ເພື່ອນສະຫາຍທັງສີ່ຄົນຂອງຄົນເປັ້ຽເປັນຄົນທີ່ມີຄວາມເຊື່ອ ພວກເຂົາຈຶ່ງພາກັນຫາມຄົນເປັ້ຽມາຫາພຣະເຢຊູ. ພຣະອົງຊົງເຫັນຄວາມເຊື່ອຂອງພວກເຂົາໃນການກະທຳ. ພຣະເຢຊູກໍຈະເຫັນຄວາມເຊື່ອຂອງພວກເຮົາເມື່ອເຮົາຫາກພະຍາຍາມນຳຄົນມາຫາພຣະອົງ.

## ຄຳຖາມ:

1. ເຄີຍມີຈັກເທື່ອບໍ່ໃນຊີວິດຂອງພວກເຮົາ ທີ່ພຣະເຢຊູຊົງປາກົດຢູ່ໄກຈາກພວກເຮົາ?

2. ມີຄົນໄດ້ຊ່ວຍທ່ານໃຫ້ຫຍັບເຂົ້າໃກ້ພຣະເຢຊູແດ່ບໍ່?

3. ທ່ານເຄີຍໄດ້ຈື່ຈຳເວລາ ທີ່ພຣະເຈົ້າຊົງກະທຳເກີນຄວາມຄາດໝາຍຂອງທ່ານບໍ່?

4. ທ່ານຈະກະທຳຢ່າງໃດແດ່ ເພື່ອຈະໃຫ້ຄົນອື່ນເຫັນຄວາມເຊື່ອໃນຕົວຂອງທ່ານໄດ້?

*ບພ*

# ບົດຮຽນທີ 3
## ຄວາມເຂົ້າໃຈຜິດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ມາຣະໂກ 3:20-35

**ພູມຫລັງຂອງພຣະຄັມພີ**: ມາຣະໂກ 3:7-35

**ຈຸດສຳຄັນສຳລັບບົດຮຽນນີ້**: ຄອບຄົວຍາດພີ່ນ້ອງແລະຜູ້ນຳສາສນາຈາກກຸງເຢຣູຊາເລັມມີຄວາມເຂົ້າໃຈຜິດໃນຕົວຂອງພຣະເຢຊູແລະການປ່າວປະກາດ

**ຄຳຖາມເພື່ອການຄົ້ນຄວ້າ**: ພວກເຮົາຈະມີຄວາມຮັບຜິດຊອບຢ່າງໃດຕໍ່ການໂຈມຕີ ຫລືການຫາເຣື່ອງຈາກຜູ້ອື່ນ ຫລືຈາກຄອບຄົວຂອງເຮົາເອງ

**ຈຸດປະສົງຂອງບົດຮຽນນີ້**: ເພື່ອຈະໄດ້ຢັ້ງຢືນໃຫ້ເຫັນວ່າການທຳງານໃຫ້ກັບພຣະເຈົ້າພ້ອມດ້ວຍການປ່າວປະກາດຕ້ອງເປັນສິ່ງສຳຄັນກວ່າໝູ່.

### ຄຳນຳ

ທ່ານເຄີຍໄດ້ຮ່ວມກັບກຸ່ມລັດທິບໍ່? ນີ້ຄືຄຳຖາມທີ່ເພື່ອນໆຖາມຜົວເມັຽໜຸ່ມຄູ່ນຶ່ງ ທີ່ຫາກໍເລີ້ມເຂົ້າມາເປັນສະມາຊິກຂອງໂບດພວກເຮົາ ພວກເຂົາພະຍາຍາມປ່ຽນຮູບແບບຊີວິດການເປັນຢູ່ ອີງຕາມລະບົບການຮ່ຳຮຽນພຣະຄັມພີ. ພວກເຂົາກໍຍັງປ່ຽນແປງການຈັບຈ່າຍໃຊ້ເງິນຄຳ, ຊຶ່ງແຕ່ກ່ອນພວກເຂົາເຄີຍຊື້ເຄື່ອງຂອງແບບບໍ່ອັ້ນ, ອອກກິນເຂົ້ານອກບ້ານ ແລະໄປເບິ່ງໜັງເກືອບທຸກເຣື່ອງ. ດຽວນີ້ ພວກເຂົາຮູ້ສຶກຕົວເອງຫລາຍຂຶ້ນກ່ຽວກັບການອອກນອກບ້ານ ພວກເຂົາຝຶກຝົນຕົນເອງໃຫ້ຢູ່ໃນຣະບຽບຂອງການມີຄອບຄົວ. ການປ່ຽນແປງຂອງພວກເຂົາແມ່ນຈະແຈ້ງຫລາຍ.

ເປັນທີ່ໜ້າສົນໃຈຫລາຍ, ຄອບຄົວຂອງພຣະເຢຊູທີ່ມີປະສົບການແລະມີລັກສະນະທີ່ເປັນເອກລັກ ຫລັງຈາກ 30 ປີຜ່ານມາແລ້ວ, ພຣະເຢຊູຈະເຣີນເຕີບໂຕດ້ວຍການກະທຳຫລາຍຢ່າງ ພວກເຂົາຖາມເຖິງເອກລັກຂອງພຣະອົງ, (ຊີວະປວັດ) ການທຳມາຫາກິນຢ່າງໃດ? ພຣະເຢຊູກໍໄດ້ບອກຕາມຄວາມຈິງເຖິງຄວາມເປັນເອກລັກຂອງພຣະອົງ ແລະເປັນຫຍັງພຣະອົງຈຶ່ງສະເດັດເຂົ້າມາໃນໂລກນີ້.

ຂໍ້ໃຫຍ່ໃຈຄວາມທີ່ພວກເຮົາຈະສຶກສານຳກັນໃນວັນນີ້ ແມ່ນເພື່ອຈະຊ່ວຍໃຫ້ພວກເຮົາເຂົ້າໃຈ ເຖິງຄວາມເປັນເອກລັກ ແລະການສະເດັດມາເພື່ອຈຸດປະສົງອັນໃດ.

### 1. ພຣະອົງອອກມາຈາກຄອບຄົວທັມມະດາ: (ມາຣະໂກ 3:20-21)

ຄົງຈະບໍ່ເປັນຂອງງ່າຍທີ່ຈະເປັນລູກຂອງພຣະເຈົ້າ ແລ້ວດຳເນີນຊີວິດໃນຄອບຄົວທັມມະດາ. ພຣະອົງບໍ່

ເຄີຍວ່າຈະບໍ່ເຊື່ອຟັງພໍ່ແມ່. ພຣະອົງເວົ້າຄວາມຈິງສເມີມາ. ພຣະອົງປະຕິບັດຕົນເອງຢ່າງດີຕລອດມາ, ທຳງານໜັກ ແລະມີຄວາມອົດທົນ. ພຣະອົງເຫັນໂລກນີ້ເໝືອນກັບຄົນອື່ນເຫັນ.

ແຕ່ວ່າຄວາມລັບໃນຄອບຄົວກໍຕ້ອງຖືກເປີດເຜີຍອອກ. ມີສິ່ງນຶ່ງທີ່ພຣະເຢຊູຢາກຈະເວົ້າໃຫ້ຄອບຄົວໄດ້ຟັງ ເວລາກິນເຂົ້າແລງ. ເປັນເຣື່ອງທີ່ຄ້າຍກັບເຣື່ອງທີ່ຢູ່ໃນວິຫານ, ໃນເຮືອນຂອງເພື່ອນ ແລະໃນທີ່ສາທາຣະນະ ເວລາພຣະອົງກ່າວອັນໃດຜູ້ຄົນທັງຫລາຍກໍສົນໃຈຟັງ. ແຕ່ລະວັນກໍມີຄົນຖາມຢູ່ເລື້ອຍໆ. ລູກຊ່າງໄມ້ຄົນນີ້ຄິດວ່າຕົວເອງແມ່ນໃຜ?

ບໍ່ວ່າພຣະອົງຈະໄປໃສ ຝູງຊົນກໍພາກັນມາຫ້ອມລ້ອມ, (ມາຣະໂກ 3:20) ສິ່ງນຶ່ງທີ່ພຣະເຢຊູຊົງກ່າວເຖິງຄືຄວາມເປັນມາຂອງພຣະອົງຢ່າງແທ້ຈິງ. ເມື່ອກ່າວດັ່ງນັ້ນຄອບຄົວກໍເລີຍມີບັນຫາໄປດ້ວຍ. ແຕ່ເມື່ອທາງຄອບຄົວໄດ້ຍິນດັ່ງນັ້ນ ພວກເຂົາກໍອອກໄປເພື່ອຈະໄປຫ້າມປາມພຣະອົງໄວ້. (ມາຣະໂກ 3:21-22)

ເຄີຍມີບໍ່ ທີ່ວ່າພຣະເຢຊູຄວບຄຸມຕົວທ່ານເອງ ຢູ່ໃນຊີວິດຂອງທ່ານ? ອາດຈະມີ. ຈະມີກໍເມື່ອການເລີ້ມຕົ້ນທີ່ພຣະອົງຊົງລ້າງບາບໃຫ້ແກ່ທ່ານ. ພຣະອົງປະສົງຈະເຂົ້າມາມີສ່ວນຮ່ວມໃນຊີວິດຂອງທ່ານ, ພຣະອົງຢາກຈະນຳພາທ່ານໄປໃນທາງທີ່ຖືກຕ້ອງ, ເວົ້າງ່າຍໆ ຄືພຣະອົງຕ້ອງການມີຄວາມສັມພັນໃນຊີວິດຂອງທ່ານ. ທ່ານອາດຈະລັ່ງເລໃຈວ່າຕົວເຮົາເອງໄດ້ປຸ່ງແລ້ວບໍນີ້. ບາງທີເຮົາກຳລັງປະຊຸມໃນວຽກງານຢູ່ກໍເວົ້າເຣື່ອງຂອງພຣະເຢຊູອອກມາ, ຄົນອື່ນຈະເວົ້າວ່າໝໍນີ້ເປັນບ້າພຣະເຢຊູແລ້ວ. ທ່ານເຄີຍມີປະສົບການຢ່າງນີ້ບໍ່?

## 2. <u>**ຄວາມສັມພັນຂອງຄອບຄົວ**:</u> (ມາຣະໂກ 3:31-34)

ກ່ອນທີ່ຄອບຄົວຂອງພຣະເຢຊູຈະມາເຖິງ ພຣະອົງກໍໄດ້ຖືກອ້ອມລ້ອມໄປດ້ວຍຄຣູສອນສາສນາແລະກຳລັງໂຕ້ຕອບຄຳຖາມຊຶ່ງກັນແລະກັນ. ບໍ່ດົນນານພໍທໍ່ໃດກໍມີຄົນເຂົ້າມາບອກພຣະອົງວ່າ ແມ່ແລະອ້າຍນ້ອງຂອງທ່ານຕ້ອງການຈະພົບທ່ານຢູ່ຂ້າງນອກ. (ມາຣະໂກ 3:32 ) ພຣະເຢຊູຊົງຕອບວ່າ ໃຜຄືມານດາແລະອ້າຍນ້ອງຂອງເຮົາ. ໃນຂະນະດຽວກັນ ພຣະອົງກໍຫລຽວໄປຮອບໆຂ້າງ ແລະກໍຍົກມືຂຶ້ນແລ້ວກ່າວວ່າ ນີ້ຄືມານດາແລະອ້າຍນ້ອງຂອງເຮົາ. (ມາຣະໂກ 3:3-34).

ພຣະເຢຊູບໍ່ໄດ້ຖືກຢາສລົບແລະບໍ່ໄດ້ຫລົງສະຕິ. ຄອບຄົວຍິ່ງເປັນເຣື່ອງສຳຄັນຫລາຍໃນຮີດຄອງປະເພນີຂອງຄົນຢິວ ພຣະເຢຊູບໍ່ໄດ້ເຫັນຄອບຄົວເປັນຂອງຕ່ຳ, ແຕ່ພຣະອົງຊົງໃຫ້ກຽດແກ່ທຸກຄົນທີ່ເຊື່ອແລະກະທຳຕາມນ້ຳພຣະທັຍຂອງພຣະເຈົ້າ ຜູ້ນັ້ນແຫລະເປັນຍາດພີ່ນ້ອງຂອງເຮົາ.(ມາຣະໂກ 3:35) ພວກເຮົາຈຶ່ງເຫັນໄດ້ວ່າທຸກຄົນກໍເປັນຄອບຄົວດຽວກັນທັງໝົດ ຄວາມສັມພັນແບບໃໝ່ທີ່ພຣະເຢຊູກ່າວນີ້ ແມ່ນຄວາມສັມພັນທາງພຣະວິນຍານບໍຣິສຸດ, ຊຶ່ງກ່ຽວພັນໄປເຖິງພຣະບິດາຜູ້ຊົງສະຖິດໃນແຜ່ນດິນສວັນ.

ຄອບຄົວໃນແຜ່ນດິນໂລກນີ້ ມີຂອບເຂດຈຳກັດ: ເວລາ, ຕຳແໜ່ງ, ໜ້າທີ່...ພຣະເຢຊູຊົງປະກາດວ່າຖ້າຫາກຜູ້ໃດທີ່ມີຄວາມສັມພັນກັບພຣະອົງແລ້ວຈະບໍ່ມີຂອບເຂດຈຳກັດ,ແລະຄວາມສັມພັນນີ້ ທຸກຄົນສາມາດ

ເຂົ້າມາຫາພຣະອົງໄດ້ ບໍ່ວ່າຈະເປັນຄົນຢິວຫລືຄົນຕ່າງຊາດ, ຂ້າທາດຫລືອິສລະ, ຊາຍຫລືຍິງ ທ່ານທັງຫລາຍ ຈະເປັນອັນນຶ່ງອັນດຽວກັນໃນພຣະອົງ. ຄຳສັນຍານີ້ ແມ່ນເພື່ອທ່ານແລະລູກທັງຫລາຍຂອງທ່ານດ້ວຍ. (ກິຈການ 2:39) ຖ້າທ່ານຢາກຈະມີຄວາມສັມພັນກັບພຣະເຢຊູ ທ່ານກໍມີສິດທີ່ຈະຕ້ອນຮັບເອົາພຣະອົງໄດ້ທຸກເວລາ. (ໂຢຮັນ 1:12)

### 3. <u>ການບໍ່ຮັບຜິດຊອບຕໍ່ໜ້າທີ່ ແລະການເພີກເສີຍ</u>: (ມາຣະໂກ 3:22-30)

ບໍ່ແມ່ນແຕ່ຄອບຄົວແລະຍາດພີ່ນ້ອງເທົ່ານັ້ນທີ່ໃຫ້ຄຳຕັກເຕືອນແກ່ພຣະເຢຊູ. ພວກບັນດາ ຄຣູສອນສາສນາກໍຍິ່ງເພີ້ມທະວີຄວາມສົງສັຍແລະຢ້ານລື່ນໃນອິດທິພົນທີ່ຈະຕາມມາພາຍຫລັງ, ດັ່ງນັ້ນພວກເຂົາຈຶ່ງມາປະເຊີນໜ້າກັບພຣະອົງ. ການຕູ່ວ່າຫາເຣື່ອງເກີດຂຶ້ນທັນທີ ຜູ້ນີ້ມີຜີເບເອນເຊບູນສິງຢູ່ (ຫົວໜ້າຜີທັງຫລາຍ). ທີ່ເພິ່ນຂັບໄລ່ຜີໄດ້ກໍແມ່ນໃຊ້ອຳນາດຂອງຫົວໜ້າຜີ. ພວກເຂົາບໍ່ໄດ້ກ່າວເຖິງການທຳງານດ້ວຍຣິດອຳນາດຂອງພຣະວິນຍານບໍຣິສຸດຂອງພຣະເຈົ້າເລີຍ.

ພຣະເຢຊູກໍບໍ່ໄດ້ທໍ້ຖອຍ ພຣະອົງຈຶ່ງເອີ້ນຄົນເຫລົ່ານັ້ນມາ ແລ້ວກໍກ່າວຄຳອຸປມາຫລາຍຢ່າງໃຫ້ພວກເຂົາຟັງ.(ມາຣະໂກ 3:23) ພຣະອົງພະຍາຍາມອະທິບາຍເຖິງການເປັນໄປບໍ່ໄດ້ໃນການກ່າວຫາຂອງພວກເຂົາ.

(1) ຜີຈະຂັບໄລ່ຜີໄດ້ຢ່າງໃດ (3:23) ພຣະອົງຍັງຍົກຕົວຢ່າງອີກກ່ຽວກັບເຣື່ອງອານາຈັກຖ້າແຕກແຍກກັນແລ້ວຈະຕັ້ງຢູ່ບໍ່ໄດ້, ເຣື່ອງເຮືອນກໍເຊັ່ນດຽວກັນ, ຊາຕານກໍເຊັ່ນດຽວກັນ ຈະຕໍ່ສູ້ຊາຕານຢ່າງໃດ. (3:24-26)

(2) ເມື່ອພວກເຂົາຫາກບໍ່ສົນໃຈ ແລ້ວພຣະອົງກໍນຳພວກເຂົາໄປສູ່ເຣື່ອງພຣະວິນຍານ. ຄວາມຜິດບາບທຸກຢ່າງແລະຄວາມໝິ່ນປມາດທີ່ມະນຸດກ່າວນັ້ນພຣະອົງຈະຊົງອະພັຍໂທດໃຫ້ໄດ້. (3:28) ແຕ່ຖ້າຜູ້ໃດກ່າວຄຳໝິ່ນປມາດຕໍ່ພຣະວິນຍານບໍຣິສຸດ ຈະຊົງໂຜດອະພັຍໃຫ້ແກ່ຜູ້ນັ້ນບໍ່ໄດ້ຈັກເທື່ອ. (3:29) ທີ່ກ່າວຢ່າງນີ້ ກໍເພາະເຂົາກ່າວວ່າ ເພິ່ນມີຜີໂສໂຄກສິງຢູ່. (3:30)

ພວກຄຣູສອນສາສນາຄິດວ່າການອະພັຍໂທດຈະບໍ່ມີອີກແລ້ວ ພວກເຂົາກໍເລີຍຄິດໄປວ່າພວກເຂົາຈະກາຍເປັນຜູ້ກ່າວຄຳໝິ່ນປມາດພຣະວິນຍານ ແລະພວກເຂົາຈະກາຍເປັນຄົນໝົດໂອກາດ. *ຈົ່ງຈື່ໄວ້ວ່າ ໃນໂຢຮັນ 16:8-9 ກ່າວວ່າ ເມື່ອພຣະອົງສະເດັດມາແລ້ວພຣະອົງນັ້ນແຫລະ ຈະຊົງບັນດົນໃຫ້ໂລກຮູ້ແຈ້ງໃນເຣື່ອງຄວາມຜິດບາບ, ຄວາມຊອບທັມແລະການພິພາກສາ. ໃນເຣື່ອງຄວາມຜິດບາບນັ້ນ ຄືເພາະເຂົາບໍ່ວາງໃຈເຊື່ອໃນເຮົາ.*

ຖ້າທ່ານຫາກຮູ້ສຶກວ່າຕົນເອງຍັງເປັນຄົນບາບຢູ່ ຈົ່ງໃຫ້ພຣະວິນຍານບໍຣິສຸດທຳງານໃນຕົວທ່ານເຖີດ. ພຣະວິນຍານບໍຣິສຸດຈະປະທານຊີວິດໃໝ່ໃຫ້ແກ່ທ່ານ (ໂຣມ 8:11) ແລະຈະໄດ້ການຄ້ຳປະກັນວ່າ ພຣະວິນຍານບໍຣິສຸດຈະສະຖິດຢູ່ນຳທ່ານ. (1ໂຢຮັນ 3:24; 4:13)

### <u>ຄວາມໝາຍແລະພາກປະຕິບັດ</u>

ຍ້ອນການບໍ່ຕິດຕາມໃກ້ຊິດ  ພວກເຮົາຈະບໍ່ສາມາດເຫັນສິ່ງທີ່ເລິກລັບໄດ້.  ເຖິງແມ່ນວ່າຈະເປັນຄອບຄົວດຽວກັນກໍຕາມ ພວກເຮົາກໍອາດຈະເຂົ້າໃຈຜິດກໍໄດ້.  ບາງເທື່ອພວກເຮົາຍັງຕ້ອງໄດ້ອະທິບາຍໃຫ້ຄອບຄົວເຮົາເຂົ້າໃຈ.

ທ່ານຈະເຂົ້າໃຈພຣະເຢຊູຢ່າງເຕັມສ່ວນຢ່າງໃດ ກ່ຽວກັບການປະກາດແລະກ່ຽວກັບພຣະປະສົງຂອງພຣະບິດາ.  ພຣະເຢຊູເຮັດໄດ້ຍ້ອນການປ່ຽນແປງຊີວິດ, ການປິ່ນປົວຄົນເຈັບໄຂ້  ຂັບໄລ່ຜີ.....ທ່ານກໍສາມາດເຮັດໄດ້ເໝືອນກັນ.

**<u>ຄຳຖາມ:</u>**

1. ແມ່ນຫຍັງທີ່ຄຣິສຕຽນມັກເຮັດ ແລະຜູ້ຄົນທັງຫລາຍມັກນິນທາ?
2. ຊີວິດຈິດວິນຍານຂອງຄອບຄົວທ່ານແຕ່ກ່ອນເປັນຢ່າງໃດ? ແລະປັດຈຸບັນນີ້ເດ ເປັນຢ່າງໃດ? ແຕກຕ່າງກັນບໍ່?
3. ແມ່ນຫຍັງທີ່ຜູ້ຄົນທັງຫລາຍມັກກ່າວຫາພຣະເຢຊູ ແລະວຽກງານຂອງພຣະອົງ?
4. ແມ່ນຫຍັງທີ່ເປັນເຄື່ອງໝາຍຢ່າງຈະແຈ້ງ ທີ່ບາງຄົນມັກຂັດຂວາງທ່ານໃນການປະກາດ?

*ບພ*

# ບົດຮຽນທີ 4

## ເອົາຊະນະຄວາມມືດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມາຣະໂກ 5:1-20

**ພູມຫລັງຂອງພຣະຄັມພີ:** ມາຣະໂກ 4; 5:1-20

**ຈຸດສຳຄັນຂອງບົດຮຽນນີ້:** ອົງພຣະເຢຊູໄດ້ເປີດເຜີຍຣິດອຳນາດຂອງພຣະອົງໃນເຂດແດນທີ່ມີຄວາມມືດຄອບງຳ ແລະຕໍ່ຊາຍທີ່ມີຜີເຂົ້າ.

**ຄຳຖາມເພື່ອການຄົ້ນຄວ້າ:** ພວກເຮົາຍິນດີຈະປະເຊີນຕໍ່ໂລກທີ່ເຕັມໄປດ້ວຍຄວາມມືດຊ່ຳໃດ?

**ຈຸດປະສົງຂອງບົດຮຽນ:** ເລືອກທີ່ຈະປະເຊີນກັບໂລກແຫ່ງຄວາມມືດດ້ວຍຣິດອຳນາດຂອງອົງພຣະເຢຊູ.

### ບົດນຳ

ປຶ້ມມາຣະໂກໄດ້ບອກພວກເຮົາວ່າອຳນາດແຫ່ງຄວາມມືດມີແທ້ ແລະມັນມີຜົນຮ້າຍຫລາຍ. ແຕ່ຂອບພຣະຄຸນພຣະເຈົ້າເພາະເຫັນວ່າອົງພຣະເຢຊູມີຣິດອຳນາດເໜືອກວ່າການອັສຈັນ.

ພວກສາວົກອາດຈະບໍ່ຮູ້ຄັກ ແຕ່ເຫັນວ່າພວກເຂົາຈະໄດ້ປະສົບກັບມັນໃນແຄມທະເລຄືນນັ້ນເພື່ອ ເປັນການເລີ້ມຕົ້ນຕຽມພວກເຂົາກັບສິ່ງຈະເກີດຂຶ້ນຕໍ່ໄປ. ພວກສາວົກພາກັນສຶກສາພຣະຄັມພີຢູ່ແຄມທະເລ ອົງພຣະເຢຊູໄດ້ສອນເຖິງຄຳອຸບປະມາເຣື່ອງຜູ້ຫວ່ານ, ເຣື່ອງໂຄມໄຟຕັ້ງຢູ່ເທິງ, ແລະພຣະອົງໄດ້ກ່າວຕໍ່ໄປເຖິງຣາຊອານາຈັກຂອງພຣະເຈົ້າເໝືອນແກ່ນຜັກກາດທີ່ໃຫຍ່ຂຶ້ນ(ມຣກ 4:1-34). ເມື່ອຄ້ອຍຄ່ຳລົງອົງພຣະເຢຊູໄດ້ຊວນພວກສາວົກຂ້າມໄປຍັງອີກຝັ່ງນຶ່ງ. ໃນເມື່ອມີລົມພະຍຸພັດແຮງກໍມີຟອງນ້ຳຕີເຮືອຊັດໄປມາ ແລະການທີ່ຈະຂ້າມໄປເຖິງຝັ່ງນັ້ນກໍເປັນອັນຕະລາຍ.

ຖ້າມກາງລົມພັດແຮງອົງພຣະເຢຊູໄດ້ຊົງນອນຫລັບຢູ່ທ້າຍເຮືອ ພວກສາວົກຢ້ານຈຶ່ງປຸກພຣະອົງໃຫ້ຕື່ນໂດຍກ່າວວ່າ, “ພຣະອາຈານ, ທ່ານບໍ່ເປັນຫ່ວງບໍ່ ພວກຂ້ານ້ອຍຈວນຈະຕາຍຢູ່ແລ້ວ?” (4:38). ອົງພຣະເຢຊູເລີຍຕື່ນ ແລະໄດ້ຫ້າມລົມແລະຟອງນ້ຳວ່າ, “ຈົ່ງສງົບງຽບແມ?” ແລະເຫັນວ່ານ້ຳ ແລະຟອງນ້ຳສງົບລົງທັນທີ (4:39). ອົງພຣະເຢຊູຈຶ່ງຖາມພວກເຂົາວ່າ “ເປັນຫຍັງພວກທ່ານຈຶ່ງຢ້ານ? ພວກທ່ານບໍ່ມີຄວາມເຊື່ອບໍ່?” (4:40). ໃນຊ່ວງເວລາອັນສັບສົນພວກສາວົກບໍ່ຕອບ ແລະຖາມກັນແລະກັນວ່າ, “ທ່ານຜູ້ນີ້ແມ່ນໃຜ? ເພາະເຫັນວ່າລົມແລະຟອງນ້ຳໃຫຍ່ຍັງເຊື່ອຟັງພຣະອົງ.” (4:41).

ໃນປຶ້ມມາຣະໂກນີ້ໄດ້ບອກເຖິງພລັງແລະຣິດອຳນາດຂອງອົງພຣະເຢຊູ. ແຕ່ໃນຕອນນີ້ອົງພຣະເຢຊູໄດ້ສະແດງຣິດອຳນາດທີ່ເໜືອທັມມະຊາດ ແລະທັມມະຊາດກໍຍອມຟັງພຣະອົງ. ອົງພຣະເຢຊູໄດ້ຕຽມພວກສາວົກ ຄືໃຫ້ມີຄວາມເຊື່ອເພື່ອຈະເອົາຊັຍຊະນະຄວາມຢ້ານໄດ້ ເພາະພວກເພິ່ນຈະມີຄວາມຢ້ານເວລາໄປເຖິງອີກຝັ່ງນຶ່ງ.

## 1. **ຄວາມຢ້ານມືດທີ່ຫຍັງແດ່**: ( ມາຣະໂກ 5:1-2 )

ຊາຍຜີສິງຄົນນຶ່ງມາພົບກັບອົງພຣະເຢຊູກັບພວກສາວົກເມື່ອຂ້າມຝັ່ງໄປເຖິງນັ້ນ (5:2). ເຫັນວ່າວິນຍານຊົ່ວໄດ້ທຳຮ້າຍຮ່າງກາຍຂອງຊາຍຄົນນັ້ນພໍສົມຄວນຈົນເຮັດໃຫ້ຊາຍຄົນນັ້ນໄປຢູ່ໃນຜີປ່າຊ້າ. ປ່າຊ້າເປັນສິ່ງກົງກັນຂ້າມກັບບ້ານເຮືອນ ເພາະເປັນບ່ອນແຍກຄວາມສຳພັນອອກຈາກກັນ ແລະເປັນບ່ອນສຸດທ້າຍຂອງຊີວິດມະນຸດ. ໃນປ່າຊ້າຈະມີຄົນໄປຮ້ອງໄຫ້ເພາະເປັນທຸກໂສກ ໝາຍເຖິງການສູນເສັຽອັນຍິ່ງໃຫຍ່. ຜີມານທີ່ຢູ່ໃນໂລກນີ້ເປັນສິ່ງເຕືອນພວກເຮົາວ່າຄວາມມືດຍັງຄົງມີຢູ່ ແລະມັນຈະນຳມະນຸດອອກຈາກແດນທີ່ເຕັມໄປດ້ວຍຊີວິດເຂົ້າໄປຍັງແດນມໍຣະນາທີ່ເຕັມໄປດ້ວຍຄວາມມືດ.

ໃນຊີວິດຂອງທ່ານຄວາມມືດຢ່າງນີ້ໄດ້ເຂົ້າມາບໍ່? ບາງຄັ້ງອາດແມ່ນຄວາມບາບໄດ້ເລີ້ມເຂົ້າມາເຮັດໃຫ້ຄວາມສຳພັນຂອງທ່ານກັບຄົນອື່ນຂາດໄປເຮັດໃຫ້ທ່ານຢູ່ຢ່າງໂດດດ່ຽວ ເປັນເຫດໃຫ້ທ່ານຢາກທຳລາຍຕົນເອງ. ການທີ່ຈະເອົາຊັຍຊະນະຕໍ່ຄວາມບາບຢ່າງນີ້ແມ່ນໃຫ້ຍອມຮັບຄວາມຈິງ ແລະສາລະພາບວ່າທ່ານຍັງມີຄວາມຜິດບາບຢູ່. ໃນທີ່ສຸດທ່ານຈະມີຊັຍຊະນະຕໍ່ອຳນາດຂອງຄວາມບາບໄດ້ ຍ້ອນອົງພຣະເຢຊູຜູ້ປະທານຄວາມຫວັງແກ່ຜູ້ທີ່ເຊື່ອໃນພຣະອົງ.

## 2. **ອຳນາດທີ່ທຳລາຍ**: ( ມາຣະໂກ 5:3-5 )

ອຳນາດຂອງມານຄືຄວາມມືດເພື່ອຈະທຳລາຍນັ້ນມີຢ່າງມາກມາຍຕໍ່ທຸກຄົນຜູ້ຢູ່ໃກ້ເຮົາ. ເວລາຜີສິງຄົນເຫັນວ່າມັນມີແຮງຫລາຍຈົນບໍ່ມີໃຜບັງຄັບມັນໄດ້ ເຖິງຈະເອົາໂສ້ມັດໄວ້ມັນກໍຍັງຫັກອອກໄດ້ຢ່າງສະບາຍ, “ເພາະວ່າໄດ້ໃສ່ຊືກໃສ່ໂສ້ລ່າມມັນໄວ້ຫລາຍເທື່ອແລ້ວ ແຕ່ມັນກໍເຮັດຂາດ ແລະຊືກມັນກໍເຮັດຫັກມຸ່ນໄປ ບໍ່ມີຜູ້ໃດມີແຮງພໍຈະບັງຄັບມັນໄວ້” (5:4). ແຕ່ຕ້ອງເຂົ້າໃຈວ່າອຳນາດແຫ່ງຄວາມມືດເຮັດຢ່າງນັ້ນກໍມີຈຸດປະສົງດຽວຄື ເພື່ອທຳລາຍ.

ມີຫລາຍໆສິ່ງໃນໂລກນີ້ທີ່ຄົນຄິດວ່າເຮັດໃຫ້ພວກເຮົາມີພລັງອຳນາດເຊັ່ນ ມີຊື່ສຽງດີ, ມີເງິນ, ຫລືມີຄົນອື່ນຢາກເຮັດນຳ ແຕ່ພວກເຮົາຕ້ອງເຂົ້າໃຈດີວ່າ ຖ້າຄວາມໂດ່ງດັງເຮັດໃຫ້ເຮົາຈົມລົງແລ້ວ ຢ່າເອົາເລີຍ ອຳນາດທີ່ປາສຈາກພຣະເຈົ້າຈະນຳໄປເຖິງຄວາມຈິບຫາຍ.

ຄົນອື່ນກໍຢາກຈະຊ່ວຍຄົນທີ່ຖືກຜີສິງເພາະລາວຢູ່ໃນຊີວິດອັນໜ້າຢ້ານ, ແຕ່ເປັນໜ້າເສັຽດາຍເພາະບໍ່ມີຜູ້ໃດສາມາດຊ່ວຍໄດ້. (5:4) ໃນຕອນນີ້ເຫັນວ່າອຳນາດແຫ່ງຄວາມມືດເອົາຊະນະທຸກຄົນ. ໃນແຄມທະເລເວລານັ້ນອຳນາດແຫ່ງຄວາມມືດໄດ້ພົບກັບອຳນາດແຫ່ງຄວາມສວ່າງ ເພາະພຣະເຢຊູໄດ້ປະເຊີນກັບພຍາມານໜ້າຕໍ່ໜ້າ. ໃຫ້ທ່ານຄຶດເຖິງຊີວິດຂອງຕົນເອງຊຶ່ງອາດຈະມີສິ່ງທີ່ຕໍ່ຕ້ານກັບທ່ານ ເຄີຍມີບໍ່? ທ່ານຄຶດວ່າຜົນດີໃນຊີວິດກໍກາຍເປັນສິ່ງທີ່ເຂົ້າມາທຳລາຍຄວາມສຳພັນ, ເຮັດໃຫ້ຄວາມເຊື່ອສະເທືອນ ແລະເຮັດໃຫ້ມີບັນຫາໃນເຮືອນ ແລະໃນບ່ອນເຮັດວຽກ. ທ່ານເຫັນບໍ່? ມານພຽງແຕ່ຈະມາທຳລາຍພວກເຮົາເທົ່ານັ້ນ ດັ່ງນັ້ນໃຫ້ເຮົາມອບຊີວິດໃຫ້ອົງພຣະເຢຊູຊົງຄອບຄອງໃນວັນນີ້ ເພື່ອພວກເຮົາຈະເຮັດສິ່ງທີ່ດີຢ່າງຖືກຕ້ອງ.

ການເປັນທຸກເພາະອຳນາດຂອງມານນັ້ນແມ່ນບອກເຖິງອຳນາດແຫ່ງຄວາມບາບຍັງມີຢູ່ທຸກວັນນີ້ ດັ່ງທີ່ໄດ້ເຫັນຊີວິດຂອງຊາຍຄົນນີ້ທີ່ຖືກຜີສິງ ເພາະລາວໄດ້ຮ້ອງໄຫ້ໃນຜີປ່າຊ້າທັງກາງເວັນແລະກາງຄືນ (5:5). ຊາຍຄົນນີ້ຮູ້ວ່າຕົນເອງຕ້ອງການຄວາມຊ່ວຍເຫລືອ ເພາະລາວທຳລາຍຕົນເອງດ້ວຍເອົາໝາກຫີນປາດຮ່າງກາຍຢ່າງໝົດຫວັງ.

ທຸກວັນນີ້ເຮື່ອງຜີປ່າຊ້າ ອຳນາດແຫ່ງຄວາມບາບທີ່ທຳລາຍຊີວິດຍັງຄົງມີຢູ່. ມານໄດ້ທຳລາຍຊີວິດຂອງພວກເຮົາໃນທາງທີ່ແຕກຕ່າງກັນ ແຕ່ເຫັນວ່າຜົນທີ່ໄດ້ຮັບນັ້ນແມ່ນເປັນທຸກໜັກຄືກັນ. ມານເຮັດໃຫ້ຜູ້ເປັນພໍ່ໃຈຮ້າຍ ໄດ້ໃຊ້ຄຳເວົ້າຫຍາບທຳລາຍຈິດໃຈຜູ້ເປັນລູກ ເຮັດໃຫ້ພັຣຍາເປັນທຸກໃຈ. ມານເປັນຕົ້ນເຫດໃຫ້ມີການຂາຍເພດ, ເປັນໂສເພນີ, ຕິດຢາ ແລະຍັງເປັນຜູ້ນຳທີ່ໂຫດຮ້າຍ ສໍ້ຣາດບັງຫລວງແລະອື່ນໆ.

ມານໄດ້ເຮັດວຽກຂອງມັນຢ່າງໜັກ. ອົງພຣະເຢຊູກໍເຮັດພາຣະກິດຫລາຍຄືກັນ. “ຄວາມສວ່າງໄດ້ສ່ອງມາໃນທີ່ມືດ, ແລະຄວາມມືດບໍ່ເຂົ້າໃຈ ຫລືເອົາຊະນະຄວາມສວ່າງບໍ່ໄດ້.” (ໂຢຮັນ 1:5). ຜູ້ປະກາດພຣະທັມເຊຂາຣີຢາ ໄດ້ທຳນວຍໄວ້ວ່າອົງພຣະເຢຊູຈະສະເດັດມາ “ເພື່ອສ່ອງແສງສວ່າງຕໍ່ຜູ້ທີ່ຢູ່ໃນຄວາມມືດແລະຄວາມຕາຍ, ເພື່ອເຍືອງທາງທີ່ຈະເຂົ້າໄປເຖິງສັນຕິສຸກໄດ້” (ລູກາ 1:79).

ຖ້າທ່ານໄດ້ພົບກັບການເປັນທຸກຍ້ອນອຳນາດຂອງມານ ໃຫ້ເຂົ້າໃຈວ່າອົງພຣະເຢຊູໄດ້ສິ້ນພຣະຊົນເພື່ອທຳລາຍອຳນາດຂອງມານ "ເພື່ອໂດຍທາງຄວາມຕາຍນັ້ນ ພຣະອົງຈະໄດ້ຊົງທຳລາຍຜູ້ທີ່ມີອຳນາດແຫ່ງຄວາມຕາຍຄື ພຍາມານ" (ເຮັບເຣີ 2:14). ດຽວນີ້ແສງສວ່າງໄດ້ເຂົ້າມາແລ້ວ ແລະຄວາມມືດຈະມີຊັຍຊະນະບໍ່ໄດ້ເດັດຂາດ. ອົງພຣະເຢຊູກຳລັງນຳຈິດໃຈຂອງມະນຸດໃຫ້ໄປເຖິງທາງແຫ່ງສັນຕິສຸກ.

## 3. <u>ປະສົບກັບການປົດປ່ອຍອອກຈາກຄວາມມືດ</u>: ( ມາຣະໂກ 5:6-20 )

ພວກເຮົາຕ້ອງບໍ່ໃຫ້ຄະແນນແກ່ມານທີ່ມັນໄດ້ສິງຊາຍຄົນນັ້ນ; ມັນຮູ້ຈັກພລັງແລະຣິດອຳນາດໃຫຍ່ເມື່ອມັນພົບກັບອົງພຣະເຢຊູ ມັນບໍ່ໄດ້ນະມັສການແຕ່ເຫັນວ່າຍອມຕໍ່ພຣະອົງ, ຄົນທີ່ມີຜີສິງນັ້ນໄດ້ກົ້ມຄຸເຂົ່າລົງຕໍ່ພຣະພັກຂອງອົງພຣະເຢຊູ (5:6). ພຣະອົງໄດ້ສັ່ງໃຫ້ມັນອອກຈາກຊາຍຄົນນັ້ນ. ມັນໄດ້ກ່າວອອກປາກໂດຍທາງຊາຍຄົນນັ້ນ, ຊຶ່ງບອກເຖິງພລັງແລະໜ້າທີ່ຂອງອົງພຣະເຢຊູວ່າ: “ ເຢຊູບຸດຂອງພຣະເຈົ້າອົງສູງສຸດເອີຍ, ທ່ານມາຫຍຸ້ງກ່ຽວກັບເຮົາດ້ວຍເຫດໃດ ຂໍໃຫ້ທ່ານສາບານໃນພຣະນາມຂອງພຣະເຈົ້າວ່າຈະບໍ່ທໍຣະມານເຮົາ” (5:7).

ອົງພຣະເຢຊູຮູ້ທຸກຢ່າງ ພຣະອົງໄດ້ຖາມເພື່ອໃຫ້ມັນອອກຈາກປາກມັນເອງວ່າມັນເປັນໃຜ. ການທີ່ມັນບອກນັ້ນເປັນສິ່ງທີ່ໜ້າຢ້ານຫລາຍ ແລະເຮັດໃຫ້ຄົນສັບສົນວຸ້ນວາຍຕໍ່ຄົນທີ່ບໍ່ຮູ້ຈັກອຳນາດແຫ່ງຄວາມມືດທີ່ກຳລັງເຮັດກິຈການຂອງມັນຖ້າມກາງພວກເຂົາ. ມັນບອກວ່າ “ເຮົາຊື່ກອງທັບ ເພາະເຮົາມີຫລາຍຕົວນຳກັນ” (5:9). ແຕ່ປານນັ້ນມານທັງໝົດໄດ້ຍອມຕໍ່ພລັງແລະຣິດອຳນາດຂອງອົງພຣະເຢຊູ.

ມານໄດ້ທູນຂໍຕໍ່ພຣະເຢຊູບໍ່ໃຫ້ສົ່ງມັນໄປໄກຈາກຝູງຄົນ (5:10). ໃນເມື່ອມັນເຫັນທາງອອກ ມານໄດ້ທູນຂໍກັບອົງພຣະເຢຊູເພື່ອອະນຸຍາດໃຫ້ມັນໄປເຂົ້າໃນຝູງໝູປະມານ 2000 ຕົວທີ່ກຳລັງກິນອາຫານຢູ່ແຄມຮ່ອມພູ (5:11-12). ອົງພຣະເຢຊູໄດ້ອະນຸຍາດໃຫ້ມານ ພວກມັນຈຶ່ງເຂົ້າສິງພວກໝູ ແລະໝູເຫລົ່ານັ້ນໄດ້ພາກັນແລ່ນຕົກລົງຕາມຕາຝັ່ງລົງໄປໃນທະເລຕາຍໝົດ (5:13).

ພວກເຮົາອາດເຂົ້າໃຈດີວ່າເປັນດ້ວຍເຫດໃດມານມັນບໍ່ຢາກອອກຈາກຖິ່ນນັ້ນ ແລະ ພວກເຮົາອາດຈະມີຄຳຖາມວ່າເປັນດ້ວຍເຫດໃດອົງພຣະເຢຊູໄດ້ອະນຸຍາດໃຫ້ມານໄປເຂົ້າສິງຝູງໝູ ເຮັດໃຫ້ໝູຕາຍເປັນຈຳນວນຫລາຍ. ແຕ່ໃຫ້ພວກເຮົາເບິ່ງຜົນດີທີ່ຊາຍຄົນນັ້ນໄດ້ຮັບຈົນເວົ້າບໍ່ໄດ້. ເປັນຄວາມຈິງອົງພຣະເຢຊູໄດ້ຊ່ອຍຊາຍຄົນຖືກຜີເຂົ້າເພື່ອນຳເອົາການປ່ຽນແປງເກີດຂຶ້ນໃນຊີວິດຄືລາວບັງຄັບຕົນເອງໄດ້: "ເມື່ອເຂົາມາເຖິງພຣະເຢຊູກໍເຫັນຄົນທີ່ຜີທັງກອງທັບສິງຢູ່ນັ້ນນຸ່ງເສື້ອຜ້າແລະມີສະຕິອາລົມດີ ເຂົາຈຶ່ງມີໃຈຢ້ານ." (5:15)

ອົງພຣະເຢຊູໄດ້ກຽດແລະສັກສີເພາະຊາຍຄົນນັ້ນນຸ່ງເຄື່ອງດີ. ເສຣີພາບທີ່ອົງພຣະເຢຊູມອບໃຫ້ແກ່ຊາຍຄົນນັ້ນຄື "ມີສະຕິອາລົມດີ" (5:15)

ອົງພຣະເຢຊູຍັງໄດ້ປ່ຽນຈຸດປະສົງຂອງຊາຍນັ້ນຄືລາວໄດ້ປະປ່າຊ້າ ແລະຢາກຕິດຕາມອົງພຣະເຢຊູໄປ. ແຕ່ພຣະເຢຊູເຮັດໃຫ້ລາວເປັນຜູ້ປະກາດຂ່າວປະເສີດທີ່ບ້ານເມືອງຂອງລາວ ອົງພຣະເຢຊູໄດ້ສັ່ງລາວໂດຍສະເພາະວ່າ. "ໃຫ້ເຈົ້າເມືອບ້ານຫາຍາດພີ່ນ້ອງ ແລ້ວບອກເຂົາເຖິງເຣື່ອງເຫດການອັນໃຫຍ່ຊຶ່ງພຣະເຈົ້າໄດ້ຊົງໂຜດແກ່ເຈົ້າ ແລະຊົງພຣະເມດຕາແກ່ເຈົ້າແລ້ວ." (5:19). ເພື່ອນບ້ານແລະຄົນໃນຄອບຄົວທີ່ເຄີຍເຫັນຊາຍຄົນນັ້ນເປັນທຸກທີ່ມານໄດ້ທໍຣະມານລາວ ເພື່ອພວກເຂົາຈະໄດ້ເຫັນແລະຮູ້ຈັກພຣະຄຸນທີ່ອົງພຣະເຢຊູໄດ້ປົດປ່ອຍຊາຍຄົນນັ້ນອອກຈາກອຳນາດຂອງຄວາມມືດ.

ມີໃຜເຄີຍເຫັນທ່ານເວລາທ່ານຕົກຕ່ຳບໍ່? ທ່ານເຄີຍບອກເຖິງສິ່ງທີ່ອົງພຣະເຢຊູໄດ້ເຮັດເພື່ອທ່ານໃຫ້ຄົນພວກນັ້ນຟັງບໍ? ຈົ່ງອະທິຖານ ເພື່ອທ່ານຈະສາມາດບອກເຖິງສິ່ງອົງພຣະເຢຊູໄດ້ປ່ຽນສະພາບຂອງທ່ານ. ເມື່ອທ່ານເຮັດຢ່າງນັ້ນຕໍ່ຄົນອື່ນ ພວກເຂົາຈະເຫັນການອັສຈັນທີ່ເກີດຂຶ້ນໃນຊີວິດຂອງທ່ານເໝືອນກັບຊີວິດຂອງຊາຍທີ່ຖືກຜີສິງຄົນນັ້ນ.

## ເຣື່ອງນີ້ມີຄວາມໝາຍຫຍັງໃນທຸກວັນນີ້?

ອົງພຣະເຢຊູໄດ້ພົບກັບຊາຍທີ່ມີຜີສິງ ໄດ້ຊີ້ໃຫ້ເຫັນວ່າອຳນາດແຫ່ງຄວາມມືດຍັງມີຢູ່ແລະເປັນຄວາມຈິງ. ມານສາມາດທຳລາຍຮ່າງກາຍ, ສມອງ, ຄວາມຮູ້ສຶກ ແລະຄວາມເຊື່ອໄດ້. ພລັງອຳນາດຢ່າງນີ້ສາມາດເຮັດໃຫ້ຊີວິດຂອງເຮົາເປັນທຸກ.

ອົງພຣະເຢຊູໄດ້ບອກເຖິງອຳນາດຂອງມານ ແລະພຣະອົງຍັງບອກເຖິງສິ່ງທີ່ພຣະອົງເຮັດເພື່ອບອກພວກເຮົາວ່າ ພຣະອົງເທົ່ານັ້ນສາມາດປົດປ່ອຍພວກເຮົາອອກຈາກອຳນາດແຫ່ງຄວາມມືດໄດ້. ພວກນັກທັມປະຕິເສດທີ່ຈະຮັບເອົາການປົດປ່ອຍຈາກອົງພຣະເຢຊູ ພວກເຂົາຈຶ່ງຍັງຢູ່ໃຕ້ອຳນາດແຫ່ງຄວາມມືດ. ຄົນທີ່ຖືກຜີສິງປະສົບກັບການປົດປ່ອຍດ້ວຍອຳນາດຂອງອົງພຣະເຢຊູ. ທຸກວັນນີ້ອົງພຣະເຢຊູຍັງປົດປ່ອຍຜູ້ທີ່ຍອມໃຫ້ພຣະອົງຊ່ອຍຢູ່.

**<u>ຄຳຖາມ</u>**

1. ທ່ານເຄີຍເຫັນອຳນາດຂອງມານກັບຄົນທີ່ເຮັດວຽກກັບທ່ານບໍ່?
2. ມີອັນໃດບໍ່ທີ່ເຫັນຄົນມີອຳນາດເຮັດ ແຕ່ໃນທີ່ສຸດເຮັດໃຫ້ພວກເຂົາເປັນທຸກ?
3. ຖ້າອົງພຣະເຢຊູຈະສົ່ງທ່ານໄປເປັນຜູ້ປະກາດຂ່າວປະເສີດຕໍ່ຄົນທີ່ຮູ້ຈັກທ່ານດີ ບ່ອນໃດທີ່ພຣະເຢຊູຈະສົ່ງທ່ານໄປ?
4. ທ່ານເຄີຍເຫັນສິ່ງທີ່ອົງພຣະເຢຊູເຮັດໃນຊີວິດຂອງຄົນໃດຄົນນຶ່ງຊຶ່ງເຮັດໃຫ້ທ່ານແປກປລາດໃຈບໍ່?

*ສບ. ບຸນຈັນ ວົງສຸຣິດທຣ໌*

# ບົດຮຽນທີ 5
## <u>ປະຕິເສດ ແລະການຕອບສນອງ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ມາຣະໂກ 6:1-13
**<u>ພູມຫລັງຂອງພຣະຄັມພີ:</u>** ມາຣະໂກ 6:1-13
**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ຄົນໃນບ້ານເມືອງປະຕິ ແລະອົງພເສດພຣະເຢຊູໄດ້ສົ່ງພວກສາວົກອອກໄປເພື່ອເປັນການຕອບສນອງ.
**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ທ່ານມີປະຕິກິຣິຍາຢ່າງໃດທີ່ເປັນເຫດໃຫ້ພຣະເຈົ້າບໍ່ສາມາດເຮັດກິຈການຜ່ານທາງຊີວິດຂອງທ່ານ?
**<u>ຈຸດປະສົງຂອງບົດຮຽນ:</u>** ເພື່ອສຳຣວດປະຕິກິຣິຍາຂອງຂ້າພະເຈົ້າເຖິງເຣື່ອງຂອງພຣະເຈົ້າ ແລະຕັດສິນໃຈເຊື່ອຟັງພຣະອົງ.

### ບົດນຳ

ຄວາມຫວັງຂອງໄທນາຊາເຣັດໃນອົງພຣະເຢຊູມີໜ້ອຍຈຶ່ງເປັນເຫດໃຫ້ພຣະອົງບໍ່ສາມາດເຮັດການອັສຈັນຕໍ່ພວກເຂົາ. ໃຫ້ພວກເຮົາພາກັນຮຽນບົດຮຽນຈາກຄວາມຜິດຂອງພວກເຂົາ ເພື່ອເຮົາຈະບໍ່ໄດ້ເຮັດຜິດຄືເຂົາ. ເຊື່ອວ່າພຣະເຈົ້າຮັກສາພຣະສັນຍາຂອງພຣະອົງ ແລະຕິດຕາມພຣະອົງດ້ວຍຄວາມເຊື່ອເຖິງຈະມີອຸປະສັກອັນໃດກໍຕາມໃນຊີວິດ.

ປ້າຂອງຂ້າພະເຈົ້າບໍ່ຢາກໃຫ້ຂ້າພະເຈົ້າໃຫຍ່ຂຶ້ນທຸກປີ ເວລາໄປຢາມປ້າເພິ່ນຈ້ອງຕາເບິ່ງແລະເວົ້າວ່າ, "ເຫື່ອແລ້ວປ້າເຫັນເຈົ້າສູງພຽງກົກຂາ." ໃນຄວາມຄິດຂອງປ້າຍັງຄິດວ່າຂ້າພະເຈົ້າຍັງເປັນເດັກນ້ອຍຜູ້ທີ່ເພິ່ນເຄີຍອ່ານປຶ້ມໃຫ້ຟັງ ປ້າຂ້າພະເຈົ້າມີຄວາມຄິດເກົ່າໆທີ່ປ່ຽນໄດ້ຍາກ.

ອົງພຣະເຢຊູໄດ້ເຫັນຄົນເປັນເໝືອນປ້າຂອງຂ້າພະເຈົ້າ ຄົນຢູ່ໃນບ້ານເມືອງຂອງພຣະເຢຊູມີຄວາມເຂົ້າໃຈຜິດເຖິງເຣື່ອງພຣະອົງ. ພວກເຂົາໄດ້ຕອບສນອງຕໍ່ອົງພຣະເຢຊູຕື້ນໆແລະລັງກຽດ ເພາະພວກເຂົາຮູ້ຈັກເບື້ອງຫລັງວ່າພຣະອົງມາຈາກຄອບຄົວຢ່າງໃດ ຈຶ່ງເປັນເຫດໃຫ້ໄທເມືອງນາຊາເຣັດຂາດພຣະພອນ. ເຊັ່ນກັນຖ້າພວກເຮົາເອົາອົງພຣະເຢຊູມາທຽບກັບຄວາມນຶກຄິດຂອງພວກເຮົາ ພວກເຮົາກໍບໍ່ມີຄວາມເຊື່ອເຕັມ ແລະຈະຂາດພຣະພອນອີກດ້ວຍ.

### 1. <u>ບໍ່ມີບ່ອນໃດດີກວ່າບ້ານເຮືອນ</u>: ( ມາຣະໂກ 6:1-6 )

ຫລັງຈາກໄດ້ປົວຍິງເລືອດຕົກເພາະນາງໄດ້ຈັບແຄມເຄື່ອງຊັ້ນນອກຂອງພຣະອົງ ແລະໄດ້ເຮັດໃຫ້ລູກສາວຢາອີໂຣຄືນມາຈາກຕາຍເພາະນາຍທະຫານໄດ້ເຊື່ອ (ມາຣະໂກ 5:22-43), ອົງພຣະເຢຊູໄດ້ເດີນທາງກັບບ້ານໂດຍຜ່ານທາງພາກໃຕ້ຂອງທິດຕາເວັນຕົກຈາກທະເລຄາລີເລ ໄປຍັງເມືອງນາຊາເຣັດ. ຊື່ສຽງທີ່ອົງ

ພຣະເຢຊູໄດ້ທຳການອັສຈັນໄດ້ແຜ່ຂະຍາຍຢ່າງວອງໄວ ມີຄົນມາພົບພຣະອົງຢ່າງມາກມາຍ. ຕ້ອງເຂົ້າໃຈວ່າອົງພຣະເຢຊູທຳການອັສຈັນກໍເພາະມີຄົນທີ່ເຊື່ອ, ເຫັນວ່າມາຣະໂກບົດ 6 ໄດ້ກ່າວເຖິງສິ່ງກົງກັນຂ້າມເພາະຄົນໃນບ້ານເມືອງຂອງພຣະອົງຂາດຄວາມເຊື່ອ.

ພວກສາວົກຮູ້ວ່າອົງພຣະເຢຊູເປັນພຣະອາຈານຂອງພວກເພິ່ນເວລາພຣະອົງສະເດັດເຂົ້າໄປຍັງເມືອງນາຊາເຣັດ (6:1). ສ່ວນໄທບ້ານໃນເມືອງນີ້ເຫັນວ່າລູກຊາຍຄົນນຶ່ງຂອງຄົນໃນບ້ານກັບຄືນມາບ້ານເທົ່ານັ້ນ. ພວກເຂົາເຫັນວ່າພຣະເຢຊູເປັນພຽງລູກຂອງໂຢເຊັບຊ່າງໄມ້ ແລະນາງມາຣີອາເປັນແມ່ ບໍ່ມີຫຍັງເປັນສິ່ງພິເສດແລະແຕກຕ່າງ.

ຕາມທຳນຽມຖ້າມີອາຈານເຂົ້າມາໃນບ້ານ ພວກຜູ້ນຳໃນທັມມະສາລາ ຈະອະນຸຍາດໃຫ້ອາຈານຄົນນັ້ນສອນກົດບົດຍັດຂອງຜູ້ປະກາດພຣະທັມໃນວັນຊະບາໂຕ. ສ່ວນຄົນທີ່ຕິດຕາມອົງພຣະເຢຊູມາ ແລະພວກສາວົກຮູ້ແນ່ວ່າພຣະເຢຊູເປັນພຣະອາຈານແທ້ ແຕ່ສ່ວນຄົນໃນບ້ານເມືອງຂອງພຣະອົງຖືວ່າພຣະອົງເປັນພຽງຄົນບໍ່ມີຄຸນສົມບັດທີ່ຈະເປັນອາຈານເພາະພວກເຂົາຮູ້ຈັກປະວັດເບື້ອງຫລັງຂອງອົງພຣະເຢຊູດີ. ແມ່ນແຕ່ຄົນໃນຄອບຄົວຂອງພຣະອົງກໍຍັງມີຄຳຖາມວ່າພຣະເຢຊູມີສະຕິດີຫລືບໍ່ (3:21). ແນວໃດກໍຕາມເວລາມີໂອກາດ ພຣະເຢຊູກໍເລີ້ມສິດສອນ (6:2). ຊຶ່ງອາດເປັນຄັ້ງທຳອິດທີ່ຊາວເມືອງນາຊາເຣັດໄດ້ຍິນຄຳເທສນາທີ່ດີທີ່ສຸດ ເພາະພວກເຂົາແປກປລາດໃຈຫລາຍ.

ເຖິງແມ່ນໄທບ້ານເມືອງນາຊາເຣັດມີຄວາມຄິດແບບຜິດໆ ຕໍ່ອົງພຣະເຢຊູ ແຕ່ເມື່ອພວກເຂົາໄດ້ຍິນໄດ້ຟັງແລ້ວກໍເຫັນວ່າເກີດຄວາມເຂົ້າໃຈດີ ພວກເຂົາແປກປລາດໃຈ ແລະຄວາມສົງສັຍໃນພຣະເຢຊູນັ້ນກໍເລີ້ມຫລຸດໜ້ອຍຖອຍລົງຢ່າງວອງໄວ ຈຶ່ງເວົ້າວ່າ “ຄົນນີ້ໄດ້ສິ່ງເຫລົ່ານີ້ມາແຕ່ໃສ?” ພວກເຂົາພາກັນຖາມກັນວ່າ “ສະຕິປັນຍາປະທານແກ່ຄົນຢ່າງນີ້ແມ່ນປັນຍາຢ່າງໃດ?” (6:2).

ຄຳຖາມຢ່າງນີ້ບໍ່ແມ່ນຖາມເພື່ອຢາກຮູ້ ແຕ່ພວກເຂົາຢາກຈັບເອົາຄວາມຜິດ ຄົນທີ່ພວກເຂົາຄິດວ່າຮູ້ຈັກເບື້ອງຫລັງລາວດີຈະມີປັນຍາຢ່າງນີ້ໄດ້ແນວໃດ? ເມື່ອເປັນດັ່ງນີ້ ຈຶ່ງບໍ່ມີການອັສຈັນຈັກຢ່າງທີ່ອົງພຣະເຢຊູໄດ້ເຮັດໃນເມືອງ ນາຊາເຣັດ, ແຕ່ພວກເຂົາໄດ້ຍິນຂ່າວວ່າອົງພຣະເຢຊູໄດ້ເຮັດຢູ່ທີ່ອື່ນທາງພາກເໜືອ. ເປັນໜ້າເສັຽດາຍໄທບ້ານຂອງພຣະອົງມີແຕ່ມົວເມົາກັບຄວາມສົງສັຍແລະດູຖູກ ວ່າພຣະເຢຊູເປັນພຽງລູກຊ່າງໄມ້ ພວກເຂົາຈິ່ງຜິດພາດບໍ່ເຫັນການອັສຈັນໃດໆທັງສິ້ນ. ໄທເມືອງນາຊາເຣັດເອີ້ນອົງພຣະເຢຊູວ່າເປັນລູກຊາຍຂອງມາຣີອາ ພວກເຂົາອາດຄຶດວ່າພຣະເຢຊູເປັນລູກນານທາງ ພວກເຂົາຍັງບໍ່ຮູ້ອີກວ່າອົງພຣະເຢຊູມີນ້ອງຊາຍແລະນ້ອງສາວແຕ່ເປັນລູກຄົນລະພໍ່. ພວກເຂົາປະຕິເສດບໍ່ຍອມຮັບວ່າອົງພຣະເຢຊູເປັນອົງພຣະເມຊີອາທີ່ພວກເຂົາລໍຄອຍ. ພວກເຂົາບໍ່ເຊື່ອວ່າສິ່ງດີໆຈະມາຈາກບ້ານເມືອງຂອງຕົນເອງ (ໂຢຮັນ 1:46). ອົງພຣະເຢຊູຮູ້ຈັກຈິດໃຈຂອງໄທບ້ານຂອງພຣະອົງດີ ແລະພຣະອົງໄດ້ກ່າວຕໍ່ພວກເຂົາເປັນສຸພາສິດໃນຂໍ້ (6:4). ເຖິງແມ່ນຄົນໃນຄອບຄົວຂອງພຣະອົງກໍປະຕິເສດພຣະອົງຊົ່ວລະຍະນຶ່ງ (ໂຢຮັນ 7:5).

ຍ້ອນໄທເມືອງນາຊາເຣັດຂາດຄວາມເຊື່ອຈຶ່ງເຮັດໃຫ້ອົງພຣະເຢຊູຮັບໃຊ້ໄດ້ຜົນໜ້ອຍ. ອົງພຣະເຢຊູບໍ່ເຮັດການອັສຈັນເພື່ອໃຫ້ຄົນຈັບໃຈ ແຕ່ພຣະອົງຖວາຍຕົວເຊື່ອຟັງພຣະບິດາຜູ້ຢູ່ຟ້າສວັນ (ໂຢຮັນ 8:28; 14:3). ໂຢຮັນ 10:38 ໄດ້ເວົ້າຢ່າງແຈ່ມແຈ້ງວ່າ, “ເຖິງແມ່ນວ່າທ່ານບໍ່ເຊື່ອເຮົາກໍຈົ່ງເຊື່ອພຣະຣາຊກິດນັ້ນເພື່ອພວກທ່ານຈະໄດ້ຮູ້ແລະເຂົ້າໃຈວ່າ ພຣະບິດາຊົງຢູ່ໃນເຮົາ ແລະເຮົາຊົງຢູ່ໃນພຣະບິດາ.”

ຖ້າວ່າຄົນຜູ້ທີ່ໄດ້ເຫັນອົງພຣະເຢຊູເຕີບໃຫຍ່ຂຶ້ນ ແລະຍັງບໍ່ຍອມຮັບວ່າພຣະອົງເປັນພຣະອາຈານ ຫລືຜູ້ປະກາດພຣະທັມ, ມີຄຳຖາມວ່າ ເຮັດແນວໃດພວກເຂົາຈະຮັບວ່າພຣະອົງເປັນພຣະບຸດຂອງພຣະເຈົ້າ? ໃນປຶ້ມມາຣະໂກໄທບ້ານເມືອງຂອງພຣະອົງແປກໃຈຕໍ່ອົງພຣະເຢຊູ, ແລະອົງພຣະເຢຊູກໍແປກໃຈທີ່ພວກເຂົາຂາດຄວາມເຊື່ອ. ດັ່ງນັ້ນ, ພຣະອົງຈຶ່ງໜີໄປສອນທີ່ອື່ນ (6:5-6). ແລະພວກເຮົາບໍ່ແນ່ໃຈວ່າພຣະເຢຊູໄດ້ກັບຄືນໄປຍັງບ້ານເມືອງຂອງພຣະອົງຫລືບໍ່?

## 2. <u>ຢ່າຫວັງວ່າມັນງ່າຍ</u>: ( ມາຣະໂກ 6:7-13 )

ອົງພຣະເຢຊູໄດ້ເອີ້ນສາວົກສິບສອງຄົນໃຫ້ "ຕິດຕາມ" (ມຣກ 1:17, 2:14), ດ້ວຍຄວາມເຊື່ອຟັງພວກເຂົາໄດ້ຕິດຕາມບ່ອນທີ່ພຣະອົງພາໄປ, ໄດ້ຮຽນຮູ້, ໄດ້ເຫັນການກະທຳຂອງພຣະເຢຊູ ແລະພວກເຂົາກໍຢາກເປັນເໝືອນພຣະອົງ. ຕາມພຣະປັນຍາຂອງພຣະອົງແລ້ວ ພຣະເຢຊູໄດ້ເຮັດໃຫ້ພວກສາວົກເຫັນຄົນໃນບ້ານເມືອງຂອງພຣະອົງປະຕິເສດແທ້ ເພາະພຣະອົງຈັດຕຽມພວກເຂົາໃຫ້ຮູ້ກ່ອນວ່າ ພວກເຂົາຈະມີຄົນປະຕິເສດຄືກັນເວລາພຣະອົງສົ່ງພວກເຂົາອອກໄປເທສນາແລະຂັບໄລ່ຜີຮ້າຍ. (ມຣກ 3:14-15).

ເຮັດຕາມທຳນຽມພວກຢິວເວລາອອກໄປປະກາດ ພວກສາວົກໄດ້ອອກໄປເປັນຄູ່ (6:7) ຍ້ອນເຫດຜົນສາມຢ່າງ: 1. ເພື່ອໃຫ້ຄຳພະຍານເຣື່ອງອົງພຣະເຢຊູເປັນຄວາມຈິງແທ້; 2. ເພື່ອເຮັດໃຫ້ການອວດຕົວໜ້ອຍລົງວ່າຕົນເອງເຮັດໄດ້ຄົນດຽວ. 3. ເພື່ອຄວາມປອດພັຍ ແລະເພື່ອໜູນໃຈກັນແລະກັນ.

ເປັນໜ້າແປກທີ່ອົງພຣະເຢຊູບໍ່ໄດ້ບອກເຣື່ອງເທສນາ ຫລືເຮັດອັນນຶ່ງອັນໃດ, ແຕ່ພຣະອົງບອກພວກເຂົາບໍ່ໃຫ້ເອົາສິ່ງຂອງໄປນຳ (6:8-9). ໃຫ້ພວກເຂົາເພິ່ງພຣະເຈົ້າດົນໃຈໃຫ້ເຈົ້າຂອງບ້ານເປັນຄົນໃຫ້ຄວາມອົບອຸ່ນທາງດ້ານຮ່າງກາຍ. ພວກເຂົາຈະບໍ່ອຶດຫິວໃຫ້ເຊື່ອວ່າພຣະເຈົ້າຈະເປັນຜູ້ຊ່ອຍ. ພຣະເຢຊູບໍ່ພຽງແຕ່ບອກບໍ່ໃຫ້ເອົາເຄື່ອງນຸ່ງ ອາຫານການກິນໃສ່ຖົງໄປ, ແຕ່ພຣະອົງຫ້າມບໍ່ໃຫ້ເອົາເງິນໄປນຳອີກ. ພຣະອົງບອກໃຫ້ເອົາເກີບແຕະ ແລະໄມ້ເທົ້າ ເພື່ອຮອງຕີນ ແລະໄມ້ເທົ້າເພື່ອນຳທາງ. ຈຸດປະສົງຂອງອົງພຣະເຢຊູແລ້ວແມ່ນບໍ່ຢາກໃຫ້ພວກສາວົກຮັບໃຊ້ຢ່າງໂອ້ໂຖງ. ການທີ່ບອກບໍ່ໃຫ້ເອົາຫຍັງໄປນຳກໍເພາະງານທີ່ພຣະອົງບອກໃຫ້ເຮັດນັ້ນສຳຄັນແລະສຸກເສີນ; ຖ້າມີຫລາຍຢ່າງກໍອາດເຮັດໃຫ້ການເດີນທາງນັ້ນຊ້າລົງ.

ເມື່ອພວກເຮົາສະສົມສິ່ງຂອງໄວ້ຫລາຍ ພວກເຮົາອາດຄຶດວ່າຕົນເອງມີທຸກສິ່ງແລ້ວແລະກໍບໍ່ຢາກເພິ່ງພາອາສັຍພຣະເຈົ້າ. ສິ່ງຂອງອາດເປັນສິ່ງກີດກັ້ນບໍ່ໃຫ້ເພິ່ງພຣະເຈົ້າ ແລະອາດເຮັດໃຫ້ເປັນກຳແພງບໍ່ໃຫ້ເຊື່ອຟັງພຣະເຈົ້າ. ອົງພຣະເຢຊູໄດ້ສັ່ງສອນພວກສາວົກດ້ວຍຄວາມສັດຊື່ເພາະພຣະອົງຮູ້ດີວ່າວັນນຶ່ງພວກເຂົາຈະໄດ້ຖືກປະຕິເສດເໝືອນພຣະອົງຖືກມາແລ້ວໃນເມືອງນາຊາເຣັດ. ເມື່ອພວກເຂົາໄດ້ຖືກປະຕິເສດເຊັ່ນນີ້ໃຫ້ພວກເຂົາສັ່ນຂີ້ຝຸ່ນຕີນອອກ (6:11). ປະເພນີອັນນີ້ພວກຢິວໄດ້ປະຕິບັດກ່ອນເຂົ້າໄປໃນດິນແດນບໍຣິສຸດ ເພາະຢ້ານຂີ້ຝຸ່ນຈະເຮັດໃຫ້ແຜ່ນດິນພຣະສັນຍາເປິເປື້ອນ ຊຶ່ງມີຄວາມໝາຍວ່າບໍ່ໃຫ້ເສັຽເວລາກັບຄົນຢ່າງນີ້ ແລະບອກວ່າພວກປະຕິດເສດຈະຂາດຈາກພຣະຣາຊແຜ່ນດິນຂອງພຣະເຈົ້າ.

ພວກສາວົກໄດ້ເຮັດຕາມອົງພຣະເຢຊູສັ່ງຄື: ຮັບໃຊ້, ເທສນາ (6:12) ໄລ່ຜີອອກ, ປົວພະຍາດຮ້າຍແລະກໍເອົານ້ຳມັນທາຊຶ່ງມີຄວາມໝາຍເຖິງການສະຖິດຢູ່ນຳຂອງພຣະເຈົ້າ (6:13). ມີບ່ອນດຽວໃນປຶ້ມມາຣະໂກ 6:30 ໝາຍຄວາມວ່າມາຣະໂກບໍ່ຕ້ອງການບອກສະຖານທີ່ ແຕ່ແມ່ນຜົນງານ ເພື່ອຈະມອບໄວ້ໃນພຣະຫັດຂອງພຣະເຈົ້າໃນເວລາຂັດສົນແລະເວລາຍາກລຳບາກ.

## ເລື່ອງນີ້ມີຄວາມໝາຍຫຍັງໃນທຸກວັນນີ້?

ປື້ມມາຣະໂກໄດ້ເນັ້ນໃສ່ຄວາມສຳຄັນຂອງຄວາມເຊື່ອ. ການທີ່ໄທເມືອງນາຊາເຣັດໄດ້ຂາດຄວາມເຊື່ອ ເພາະພວກເຂົາບໍ່ເຂົ້າໃຈຕໍ່ພຣະກຳເນີດຂອງອົງພຣະເຢຊູ ຈຶ່ງເປັນເຫດໃຫ້ພຣະອົງມີຂອບເຂດໃນການທຳການອັສຈັນຫລາຍປະການ. ຄວາມເຊື່ອແມ່ນສິ່ງທີ່ພົວພັນເພື່ອສ້າງຄວາມສັມພັນກັບອົງພຣະເຢຊູ ແລະຄວາມເຊື່ອບໍ່ແມ່ນຜົນຂອງການອັສຈັນ ແຕ່ເປັນສິ່ງກົງກັນຂ້າມ. ມັນເປັນການຕັດສິນໃຈສ່ວນຕົວຊຶ່ງອີງຕາມການຊັນນະສູດເຖິງຄວາມຈິງ. ອົງພຣະເຢຊູບໍ່ຈຳເປັນຈະເຮັດອັສຈັນເພື່ອໃຫ້ຄົນເຊື່ອ; ພຣະອົງຮູ້ຈັກດີເຖິງຄວາມຄິດເກົ່າໆ ຂອງປະຊາຊົນທີ່ເປັນກຳແພງກັ້ນບໍ່ໃຫ້ພວກເຂົາເຊື່ອ ເຖິງແມ່ນພວກເຂົາໄດ້ຍິນຄຳສອນຂອງພຣະອົງຢ່າງມີອຳນາດ. ຖ້າໄທເມືອງນາຊາເຣັດເປີດແນວຄິດຈິດໃຈອອກ, ເອົາຄວາມຄິດໃໝ່ເຂົ້າມາ ພວກເຂົາອາດຈະໄດ້ເຫັນສິ່ງອັສຈັນໃຫຍ່ທີ່ພຣະເຈົ້າກະທຳຜ່ານທາງອົງພຣະເຢຊູ ຜູ້ເປັນໄທບ້ານຂອງພວກເຂົາ.

ການເຊື່ອຟັງນັ້ນຕ້ອງອາສັຍຄວາມເຊື່ອ. ການທີ່ມີຄວາມຄິດເກົ່າໆເຖິງເຣື່ອງພຣະເຈົ້ານັ້ນເຮັດໃຫ້ຕິດຕາມຄຳສອນຂອງພຣະອົງໄດ້ຍາກ. ມີພຣະພອນຫລາຍຢ່າງທີ່ພວກເຮົາບໍ່ໄດ້ຮັບເພາະຂາດການເຊື່ອຟັງ. ບາງຄັ້ງເພື່ອຢາກປະຕິບັດດ້ວຍການເຊື່ອຟັງແລ້ວພວກເຮົາອາດມີຊີວິດຢູ່ແບບງ່າຍໆ ເພາະອົງພຣະເຢຊູຮູ້ວ່າມະນຸດມັກຜູກພັນກັບສິ່ງຂອງໃນໂລກນີ້ຫລາຍ. ອົງພຣະເຢຊູສອນພວກສາວົກແລະພວກເຮົາບໍ່ໃຫ້ເອົາສິ່ງຂອງມາເປັນເຊືອກມັດພວກເຮົາບໍ່ໃຫ້ເຮັດຕາມຄຳສອນຂອງພຣະເຈົ້າ. ວັນນຶ່ງພວກສາວົກແລະພວກເຮົາອາດໄດ້ພົບກັບການປະຕິເສດຈາກຄົນອື່ນໆ.

**<u>ຄຳຖາມ</u>**

5. ທ່ານເຄີຍຮູ້ຈັກໃຜບໍ່ທີ່ພວກເຂົາບໍ່ຢາກໃຫ້ທ່ານເປັນຜູ້ໃຫຍ່? ທ່ານຈະຄົບກັບຄົນແນວນັ້ນຢ່າງໃດ?
6. ລູກາບົດ 4:14-30 ໄດ້ບອກພວກເຮົາວ່າອົງພຣະເຢຊູໄດ້ອ່ານປື້ມເອຊາຢາ 61 ເວລາພຣະອົງສັ່ງສອນໃນບ້ານເມືອງຂອງພຣະອົງໃນໂຮງທັມມະເທສນາ. ໃຫ້ສົນທະນາກັນວ່າເປັນດ້ວຍເຫດໃດຄຳສອນນີ້ຈຶ່ງເຮັດໃຫ້ພວກເຂົາໃຈຮ້າຍ?
7. ພວກຄົນໃນເມືອງນາຊາເຣັດສົງສັຍເຖິງເຣື່ອງພຣະກຳເນີດວ່າພຣະອົງເປັນລູກຜິດກົດ ຈຶ່ງເຮັດໃຫ້ພຣະເຢຊູມີຂອບເຂດຈຳກັດໃນການຮັບໃຊ້ໃນເມືອງນີ້ແມ່ນບໍ່?
8. ອົງພຣະເຢຊູເຮັດຫຍັງບໍ່ໄດ້ ແລະເປັນຫຍັງພຣະອົງຈຶ່ງຖືກຈຳກັດອີງຕາມ (ມຣກ 6:5) ທ່ານຄິດວ່າຖ້າຂາດຄວາມເຊື່ອແລ້ວທຸກວັນນີ້ພຣະເຈົ້າບໍ່ສາມາດເຮັດການອັສຈັນໄດ້ແມ່ນບໍ່?
9. ແບ່ງປັນປະສົບການທີ່ທ່ານໄດ້ເຫັນການອັສຈັນທີ່ພຣະເຈົ້າໄດ້ເຮັດເພາະທ່ານໄດ້ເຊື່ອຟັງພຣະເຈົ້າ.
10. ທ່ານເຕັມໃຈບໍ່ທີ່ຈະເພິ່ງພຣະເຈົ້າໃນທຸກດ້ານຂອງຊີວິດ?

*ສບ. ບຸນຈັນ ວົງສຸຣິດທຣ໌*

# ບົດຮຽນທີ 6
## ສິ່ງສານແຕ່ພາຍນອກ ກົງກັບບໍຣິສຸດທາງໃນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມາຣະໂກ 7:1-23

**ພູມຫລັງຂອງພຣະຄັມພີ:** ມາຣະໂກ 7:1-23

**ຈຸດສຳຄັນຂອງບົດຮຽນນີ້:** ອົງພຣະເຢຊູໄດ້ແປເພີ້ມເຖິງຄວາມໝາຍທີ່ຈະກາຍເປັນຄວາມບໍຣິສຸດໄດ້.

**ຄຳຖາມເພື່ອການຄົ້ນຄວ້າ:** ທ່ານໄດ້ຍຶດຖືເອົາທຳນຽມສາສນາທີ່ມະນຸດສ້າງຂຶ້ນຢ່າງໃດ?

**ຈຸດປະສົງຂອງບົດຮຽນ:** ເພື່ອສຳຣວດເບິ່ງວ່າຂ້າພະເຈົ້າໄດ້ມີຄວາມຈົງຮັກພັກດີຕໍ່ທຳນຽມສາສນາທີ່ມະນຸດສ້າງຂຶ້ນ ແລະເພື່ອຈະຍຶດເອົາການເປັນຄົນບໍຣິສຸດຕາມພຣະເຈົ້າສັ່ງສອນ.

### ບົດນຳ

ອົງພຣະເຢຊູໄດ້ທ້າທາຍຕໍ່ພວກຫົວໜ້າສາສນາທີ່ພວກເຂົາໄດ້ເອົາກົດບັນຍັດຂອງມະນຸດມາໃຊ້ເພື່ອຢາກເປັນຄົນບໍຣິສຸດ ພວກເຂົາບໍ່ໄດ້ເຮັດຕາມຄຳສັ່ງຈາກພຣະເຈົ້າ ໃນເມື່ອພວກເຮົາເຮັດດັ່ງນັ້ນກໍເປັນການເປີດເຜີຍໃຫ້ເຫັນຄວາມຜິດບາບ ແລະຮູ້ເຖິງຈິດໃຈຢ່າງມະນຸດ.

ເຮັດຕາມທຳນຽມທີ່ບັງຄັບຫລືຈັບມັດພວກເຮົາເອົາໄວ້. ພວກຟາຣີຊາຍແລະນັກທັມຜູ້ທີ່ອົງພຣະເຢຊູໄດ້ພົບພໍ້ສົນທະນາເປັນປະຈຳ ພວກເຂົາກາຍເປັນຂ້າທາດຂອງທຳນຽມ ເພາະພວກເຂົາຍອມໃຫ້ກົດຈາກທັມນຽມບັງຄັບໃຫ້ເຮັດຕາມຖ້າຢາກເປັນຄົນບໍຣິສຸດ ແທນທີ່ພວກເຂົາຈະໃຫ້ຄວາມ ສັມພັນທີ່ດີກັບພຣະເຈົ້າ ໃຫ້ມີການປະພຶດຖືກຕ້ອງຕາມຄຳສອນຈາກພຣະອົງ.

ອົງພຣະເຢຊູໄດ້ເປີດເຜີຍຄວາມອ່ອນແອຂອງສາສນາທີ່ມະນຸດສ້າງຂຶ້ນເພື່ອຈະກາຍເປັນຄົນບໍຣິສຸດ ສິ່ງນີ້ບໍ່ໄດ້ກົງກັບຄຳສອນຂອງພຣະເຈົ້າ ເປັນໜ້າເສັ່ງດາຍ ພວກເຮົາຫລາຍຄົນກໍບໍ່ສາມາດເບິ່ງຕົນເອງແລະເຫັນຄວາມຜິດພາດໄດ້. ບາງຄັ້ງພວກເຮົາອາດຕົວະຕົນເອງວ່າເຮົາໄດ້ເຮັດຕາມພຣະເຈົ້າ ແຕ່ພວກເຮົາຜິດຕໍ່ພຣະອົງ. ພວກເຮົາອາດເຮັດເໝືອນພວກຟາຣີຊາຍ ເປັນຄົນຖືກສາສນາ ແຕ່ບໍ່ມີຄວາມສັມພັນອັນດີກັບອົງພຣະຜູ້ເປັນເຈົ້າ.

### 1. <u>ມືເປື້ອນ ແລະຄວາມຕັ້ງໃຈເປື້ອນ</u>: ( ມາຣະໂກ 7:1-13 )

ຢູ່ໃນບ່ອນລັບໃນເມືອງຄາລີເລ, ພວກຟາຣີຊາຍແລະພວກນັກທັມໄດ້ເດີນທາງຈາກກຸງເຢຣູຊາເລັມໄປຫາອົງພຣະເຢຊູຜູ້ທີ່ຄົນອິສຣາເອນຮູ້ຈັກດີ ເພື່ອຈະສົນທະນາກັບພຣະອົງ (ມາຣາໂກ 7:1). ໃນກຸ່ມນີ້ອາດມີບາງຄົນສແວງຫາພຣະອົງແທ້ວ່າພຣະເຈົ້າໄດ້ສົ່ງພຣະເຢຊູມາແທ້ຫລືບໍ່ ແຕ່ຄົນສ່ວນຫລາຍໄປພົບພຣະເຢຊູ

ເພື່ອຈະສອດແນມເອົາຄວາມຜິດຍ້ອນພວກເຂົາມີຄວາມອິດສາ. ພວກເຂົາໄດ້ພົບເຫັນສາວົກຂອງອົງພຣະເຢຊູກິນເຂົ້າໂດຍບໍ່ໄດ້ລ້າງມືຈຶ່ງເປັນເລື່ອງທີ່ພວກເຂົາຈັບຜິດ (7:2).

ຄົນສ່ວນຫລາຍທີ່ອ່ານປື້ມມາຣະໂກເປັນຄົນຕ່າງຊາດ ຕາມບົດ 7:3-4 ໄດ້ກ່າວເຖິງພວກຢິວເຮັດຕາມທຳນຽມລ້າງທາງນອກ ອີງຕາມລະບຽບພວກເລວີສັ່ງວ່າ ກ່ອນພວກປະໂຣຫິດຈະເຂົ້າໄປໃນພຣະວິຫານພວກເຂົາຈຳເປັນຕ້ອງລ້າງເພື່ອບໍ່ໃຫ້ມີຄວາມບາບ, ບໍ່ໃກ້ຄົນເຈັບປ່ວຍ ຫລືຄົນຕາຍ (ລລວ 11:25;13:6; 15:11,22; 16:26-28). ຫລາຍສັດຕະວັດມາແລ້ວຄຳສອນຢ່າງນີ້ໄດ້ກາຍເປັນ "ທຳນຽມຂອງພວກເຖົ້າແກ່." ຈະເປັນເຄື່ອງໃຊ້ຕ່າງໆ ຖ້າພວກຕ່າງຊາດຈັບບາຍ ພວກຢິວຈະເອົາໄປໃຊ້ພວກເຂົາຕ້ອງລ້າງກ່ອນ (ມຣກ 7:4)

ຈຸດປະສົງທີ່ມີກົດຢ່າງນີ້ເພື່ອໃຫ້ທຸກຄົນເປັນຄົນບໍຣິສຸດຕາມທຳນຽມ. ດັ່ງນັ້ນ ຄົນໃນສມັຍນັ້ນຈຶ່ງເອົາກົດທຳນຽມມາປະກອບໃຊ້ເພື່ອເຮັດໃຫ້ຕົນເອງເປັນຄົນດີບໍຣິສຸດ. ນັ້ນເປັນຄວາມຫວັງດີ, ຈົນມາເຖິງສັດຕະວັດທີສາມ ຄຳສອນທີ່ເວົ້າໂດຍປາກເປົ່າໄດ້ຖືກຂຽນຂຶ້ນ ແລະຖືວ່າເປັນກົດມາຈາກພຣະເຈົ້າ. ແຕ່ເຫັນວ່າກົດຢ່າງນັ້ນໄດ້ຂັດຕໍ່ຄຳສອນຂອງພຣະເຈົ້າ (ມີກາ 6:6-8; ພສສ 40:6-8; ຮຊຢ 6:4-7).

ເມື່ອພວກຟາຣີຊາຍຢາກເຮັດຕາມປະເພນີຫລືທຳນຽມ ພວກຜູ້ນຳສາສນາເລີຍປະທ້ວງຕໍ່ພຣະເຢຊູວ່າເປັນຫຍັງສາວົກຂອງພຣະອົງກິນເຂົ້າບໍ່ລ້າງມືກ່ອນ (ມຣກ 7:5). ແນ່ນອນພວກເຂົາບໍ່ໄດ້ເປັນຫ່ວງເຣື່ອງພະຍາດ ແຕ່ພວກເຂົາຢາກໃຫ້ພຣະເຢຊູອາຍໃນທີ່ຊຸມຊົນແລະອ້າງວ່າພຣະອົງເປັນຄຣູສອນບໍ່ດີ. ເຫັນວ່າອົງພຣະເຢຊູບໍ່ຫົວຊາຕໍ່ຄຳຕ້ອງຕິນັ້ນ, ແຕ່ພຣະອົງສັ່ງສອນແລະດຳລົງຊີວິດແຕກຕ່າງກັບພວກຜູ້ນຳສາສນາເຊັ່ນ ພຣະອົງໄດ້ໄປຮັບປະທານອາຫານກັບຄົນເກັບພາສີ (2:16), ມີຄຳສອນຕ່າງໆເຖິງເຣື່ອງຖືສິນອົດອາຫານ (2:8-20), ນັບຖືວັນຊະບາໂຕແລະມີເປົ້າໝາຍແຕກຕ່າງ (2:23-28). ດັ່ງນັ້ນ, ພວກຫົວໜ້າສາສນາຈຶ່ງຖືວ່າອົງພຣະເຢຊູເປັນຜູ້ທຳລາຍພວກເຂົາ ເພາະພຣະອົງບອກວ່າພວກເຂົາມີຄວາມສັມພັນກັບພຣະເຈົ້າບໍ່ຖືກຕ້ອງຕາມຄວາມຄິດຂອງພວກເຂົາ.

ອົງພຣະເຢຊູບໍ່ໄດ້ປະຕິເສດເຣື່ອງທີ່ສາວົກໄດ້ເຮັດວ່າເປັນການຜິດ ພຣະເຢຊູໄດ້ຕອບພວກຫາເຣື່ອງໃນບົດ 7::6-8. ພວກຫົວໜ້າສາສນາໄດ້ຕິຕຽນເຣື່ອງນອກກາຍ ແຕ່ອົງພຣະເຢຊູໄດ້ໃຫ້ເບິ່ງທາງໃນ. ຕາມຜູ້ປະກາດພຣະທັມເອຊາຢາ 29:13, ພຣະອົງໄດ້ບອກວ່າຖ້າຈິດໃຈບໍ່ຍອມຕໍ່ພຣະເຈົ້າ ພຣະອົງບອກວ່າຄົນນັ້ນເປັນຄົນໜ້າຊື່ໃຈຄົດ ເໝືອນກັບຄົນທີ່ໃຫ້ກຽດແດ່ພຣະເຈົ້າແຕ່ປາກ ສ່ວນຈິດໃຈຢູ່ໄກຈາກພຣະເຈົ້າ.

ອົງພຣະເຢຊູໄດ້ບອກພວກທີ່ກ່າວຫາວ່າພວກເຂົາມັກຄຳສອນທີ່ຖ່າຍທອດໂດຍປາກເປົ່າເປັນທຳນຽມແທນທີ່ຈະເຊື່ອຟັງກົດໝາຍຂອງພຣະເຈົ້າທີ່ຈົດໄວ້ (7:9). ພວກຫົວໜ້າສາສນາເປັນບັນດິດເຣື່ອງກົດບັນຍັດ (ລກ 11:46, 52) ອົງພຣະເຢຊູໄດ້ບອກວ່າພວກເຂົາບໍ່ເຮັດຕາມກົດບັນຍັດ ໂດຍເອົາກົດທີ່ຖ່າຍທອດຈາກສມັຍເກົ່າຈົນກາຍເປັນປະເພນີ ແທນທີ່ຈະຍົກເອົາກົດບັດຍັດຈາກພຣະເຈົ້າ. ອົງພຣະເຢຊູຍັງກ່າວເພີ້ມອີກວ່າ ເຖິງປະເພນີຈະດີປານໃດກໍຕາມ ຖ້າມັນຂັດກັບພຣະຄັມພີແລ້ວກໍເປັນສິ່ງທີ່ຜິດ.

ໃນປື້ມ ມາຣະໂກ 7:10-13, ອົງພຣະເຢຊູໄດ້ເວົ້າເຖິງສິ່ງນຶ່ງໂດຍສະເພາະທີ່ຜິດກັບປະເພນີ. ເຖິງແມ່ນພຣະບັນຍັດຂອງພຣະເຈົ້າ (ໂມເຊໄດ້ກ່າວວ່າ) ສອນໃຫ້ຜູ້ເປັນລູກຈົ່ງໃຫ້ກຽດແດ່ພໍ່ແມ່ (ອພຍ 21:12), ຄຳສອນທີ່ບອກເລົ່າ (ທ່ານໄດ້ກ່າວວ່າ) ບໍ່ໄດ້ເວົ້າເຖິງຄຳສາບານຕໍ່ພຣະເຈົ້າເຖິງຊັບສິນທີ່ແຍກໄວ້ເພື່ອຮັກສາພໍ່ແມ່ຍາມແກ່ຊະຣາ, ເຮັດໃຫ້ຜູ້ເປັນລູກໝົດພາຣະບໍ່ເບິ່ງແຍງພໍ່ແມ່ຍາມເຖົ້າ. ຕາມມາຣະໂກໄດ້ເອີ້ນກົດນີ້ວ່າ

"ໂຄບັນ" ແປວ່າ ມອບຖວາຍແກ່ພຣະເຈົ້າ (ມຣກ 7:11) ຄຳສອນນີ້ໄດ້ມີຢູ່ໃນປື້ມລະບຽບພວກເລວີ, ຈົດບັນຊີ, ແລະເອເຊກຽນ.

ໂຄບັນ ມີຈຸດປະສົງດີທີ່ທ້ອນໂຮມບາງຢ່າງໄວ້ເພື່ອນຳເອົາໄປໃຊ້ກັບຂອງສັກສິດ ເພື່ອບໍ່ໃຫ້ເປັນມົນທິນ ເຮັດດັ່ງນີ້ກໍເໝືອນກັບຂອງຖວາຍ. ແຕ່ບໍ່ໄດ້ສາບານເພື່ອເອົາໄປໃຊ້ໃນພຣະວິຫານ ແຍກເອົາໄວ້ເພື່ອບໍ່ໃຫ້ມີຂໍ້ຜູກມັດເອົາໄປຊ່ອຍພໍ່ແມ່, ແຕ່ເອົາໄປໃຊ້ສ່ວນຕົວຈົນເຖິງຕາຍ. ຖ້າຜູ້ໃດສາບານແລ້ວກໍກິນແໜງໃຈແຕ່ເປັນໜ້າເສັຽໃຈຄົນນັ້ນບໍ່ສາມາດຝ່າຝືນໄດ້ ຈຳເປັນຕ້ອງເຮັດຕາມຄຳສາບານເອົາໄວ້. ອົງພຣະເຢຊູກ່າວວ່າຜູ້ນຳບໍ່ອະນຸຍາດໃຫ້ຜູ້ເປັນລູກຮັກສາຫລືຊ່ອຍເຫລືອພໍ່ແມ່ (7:2), ບໍ່ມີສິ່ງໃດສາມາດເຮັດໃຫ້ຄຳສາບານນັ້ນສູນສິ້ນໄປຕາມກົດໝາຍຂອງຊາວຢິວຈົນມາເຖິງປີ ຄສ 220.

ອົງພຣະເຢຊູໄດ້ປະນາມກົດ ໂຄບັນ ວ່າກົດຢ່າງນີ້ເຮັດໃຫ້ພຣະທັມຂອງພຣະເຈົ້າໝົດພລັງ (7:13). ອົງພຣະເຢຊູກຽດຊັງການໃຊ້ພຣະທັມຂໍ້ນຶ່ງຂອງພຣະເຈົ້າເພື່ອທຳລາຍຂໍ້ອື່ນໆ; ກົດບັນຍັດບໍ່ໄດ້ມອບໃຫ້ເປັນພຽງແຕ່ກົດເກນເທົ່ານັ້ນ, ແຕ່ໃຫ້ໃຊ້ເພື່ອປໂຍດຕໍ່ມະນຸດຊາດ (ມຣກ 2:27). ອົງພຣະເຢຊູໄດ້ສລູບໃນ ມາຣະໂກ 7:13 ວ່ານີ້ເປັນພຽງຕົວຢ່າງດຽວທີ່ເປັນທຳນຽມຖ່າຍທອດເລົ່າສູ່ກັນຟັງຈົນເປັນທຳນຽມ ຊຶ່ງເຮັດໃຫ້ຄົນບໍ່ຍອມເຊື່ອຟັງພຣະບັນຍັດຈາກພຣະເຈົ້າ.

## 2. <u>ໃຈເປື້ອນ ແລະ ຄວາມຄິດສົກກະປົກ</u>: ( ມາຣະໂກ 7:14-23 )

ຕອນນີ້ອົງພຣະເຢຊູໄດ້ຫັນປ່ຽນຈາກຫົວໜ້າສາສນາໄປເວົ້າເຖິງຄົນສາມັນ (7:14) ພຣະອົງໄດ້ເນັ້ນເຖິງສິ່ງທີ່ເຮັດໃຫ້ເປັນມົນທິນ ແລະພຣະອົງມີພຣະປະສົງຢາກໃຫ້ຄົນເຂົ້າໃຈເຖິງຄຳສອນຂອງພຣະອົງ ທີ່ດີທີ່ສຸດ. ພຣະອົງໄດ້ສອນວ່າການເປັນຄົນບໍຣິສຸດນີ້ບໍ່ແມ່ນເຊື່ອຟັງກົດບັນຍັດ. ພວກຢິວເຊື່ອວ່າ "ມີຄວາມຄິດບາບເປັນເໝືອນແມ່ພະຍາດຕິດແປດໂດຍການຈັບບາຍ, ແຕ່ອົງພຣະເຢຊູໄດ້ສອນວ່າບາບເປັນພະຍາດມະເຮັງທີ່ເກີດຈາກພາຍໃນ. ຄຳສອນຂອງອົງພຣະເຢຊູນັ້ນເປັນສິ່ງທີ່ພວກເຂົາບໍ່ເຄີຍໄດ້ຍິນມາກ່ອນ ພວກເຂົາເຊື່ອວ່າການເຮັດຕາມບັນຍັດເຮັດໃຫ້ພວກເຂົາເປັນຄົນສົນທັມຈາກພຣະເຈົ້າ. ອົງພຣະເຢຊູໄດ້ສອນເພີ້ມວ່າ ຖ້າຢາກເປັນຜູ້ບໍຣິສຸດຈຳເປັນຕ້ອງມີຄວາມສັມພັນທີ່ດີກັບພຣະເຈົ້າ ຄົນນັ້ນຕ້ອງມີຄວາມຄິດ ຈິດໃຈ ແລະການກະທຳຕາມພຣະຍັດທີ່ພຣະເຈົ້າມອບໃຫ້. ພຣະເຢຊູຍັງກ່າວວ່າສິ່ງທີ່ອອກມາຈາກທາງໃນເຮັດໃຫ້ຄົນເປື້ອນບໍ່ແມ່ນສິ່ງທີ່ກິນເຂົ້າໄປ (7:15).

ມາຣະໂກ ບົດ 7:17 ໄດ້ຫັນຈາກສອນຝູງຊົນແລ້ວ ອົງພຣະເຢຊູໄດ້ກັບໄປສອນສ່ວນຕົວ. ເຖິງແມ່ນວ່າພວກສາວົກມີຄວາມສັມພັນທີ່ດີກັບອົງພຣະເຢຊູ ແຕ່ພວກເຂົາຍັງບໍ່ທັນເຂົ້າໃຈດີເຖິງການເປັນຄົນບໍຣິສຸດ. ຕາມບົດ 7:18 ໄດ້ບອກວ່າອົງພຣະເຢຊູເປັນທຸກເພາະພວກສາວົກຍັງບໍ່ເຂົ້າໃຈຄຳສອນຂອງພຣະອົງ ເພາະສາວົກຍັງເຮັດເໝືອນພວກຟາຣີຊາຍ. ດັ່ງນັ້ນ, ພຣະເຢຊູຈຶ່ງກ່າວເພີ້ມວ່າພຣະເຈົ້າໄດ້ຕັດສິນແລະເບິ່ງທາງຈິດໃຈ. ອາຫານການກິນບໍ່ສາມາດເຮັດໃຫ້ຈິດໃຈເປື້ອນ ເພາະມັນເຂົ້າໄປໃນກະເພາະແລ້ວກໍຜ່ານອອກໄປ. (ເບິ່ງກິຈການ 10:9:16).

ມາຣະໂກ 7:20 ອົງພຣະເຢຊູໄດ້ກ່າວຄືນວ່າສິ່ງເຮັດໃຫ້ຄົນຊົ່ວມົວໝອງມາຈາກຄວາມຄິດຊົ່ວ (7:21-23). ອາດຈະແມ່ນຄວາມຄິດຢາກໄດ້ດ້ວຍການປະພຶດ ຫລືມີນິສັຍບໍ່ດີ ພວກເຮົາທຸກຄົນອາດເປັນຄົນຜິດຕໍ່

ຄຳສອນຂອງອົງພຣະເຢຊູ.  ດັ່ງນັ້ນ, ພວກເຮົາທຸກຄົນເປັນຄົນຜິດ ແລະຕ້ອງການຊຳຣະໃຫ້ສະອາດເພື່ອໃຫ້ພຣະປະສົງຂອງພຣະເຢຊູສຳເຣັດ. (ຕິໂຕ 2:11-14)

## ເຣື່ອງນີ້ມີຄວາມໝາຍຫຍັງໃນທຸກວັນນີ້?

ການຕິດຕາມ ເຮັດຕາມທຳນຽມຫລືກົດເກນບໍ່ໄດ້ປ່ຽນຈິດໃຈ ບໍ່ເປັນສິ່ງພຣະເຈົ້າຊອບພຣະທັຍ ແລະພຣະອົງຈະບໍ່ຖືວ່າເປັນການພຽງພໍທີ່ຈະເຂົ້າໄປຫາພຣະອົງໄດ້. ໃຫ້ເຂົ້າໃຈວ່າອົງພຣະເຢຊູໄດ້ກະທຳການຊຳຣະພວກເຮົາທາງໃນເພື່ອໃຫ້ພວກເຮົາກາຍເປັນຄົນບໍຣິສຸດໄດ້.  ຄຳວ່າບໍຣິສຸດຂອງພຣະເຈົ້ານີ້ແມ່ນເຂົ້າໄປຫາຄົນທຸກສມັຍແລະທຸກປະເພດ  ແລະສາມາດປ່ຽນສະພາບຂອງພວກເຮົາຈາກຄວາມຜິດໃຫ້ກາຍເປັນຄົນບໍຣິສຸດ.

ທຸກວັນນີ້ຍັງມີຫລາຍຄົນເຮັດເໝືອນພວກຟາຣີຊາຍໃນການເປັນຄົນບໍຣິສຸດ ຄືເຮັດຕາມທຳນຽມ ຫລືກົດບັນຍັດຕ່າງ ເອົາສາສນາທີ່ຄົນສ້າງຂຶ້ນເພື່ອວັດແທກໃນການເປັນຄົນບໍຣິສຸດຊຶ່ງຜິດກັບຄຳສອນຂອງອົງພຣະເຢຊູ.  ໃຫ້ພວກເຮົາຮູ້ເຖິງວ່າອົງພຣະເຢຊູເປັນຫ່ວງເຣື່ອງຈິດໃຈຫລາຍກວ່າການປະຕິບັດ.

## <u>ຄຳຖາມ</u>

11. ທ່ານເຄີຍໄດ້ຍິນຄົນເວົ້າບໍ່ວ່າ ເປັນຄົນລາວຕ້ອງຢຶດໝັ້ນປະເພນີອັນດີງາມຂອງຄົນລາວ?
12. ພຣະຄັມພີສອນວ່າປະເພນີຫລືທຳນຽມອັນໃດທີ່ຜິດຕໍ່ຄຳສອນໃນພຣະຄັມພີແລ້ວ ພວກເຮົາບໍ່ຄວນເຮັດ.
13. ອົງພຣະເຢຊູສອນເຣື່ອງການເປັນຄົນບໍຣິສຸດບໍ່ແມ່ນເຮັດແຕ່ພາຍນອກ ເພື່ອໃຫ້ຄົນອື່ນເຫັນໄດ້ງ່າຍແຕ່ຕ້ອງອອກມາຈາກຄວາມນຶກຄຶດຈິດໃຈນຳ.

*ສບ. ບຸນຈັນ ວົງສຸຣິດທ໌*

# ບົດຮຽນທີ 7
## ການສາຣະພາບທີ່ຖືກຕ້ອງ ແລະຢາກແກ້ຕົວຢ່າງສຸດຂີດ

---

| | |
|---|---|
| **ຂໍ້ພຣະຄັມພີສຳລັບບົດຮຽນນີ້:** | ມາຣະໂກ 8:27-38; 9:1 |
| **ພູມຫລັງຂອງພຣະຄັມພີ:** | ມາຣະໂກ 8:27-38; 9:1 |
| **ຈຸດສຳຄັນຂອງບົດຮຽນນີ້:** | ເປໂຕໄດ້ສາຣະພາບທີ່ຖືກຕ້ອງ, ແຕ່ຍັງຂາດຄວາມເຂົ້າໃຈເຖິງການປະກາດຮັບໃຊ້. |
| **ຄຳຖາມເພື່ອການຄົ້ນຄວ້າ:** | ແມ່ນຫຍັງເປັນການປະກາດຮັບໃຊ້ອັນແທ້ຈິງຂອງອົງພຣະເຢຊູ? |
| **ຈຸດປະສົງຂອງບົດຮຽນ:** | ເພື່ອເຂົ້າໃຫ້ໃຈດີແລະຍຶດເອົາການທ້າທາຍໃນການເປັນສາວົກອັນແທ້ຈິງ. |

### ບົດນຳ

ທະເລຄາລີເລເປັນບ່ອນຄຸ້ນເຄີຍຕໍ່ອົງພຣະເຢຊູແລະພວກສາວົກ. ເມືອງກາເປນາອູມເປັນສູນກາງບ່ອນອົງພຣະເຢຊູປະກາດຮັບໃຊ້ (ມຣກ 2:1; ມທ 9:1), ອາດຈະແມ່ນບ້ານຂອງຢາໂກໂບແລະໂຢຮັນອີກດ້ວຍ. ເມືອງເບັດຊາອີດາແມ່ນບ້ານຂອງອັນເດອາ, ເປໂຕ, ແລະຟີລິບ ທາງເໜືອຂອງຄາລີເລ (ຢຮ 1:44). ຈາກທະເລບ່ອນພຣະເຢຊູຮູ້ດີ ພຣະອົງໄດ້ພາພວກສາວົກອອກໄປປະມານຊາວທ້າໄມໄປຍັງເມືອງກາຍຊາເຣັຽຟີລິບປອຍ (ຫລາຍຄົນເອີ້ນວ່າ ບານີອາສ) ເປັນດິນແດນທີ່ອຸດົມສົມບູນດີ ແຕ່ທາງດ້ານຈິດວິນຍານແລ້ວຄົນສ່ວນຫລາຍຢູ່ໃນຄວາມມືດ.

ກາຍຊາເຣັຽຟີລິບປອຍເຄີຍເປັນສູນກາງສາສນາມາກ່ອນ. ໃນສມັຍພຣະຄັມພີເດີມ, ພວກການາອານໄດ້ນະມັສການພຣະທີ່ໃຫ້ໂຊກລາບ ແລະ ພຣະບາອານໃນທີ່ນັ້ນ. ຕໍ່ມາພວກກຣີກໄດ້ເຮັດເປັນສູນກາງພຣະທັມມະຊາດຫລາຍຕົນ ເພາະເປັນດິນແດນທີ່ມີການປູກຝັງໄດ້ດີ ແລະເອີ້ນທີ່ນັ້ນວ່າ <u>ປານີອາສ.</u> ສມັຍໂຣມປົກຄອງ ກະສັດເຮໂຣດໄດ້ສ້າງວິຫານທີ່ນັ້ນໂດຍໃຊ້ຫີນແຂງຈາກພູທີ່ນັ້ນຢ່າງງົດງາມ ໃນນາມຈັກກະພັດອໍກັສຕັສ. ຫລັງຈາກນັ້ນມາຟີລິບຜູ້ເປັນບຸດຊາຍໄດ້ປົກຄອງ ແລະສ້າງສ່ວນທີ່ເຫລືອໃສ່ນາມຊື່ເພື່ອໃຫ້ກຽດແດ່ທາຍເບີເຣັຽ ແລະຕົນເອງ.

### 1. <u>ກ້າປະກາດ</u>: ( ມາຣະໂກ 8:27-30 )

ຂະນະທີ່ຍ່າງໄປຕາມບ້ານໃກ້ຄຽງເມືອງກາຍຊາເຣັຽຟີລິປອຍ ເຫັນວ່າເປັນເມືອງຮັ່ງມີແລະມີສາສນາແລ້ວ. ອົງພຣະເຢຊູຈຶ່ງຍົກເອົາຄຳຖາມອັນເລິກທີ່ສຸດອອກມາຖາມວ່າ, "ຝູງຊົນທັງຫລາຍຄິດວ່າເຮົາແມ່ນໃຜ?" (ມຣກ. 8:27). ບາງທີເວລານັ້ນພວກເຂົາໄດ້ສົນທະນາກັນຫລາຍຢ່າງເຖິງເຣື່ອງຄອບຄົວ, ປ່າດົງງົດງາມ ຫລືເວົ້າລົ້ມຄືນເຖິງການອັສຈັນ ຫລືແມ່ນແຕ່ເວລານັ່ງພັກຜ່ອນ, ອົງພຣະເຢຊູໄດ້ໂອກາດດີຈຶ່ງຖາມ

ພວກເຂົາ ຄຳຖາມເຊັ່ນນັ້ນ. ຕາມປົກກະຕິແລ້ວອົງພຣະເຢຊູສອນກົງກັນຂ້າມກັບທຳນຽມຂອງພວກຟາຣີຊາຍຄື ພຣະອາຈານເປັນຜູ້ຖາມລູກສິດ ສ່ວນພວກຟາຣີຊາຍແມ່ນລູກສິດເປັນຄົນຖາມອາຈານ.

ຄຳຕອບຂອງພວກສາວົກນັ້ນແຕກຕ່າງກັນເຊັ່ນ: ໂຢຮັນບັບຕິສໂຕ, ເອລີຢາ; ຫລືຜູ້ປະກາດພຣະທັມອື່ນໆ (8:28). ອົງພຣະເຢຊູຮູ້ດີເຖິງສາເຫດທີ່ພວກສາວົກຕອບພຣະອົງ ແລະເປັນຫຍັງພຣະອົງຈຶ່ງຖາມ? ອົງຕາມມາຣະໂກ ອົງພຣະເຢຊູຢາກຮູ້ວ່າພວກສາວົກໄດ້ຖືກດຶງດູດຈິດໃຈ ໂດຍພຣະອົງ ຫລືຖືກດຶງດູດໂດຍສິ່ງອື່ນໆທີ່ຢູ່ອ້ອມຮອບ. ພຣະອົງຢາກໃຫ້ພວກສາວົກຮູ້ຈັກພຣະອົງດີຂຶ້ນ ເພື່ອຈະເກີດຜົນດີຕໍ່ພວກເຂົາ ຄືຢາກໃຫ້ເຂົາເວົ້າອອກມາຢ່າງແຈ່ມແຈ້ງແລະແນ່ໃຈ.

ພວກສາວົກພາກັນມິດງຽບຢູ່ຊົ່ວລະຍະເພື່ອຊອກຄຳຕອບ. ຂະນະທີ່ພວກສາວົກຄິດເຖິງໃນຄຳຖາມນັ້ນ ເປໂຕໄດ້ປະກາດວ່າ, "ທ່ານເປັນພຣະເມຊີອາ" ເພິ່ນເປັນຄົນໃຈກ້າປະກາດຢ່າງເປີດເຜີຍ ພຣະເມຊີອາເປັນຜູ້ທີ່ພວກຢິວພາກັນລໍຄອຍເປັນເວລາຫລາຍສັດຕະວັດ. ໃນເຂດແດນກາຍຊາເຣັຽຟີລິບປອຍມີພວກຕ່າງຊາດພາກັນນັບຖືພຣະທຽມ ການທີ່ເປໂຕກ້າຕອບຕາມຄວາມເຊື່ອທີ່ເພິ່ນເຊື່ອໃນພຣະອາຈານຢ່າງນັ້ນ ເປັນການເຮັດໃຫ້ຄຳທຳນວາຍຂອງຜູ້ປະກາດພຣະທັມອິສຣາເອນສຳເຣັດ.

ເຖິງແມ່ນການສາຣະພາບຂອງເປໂຕນັ້ນຖືກຕ້ອງ ແຕ່ເຫັນວ່າຍັງບໍ່ເປັນການພຽງພໍ ເພາະຄົນອື່ນໆຍັງບໍ່ທັນເຂົ້າໃຈ ອົງພຣະເຢຊູຢາກຖືກຕ້ອງວ່າພຣະອົງເປັນພຣະເມຊີອາ: ຊຶ່ງມີຄວາມໝາຍເລິກ, ຄວາມທົນທຸກລຳບາກ ແລະການເສັຽສລະທີ່ມີຄ່າສູງ. ບໍ່ມີຜູ້ໃດເຂົ້າໃຈເຣື່ອງພຣະເມຊີອາຢ່າງຄົບຖ້ວນຈົນວ່າອົງພຣະເຢຊູໄດ້ສິ້ນພຣະຊົນແລະຄືນພຣະຊົນ. ດັ່ງນັ້ນ ພຣະອົງຈຶ່ງສັ່ງບໍ່ໃຫ້ປະກາດເທື່ອເພາະຢ້ານວ່າຈະມີຄົນເຂົ້າໃຈຜິດ. ເພື່ອຊ່ວຍພວກສາວົກໃຫ້ຮຽນລົ້ມຄືນເຖິງໜ້າທີ່ຂອງພຣະເມຊີອາ, ອົງພຣະເຢຊູໄດ້ບອກພວກເຂົາເຣື່ອງທີ່ພວກເຂົາບໍ່ຢາກໄດ້ຍິນ ຄືພຣະອົງຕ້ອງທົນທຸກທໍຣະມານ ແລະໃນທີ່ສຸດກໍສິ້ນພຣະຊົນ.

## 2. <u>**ຍາກທີ່ຈະສົນທະນາກັນ**</u>: ( ມາຣະໂກ 8:31-33 )

ການເປັນທຸກແລະຖືກປະຕິເສດອາດຈະບໍ່ມີຜູ້ໃດວາງແຜນເອົາໄວ້. ແຕ່ອົງພຣະເຢຊູເລີ້ມສອນພວກສາວົກເຖິງເຣື່ອງນີ້ ພຣະອົງກ່າວວ່າ "ຕ້ອງພົບກັບຄວາມທຸກຢ່າງຫລວງຫລາຍ ແລະຖືກປະຕິເສດ" ເຣື່ອງນີ້ພວກເຂົາບໍ່ເຄີຍໄດ້ຍິນມາກ່ອນ. ຖືກປະຕິເສດຈາກພວກເຖົ້າແກ່, ຫົວໜ້າມະຫາປະໂຣຫິດ, ແລະພວກຄຣູສອນພຣະບັດຍັດຊຶ່ງເປັນສິ່ງສູນເສັຽອັນໃຫຍ່; ເພາະພວກນີ້ເປັນຜູ້ນຳ ຜູ້ມີອຳນາດ ມີເງິນ ມີໝູ່ຄູ່ຫລາຍ.

ໃນເມື່ອອົງພຣະເຢຊູກ່າວວ່າພຣະອົງຈະຖືກສັງຫານເຮັດໃຫ້ພວກສາວົກຕົກໃຈ; ພວກເຂົາບໍ່ຢາກຈະສູນເສັຽຜູ້ເປັນເພື່ອນແລະເປັນພຣະອາຈານ (8:31). ພວກເຂົາບໍ່ເຂົ້າໃຈເພາະໄດ້ເຫັນຣິດເດດທີ່ຫ້າມລົມພະຍຸຂັບໄລ່ຜີຮ້າຍ, ປິ່ນປົວພະຍາດ, ລ້ຽງຄົນຫ້າພັນຄົນ, ອະພັຍຄວາມຜິດບາບຂອງຄົນໄດ້ ແລະໃນທີ່ສຸດຈະໄດ້ຖືກຂ້າ ເປັນຫຍັງຈຶ່ງເປັນແນວນັ້ນ? ສິ່ງທີ່ຈະເກີດຂຶ້ນນີ້ບໍ່ໄດ້ຢູ່ໃນແຜນການຂອງພວກສາວົກ. ແຕ່ອົງພຣະເຢຊູໄດ້ເວົ້າກັບພວກເຂົາຢ່າງເຂົ້າໃຈໄດ້ງ່າຍແລ້ວ (8:32) ພຣະອົງບໍ່ໄດ້ເຊື່ອງອັນໃດໄວ້ຈາກພວກສາວົກ. ອົງພຣະເຢຊູຢາກໃຫ້ພວກເຂົາເຂົ້າໃຈເຖິງເຣື່ອງນີ້ຢ່າງແຈ່ມແຈ້ງວ່າພຣະອົງເປັນພຣະເມຊີອາ, ຫລັງຈາກເຣື່ອງທີ່ພຣະອົງໄດ້ບອກໄວ້ກາຍເປັນຈິງແລ້ວ ພວກສາວົກສາມາດຄິດລົ້ມຄືນຈຶ່ງຈະຮູ້ວ່າພຣະອົງເວົ້າຖືກຕາມແຜນການຂອງພຣະເຈົ້າ ຊຶ່ງຜູ້ປະກາດພຣະທັມເອຊາຢາໄດ້ທຳນວາຍໄວ້ 52:13-53:12.

ເປໂຕເຂົ້າໃຈເຖິງສິ່ງທີ່ອົງພຣະເຢຊູກ່າວຢ່າງໜັກແໜ້ນ ແລະບໍ່ພໍໃຈ ເປໂຕບໍ່ເອົາຫົວຊາເຖິງສິ່ງອົງພຣະເຢຊູສັນຍາວ່າຈະຄືນມາຈາກຕາຍ ລາວຈຶ່ງເອີ້ນໃສ່ພຣະເຢຊູແລະຕຳໜິພຣະອົງ (8:32) ດັ່ງນັ້ນ, ພຣະເຢຊູເບິ່ງເປໂຕແລະສາວົກຄົນອື່ນແລ້ວກ່າວວ່າ, "ຊາຕານເອີຍ ຈົ່ງຖອຍໜີຈາກເຮົາເສັຽ" (8:33). ໃນເມື່ອໄດ້ຍິນດັ່ງນີ້ພວກເຮົາຄິດວ່າອົງພຣະເຢຊູໄດ້ເວົ້າຮ້າຍຫລືເວົ້າບໍ່ສຸພາບ ແຕ່ເຫັນວ່າອົງພຣະເຢຊູຮູ້ດີວ່າເປໂຕບໍ່ໄດ້ຕໍ່ສູ້ຝ່າຍເນື້ອໜັງແລະເລືອດ ແຕ່ຕໍ່ສູ້ອຳນາດແຫ່ງຄວາມຊົ່ວ(ອຟຊ 6:12) ອົງພຣະເຢຊູໄດ້ກ່າວເຖິງກົກເຫງົ້າຂອງບັນຫາ: ພະຍາມານໃຊ້ເປໂຕເພື່ອທົດລອງອົງພຣະເຢຊູ ເໝືອນກັບເວລາພຣະອົງຢູ່ໃນປ່າກັນດານ (ມທ 4:1-11; ມຣກ 1:12-13). ພະຍາມານຕ້ອງການທຳລາຍແຜນການຂອງພຣະເຈົ້າ ແຕ່ມັນເຮັດບໍ່ສຳເຣັດ.

ຄວາມຄິດແລະແຜນການຂອງພຣະເຈົ້າແຕກຕ່າງ ແລະເບິ່ງບໍ່ເຫັນ (ອຊຢ 55:8-9, 1 ກຣທ 1:23-25), ເປໂຕແລະສາວົກຄົນອື່ນໄດ້ເອົາໃຈໃສ່ຝ່າຍຮ່າງກາຍ ເປໂຕຢາກໃຫ້ອົງພຣະເຢຊູເຮັດຕາມແຜນທີ່ມີໄວ້, ແຕ່ບໍ່ແມ່ນໜ້າທີ່ສາວົກຈະບອກຜູ້ເປັນຄຣູ ສາວົກເປັນຄົນຕິດຕາມແລະຮຽນຮູ້ນຳຄຣູ. ພຣະເຢຊູໄດ້ສັ່ງສອນພວກສາວົກຕໍ່ໜ້າຝູງຊົນ.

## 3. <u>ຄຳສັ່ງເດັດດ່ຽວ</u>: ( ມາຣະໂກ 8:34-9:1 )

### 1. ປະຕິເສດຕົນເອງ

ອົງພຣະເຢຊູບໍ່ໄດ້ສັ່ງພວກສາວົກ ແລະພວກເຮົາໃນທຸກວັນນີ້ໃຫ້ປະຕິເສດສິ່ງຂອງເທົ່ານັ້ນ ແຕ່ໃຫ້ປະຕິເສດຕົນເອງ ເພື່ອເຮັດໃຫ້ພຣະເຈົ້າພໍພຣະທັຍ; ກ່ອນອື່ນໝົດໃຫ້ຮັກພຣະອົງຫລາຍຂຶ້ນ ແລະຍອມຮັບໃຊ້ຄົນອື່ນເຖິງແມ່ນມັນຈະຍາກເທົ່າໃດກໍຕາມ ເໝືອນກັບອົງພຣະເຢຊູໃນສວນເຄັດເຊມາເນວ່າ, "ຕາມນ້ຳພຣະທັຍຂອງພຣະເຈົ້າ ບໍ່ເຮັດຕາມໃຈຕົນເອງ" (ລກ 22:42), ເຖິງແມ່ນຊາວໂລກມັກຖືເອົາຕົນເອງເປັນໃຫຍ່.

### 2. ແບກໄມ້ກາງແຂນ

ໄມ້ກາງແຂນເປັນເຄື່ອງໝາຍແຫ່ງການຖືກປະຕິເສດ, ຖືກເຍາະເຍີ້ຍ, ອັບອາຍ ໃນສມັຍພວກໂຣມມັນ. ການຄຶງທີ່ໄມ້ກາງແຂນເປັນການລົງໂທດຢ່າງທຸກທໍຣະມານ ມີແຕ່ພວກຂ້າທາດ ແລະຄາດຕະກອນເທົ່ານັ້ນທີ່ຖືກຄຶງ ແລະບໍ່ມີຈັກຄົນລອດຕາຍເມື່ອຖືກຄຶງໄວ້ທີ່ໄມ້ກາງແຂນ. ອົງພຣະເຢຊູໄດ້ເອີ້ນໃຫ້ພວກສາວົກ ແລະພວກເຮົາເປັນພະຍານ ຍອມຕາຍຍ້ອນຄວາມເຊື່ອ ດ້ວຍຄວາມສມັກໃຈ.

### 3. ຕິດຕາມເຮົາມາ

ເມື່ອອົງພຣະເຢຊູເອີ້ນເອົາສາວົກສິບສອງຄົນ (ມທ 1: ມຣກ 4), ພວກເຂົາໄດ້ຕິດຕາມພຣະອົງໄປທັນທີຕາມພຣະອົງຊົງບອກ. ສ່ວນຜູ້ທີ່ພຣະເຢຊູເອີ້ນໃນ ມັດທາຍ 8:18-22 ແລະລູກາ 9:57-62 ຢາກຕາມອົງພຣະເຢຊູແຕ່ມີເງື່ອນໄຂ ຄົນຢ່າງນັ້ນບໍ່ສົມຄວນໃນຣາຊແຜນດິນຂອງພຣະເຈົ້າ (ລູກາ 9:62) ສາວົກແທ້ຕ້ອງຕິດຕາມໄປແລະເຮັດຕາມຄຳເວົ້າແລະການປະຕິບັດເວລາອົງພຣະເຢຊູເອີ້ນ.

ເພື່ອຮັບເອົາຄຳສັ່ງຂອງອົງພຣະເຢຊູ ພຣະອົງໄດ້ສັ່ງໃຫ້ເຮັດທາງໃນຈິດໃຈເພື່ອຈະໄດ້ຮັບສິ່ງທີ່ໝັ້ນຄົງເປັນຢູ່ຕລອດໄປຄື: ຍອມຕາຍເພື່ອຈະໄດ້ຮັບຄວາມພົ້ນ ຊຶ່ງເປັນການປລາດໃຈຕໍ່ພວກສາວົກ (ມຣກ 8:35). ຜູ້ໃດປະຕິເສດອົງພຣະເຢຊູເພື່ອຈະເອົາຊີວິດຂອງຕົນໃຫ້ລອດພົ້ນ ລາວຈະໄດ້ພົບກັບຄວາມຕາຍຕລອດໄປ

ເປັນນິດ ຕລອດໄປດ້ານຈິດວິນຍານ. ແຕ່ເມື່ອພວກເຮົາຍອມຕາຍເພື່ອພຣະນາມຂອງອົງພຣະເຢຊູ ພວກເຮົາຈະໄດ້ຮັບຊີວິດຈາກພຣະເຈົ້າ ຜູ້ເປັນຕົ້ນຂອງຊີວິດ (ໂຢຮັນ 4:14), ຊີວິດອັນຄົບບໍຣິບູນ (ໂຢຮັນ 10:10), ສິ່ງທີ່ດີແລະຂອງຂວັນອັນປະເສີດ (ຢາໂກໂບ 1:17).

ໃນປຶ້ມມາຣະໂກ 8 ອົງພຣະເຢຊູໄດ້ກ່າວເຖິງສິ່ງທີ່ມີຄ່າສູງຈົນບໍ່ມີອັນໃດທຽບໄດ້ນັ້ນຄືຊີວິດ. ໃນທຸກວັນນີ້ຄົນສ່ວນຫລາຍຊອກສແວງຫາສິ່ງຂອງໃນໂລກນີ້ ຊຶ່ງລ້ວນແຕ່ເປັນຂອງຊົ່ວຄາວແລະໃນທີ່ສຸດກໍສູນເສັຽໄປເໝືອນກັບຄົນທີ່ປະຕິເສດອົງພຣະເຢຊູກໍຈະກາຍເປັນຄົນສູນເສັຽຊີວິດອັນຕລອດໄປ (8:37). ເວລາອົງພຣະເຢຊູສະເດັດມາຄັ້ງທີສອງພວກເຂົາຈະເສັຽໃຈເພາະພວກເຂົາປະຕິເສດພຣະອົງໃນໂລກ ແລະເວລານັ້ນພຣະອົງກໍຈະປະຕິເສດບໍ່ໃຫ້ພວກເຂົາເຂົ້າໄປໃນແຜ່ນດິນສວັນ.

ສຸດທ້າຍອົງພຣະເຢຊູໄດ້ສັນຍາວ່າ: ທຸກຄົນຜູ້ທີ່ເຊື່ອຈະໄດ້ເຫັນຣິດອຳນາດຣາຊອານາຈັກຂອງພຣະເຈົ້າ, ແຕ່ອາດມີບາງຄົນຍັງບໍ່ທັນຕາຍ (9:1), ພຣະອົງເວົ້າຢ່າງນີ້ຢ່າງແທ້ຈິງແລະແນ່ນອນ ວ່າຜູ້ທີ່ເຊື່ອຟັງພຣະອົງການຕາຍຈະເອົາຊັຍຊະນະພວກເຂົາບໍ່ໄດ້ເລີຍ. ພວກເຮົາຜູ້ທີ່ເຊື່ອຈະໄດ້ເຫັນຢ່າງໜ້ອຍຫົກຢ່າງເຖິງຣິດອຳນາດຂອງພຣະເຈົ້າ: 1. ການປ່ຽນສະພາບ; 2. ພຣະອົງຈະສືບຕໍ່ເຮັດການອັສຈັນ; 3. ການຄືນພຣະຊົນແລະປາກົດໃຫ້ເຫັນ; 4. ການສະເດັດຂຶ້ນໄປສວັນ; 5. ວັນເພັນເຕຄໍສະເຕ; 6. ສັນຍາລັກ ແລະການອັສຈັນໃຈທີ່ພວກເຖົ້າແກ່ໄດ້ກະທຳ ແລະພວກທີ່ອົດທົນໃນຄວາມເຊື່ອຈົນເຖິງທີ່ສຸດ (ເຮັບເຣີ 3:6), ຄວາມໝັ້ນໃຈໃນຂ່າວປະເສີດວ່າບໍ່ເປັນສິ່ງໄຮ້ປໂຍດ.

## ເລື່ອງນີ້ມີຄວາມໝາຍຫຍັງໃນທຸກວັນນີ້?

ຫົກວັນຕໍ່ມາອົງພຣະເຢຊູໄດ້ພາເປໂຕ, ຢາໂກໂບ, ແລະໂຢຮັນຂຶ້ນໄປເທິງພູທາງທິດເໜືອອາດແມ່ນພູເຮີມັນ ບ່ອນພຣະອົງໄດ້ແປງພຣະກາຍ (ມຣກ 9:2-4). ເຖິງແມ່ນພວກສາວົກເປັນເພື່ອນໃກ້ຊິດທີ່ສຸດ ແຕ່ເມື່ອ ພຣະອົງໄປເປີດເຜີຍພຣະອົງເອງໃຫ້ພວກເຂົາຮູ້ວ່າພຣະອົງແມ່ນໃຜແທ້ນັ້ນ ໄດ້ເຮັດໃຫ້ພວກເຂົາຄິດປລາດໃຈ. ເຖິງແມ່ນພວກເຂົາເຄີຍເຫັນອົງພຣະເຢຊູເຮັດການອັສຈັນມາແລ້ວຫລາຍເທື່ອ ແລະປະກາດວ່າພຣະເຢຊູແມ່ນອົງພຣະເມຊີອາ ພວກເຂົາໄດ້ເຫັນການເປັນພຣະເຈົ້າຂອງພຣະເຢຊູດ້ວຍຕາແທ້ໆໃນກາງເວັນ. ໃນບ່ອນທີ່ຄົນບໍ່ຮູ້ດີນີ້ ອຳນາດແຫ່ງຄວາມມືດໄດ້ທຳງານຢ່າງໜັກ ອົງພຣະເຢຊູໄດ້ສະແດງສ່ວນນ້ອຍໆເຖິງພຣະຣັສໝີຂອງພຣະອົງ (ລກ 2:32; ພນມ 21:23) ເຮັດໃຫ້ເປໂຕ ຢາໂກໂບແລະໂຢຮັນກາຍເປັນຄົນຖ່ອມຕົວລົງ (ມທ 17:6).

ມີຜູ້ເຊື່ອຫລາຍຄົນປາຖນາຢາກຢູ່ໃນສະພາບຢ່າງນັ້ນຕລອດໄປ ໃນທີ່ສຸດພວກເຂົາໄດ້ເຫັນຮູບຂອງອົງພຣະເຢຊູເອົາຊະນະຄວາມເຈັບປວດ ແລະການເປັນພຣະເມຊີອາຜູ້ເຄີຍເປັນທຸກເວທານາ. ພວກເຮົາທຸກມື້ອາດຢາກມີຊີວິດຢູ່ຢ່າງສະບາຍແລະບໍ່ເປັນທຸກອັນໃດ. ພວກເຮົາອາດບໍ່ພົບບັນຫາເໝືອນພວກສາວົກ ແຕ່ພວກເຮົາບໍ່ຕ້ອງການໃຫ້ມີຄວາມລຳບາກ, ຂາດຊື່ສຽງ, ແລະຄວາມເຈັບປວດຢ່າງໃດໃນເມື່ອຕິດຕາມອົງພຣະເຢຊູໄປ. ພວກເຮົາບໍ່ຢາກປະຕິເສດຕົນເອງ ແຕ່ວ່າການຕິດຕາມອົງພຣະເຢຊູໄປແທ້ນັ້ນຈຳເປັນຕ້ອງມີຄວາມທຸກທໍຣະມານຍ້ອນເຊື່ອຟັງອົງພຣະເຢຊູ.

*ສບ. ບຸນຈັນ ວົງສຸຣິດທຣ໌*

# ບົດຮຽນທີ 8

## ເອົາຊະນະຄວາມບໍ່ເຊື່ອ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ມາຣະໂກ 9: 14-29

**ພູມຫລັງຂອງພຣະຄັມພີ**: ມາຣະໂກ 9: 2-29

**ຈຸດສຳຄັນສຳລັບບົດຮຽນນີ້**: ການມອບຄວາມເຊື່ອໄວ້ກັບພຣະເຈົ້າຜູ້ຊົງຣິດຈະນຳໄປສູ່ແນວທາງທີ່ບໍ່ມີຂອບເຂດ.

**ຄຳຖາມເພື່ອຄົ້ນຄວ້າ**: ທ່ານຕ້ອງການພຣະເຢຊູຊ່ວຍໃຫ້ເອົາຊະນະຄວາມເຊື່ອເຣື່ອງໃດແດ່?

**ຈຸດປະສົງຂອງການສຶກສານີ້**: ເພື່ອຈະໄວ້ວາງໃຈໃນພຣະຄຣິດເວລາຂ້ອຍພົບກັບອຸປສັກທີ່ຄິດວ່າເປັນໄປບໍ່ໄດ້.

**ອ່ານລວບ**: ພວກເຮົາທຸກຄົນຄົງມີບັນຫາທີ່ຈະຮັກສາຄວາມໝັ້ນໃຈ ແລະຄວາມເຊື່ອທີ່ໝັ້ນຄົງເວລາພົບບັນຫາໃຫຍ່ໆ. ແຕ່ວ່າການມອບຊີວິດແລະຄວາມລຳບາກໄວ້ໃນພຣະຫັດຂອງພຣະເຈົ້າຈະເປີດແນວທາງ ແລະ ອຸປກອນທີ່ຂາດເຂີນ.

### ຄຳນຳ

ຄົນທີ່ທ່ານຮັກເຄີຍເປັນພຍາດທີ່ປິ່ນປົວບໍ່ໄດ້ບໍ່? ການໄດ້ພົບສິ່ງນັ້ນເຮັດໃຫ້ທ່ານຕ້ອງນ້ອຍໃຈແລະໝົດຫວັງບໍ່? ຫລືວ່າສະພາບການນັ້ນໄດ້ທ້າທາຍທ່ານເພື່ອສະແດງຄວາມເຊື່ອ ແລະອ້ອນວອນພຣະເຈົ້າສຳລັບຜູ້ປ່ວຍດ້ວຍຄວາມໝັ້ນໃຈ? ສ່ວນຫລາຍຄວາມເຊື່ອໝັ້ນໃຈໃນພຣະເຈົ້າຊ່ວຍເຮົາໃຫ້ຕໍ່ສູ້ກັບສິ່ງທີ່ມະນຸດບໍ່ມີຄວາມສາມາດແກ້ໄຂໄດ້. ບາງຄັ້ງພວກເຮົາກໍແບກພາຣະໜັກເພາະຄວາມສົງສັຍ ແລະພວກເຮົາຕ້ອງການພຣະເຈົ້າ ໃຫ້ຍົກຄວາມເຊື່ອທີ່ກຳລັງອ່ອນແອນັ້ນໃຫ້ເຂັ້ມແຂງອີກ.

ທ່ານຈະເຮັດຢ່າງໃດໃນເວລາທີ່ຄົນຮັກກຳລັງຢູ່ໃນອັນຕະລາຍ ແລະພຣະເຈົ້າຜູ້ດຽວຄືຄວາມຫວັງ? ພວກເຮົາສ່ວນຫລາຍຈະເຮັດເໝືອນດັ່ງພໍ່ໃນພຣະທັມມື້ນີ້ເຮັດ. ພວກເຮົາເຂົ້າຫາພຣະເຈົ້າ ຂໍໃຫ້ພຣະອົງຊ່ວຍແກ້ໄຂ; ພວກເຮົາຂໍໃຫ້ພຣະເຈົ້າຊົງໂຜດໃຫ້ພົ້ນອັນຕະລາຍ ເຖິງວ່າຄວາມເຊື່ອຂອງພວກເຮົາອາດຈະບໍ່ໝັ້ນຄົງສເມີໄປ. ໃນພຣະທັມມາຣະໂກ 9 ທີ່ຜ່ານມາກ່ອນນີ້, ເປໂຕ, ຢາໂກໂບ ແລະໂຢຮັນໄດ້ເວົ້າເຖິງປະສົບການກັບພຣະເຈົ້າທີ່ເທິງພູສູງ. ໃນຂະນະທີ່ຮ່າງກາຍຂອງພຣະເຢຊູປ່ຽນແປງຕໍ່ໜ້າພວກຕົນ, ເຂົາເຈົ້າໄດ້ເຫັນຄວາມເປັນພຣະເຈົ້າແລະສະຫງ່າຣາສີຂອງພຣະເຢຊູ (9: 1-8). ແຕ່ເມື່ອລົງມາຈາກພູແລ້ວ, ເຂົາເຈົ້າໄດ້ຍ່າງຜ່ານຮ່ອມເຫວແຫ່ງຄວາມມືດຝ່າຍວິນຍານເພາະການຕໍ່ສູ້ຂອງມະນຸດ (9: 14), ແລະນິສັຍມັກທຳລາຍຂອງຜີຊົ່ວຮ້າຍຜ່ານເດັກຊາຍຜູ້ນຶ່ງທີ່ຖືກຜີຮ້າຍສິງ.

## 1. ຄວາມບໍ່ເຊື່ອແລະຄວາມເຊື່ອຜິດບ່ອນ ເຮັດໃຫ້ບໍ່ເກີດຜົນ ( ມາຣະໂກ 9:14-19)

ຫລາຍເທື່ອພວກເຮົາກໍ່ຮູ້ສຶກວ່າຕົວເອງມີຄວາມເຊື່ອທີ່ເຂັ້ມແຂງ ແລະຄຳອ້ອນວອນແຕ່ລະຄຳກໍໄດ້ຮັບຄຳຕອບສເມີ ບາງຄັ້ງມີພຽງແຕ່ຄິດເທົ່ານັ້ນກໍໄດ້ຮັບຄຳຕອບແລ້ວ. ແຕ່ກໍມີບາງເທື່ອທີ່ພວກເຮົາຮູ້ສຶກວ່າຕົວເອງຂາດກຳລັງ. ເປົ້າໝາຍຂອງພວກເຮົາກໍຄືຢາກມີຄວາມເຊື່ອເຂັ້ມແຂງແລະສມ່ຳສເມີ, ແຕ່ກໍເປັນເຣື່ອງຍາກທີ່ຈະເຖິງເປົ້າໝາຍນີ້. ພວກສາວົກຂອງພຣະເຢຊູກໍພົບບັນຫາໃນທຳນອງນີ້ເໝືອນກັນ.

ຂະນະທີ່ເປໂຕ, ຢາໂກໂບ ແລະໂຢຮັນໄດ້ຢູ່ເທິງພູທີ່ພຣະເຢຊູຊົງແປງພຣະກາຍ, ສາວົກຄົນອື່ນໄດ້ລໍຄອຍທີ່ຮ່ອມພູ ສາວົກທຸກຄົນໄດ້ເຫັນສິ່ງອັສຈັນເວລາພຣະເຢຊູໄດ້ສົ່ງພວກເຂົາອອກໄປປະກາດການຖິ້ມໃຈເກົ່າເອົາໃຈໃໝ່, ການຂັບໄລ່ຜີຮ້າຍ ແລະການປິ່ນປົວຄົນເຈັບປ່ວຍໃນພຣະນາມຂອງພຣະອົງ. ເມື່ອມີຄົນມາຫາພຣະເຢຊູ ແລະພຣະອົງຍັງຊົງຢູ່ເທິງພູ, ພວກສາວົກພຍາຍາມຂັບໄລ່ຜີຮ້າຍໃຫ້ອອກຈາກລູກຂອງຄົນນຶ່ງ; ພວກເຂົາຄິດວ່າເທື່ອນີ້ກໍບໍ່ໄດ້ແຕກຕ່າງກັບທຸກເທື່ອທີ່ຜ່ານມາໃນການຮັບໃຊ້ (ມຣກ 6: 7-13).

ຂະນະທີ່ພຣະເຢຊູ, ເປໂຕ, ຢາໂກໂບແລະໂຢຮັນກຳລັງລົງມາແຕ່ເທິງພູ ພວກເພິ່ນໄດ້ເຫັນຄົນຫລວງຫລາຍອ້ອມພວກສາວົກຢູ່ ພ້ອມທັງໄດ້ຍິນພວກທັມມະຈານກຳລັງໂຕ້ຖຽງກັບພວກເຂົາຢູ່ (9: 14). ເຣື່ອງກໍຄືວ່າພວກສາວົກກຸ່ມນີ້ບໍ່ສາມາດໄລ່ຜີຮ້າຍອອກຈາກເດັກຊາຍ ພວກທັມມະຈານຖືວ່າເປັນເຣື່ອງໃຫຍ່ເພາະພວກເຂົາພຍາຍາມທຳລາຍຊື່ສຽງຂອງພຣະເຢຊູແລະພວກສາວົກຕໍ່ໜ້າປະຊາຊົນ. ແນ່ນອນພວກສາວົກຄົງຖືວ່າເປັນຊ່ວງເວລາທີ່ອັບອາຍເພາະພວກຕົນບໍ່ສາມາດໄລ່ຜີໄດ້; ບາງທີເຂົາເຈົ້າອາດຈະສົງສັຍຄວາມເຊື່ອຂອງພວກຕົນດ້ວຍ.

ພໍ່ຂອງເດັກທີ່ຖືກຜີສິງກໍອາດຈະຄິດວ່າຕົວເອງໄດ້ຜິດຫວັງແລ້ວ; ລູກຊາຍຖືກຜີສິງ ແລະຜີນັ້ນໄດ້ເຮັດຫລາຍຢ່າງເພື່ອທຳລາຍເດັກນັ້ນ (9: 18). ພໍ່ໄດ້ເຂົ້າຫາພຣະເຢຊູຜູ້ຊົງເປັນຄວາມຫວັງອັນສຸດທ້າຍສຳລັບລູກຂອງຕົນ. ລາວເຄີຍໄດ້ຍິນເຣື່ອງຣິດອຳນາດຂອງພຣະເຢຊູ ແລະລາວຮູ້ວ່າສິ່ງນີ້ເປັນໄປໄດ້ ແລະລາວຈຶ່ງຂໍໃຫ້ພຣະອົງຊົງຊ່ວຍ. ແຕ່ເມື່ອມາຫາພຣະເຢຊູ, ພຣະອົງບໍ່ໄດ້ຢູ່ທີ່ນັ້ນ; ພວກສາວົກທີ່ຢູ່ກໍບໍ່ສາມາດໄລ່ຜີຮ້າຍອອກ; ພໍ່ຜູ້ນີ້ພຍາຍາມຮັກສາຄວາມເຊື່ອໄວ້ຖ້າມກາງຄວາມສົງສັຍ;ຄວາມບໍ່ເຊື່ອຄວບຄຸມຈິດໃຈລາວ. ລາວໄດ້ເຊື່ອພວກສາວົກ ແທນທີ່ຈະເຊື່ອພຣະເຢຊູ? ພຣະເຈົ້າບໍ່ມີຣິດອຳນາດພຽງພໍທີ່ຈະໄລ່ຜີຮ້າຍບໍ?

ພວກເຮົາບໍ່ຮູ້ແນ່ນອນວ່າ ເປັນຫຍັງພວກສາວົກຈຶ່ງບໍ່ສາມາດໄລ່ຜີຮ້າຍອອກຈາກເດັກຄົນນັ້ນ ເພາະເມື່ອກ່ອນພວກເຂົາເຈົ້າເຄີຍໄລ່ຜີສຳເຣັດມາແລ້ວ. ບາງທີພວກສາວົກບໍ່ໄດ້ຕຽມຕົວຝ່າຍວິນຍານພຽງພໍ ເພາະພຣະເຢຊູໄດ້ຊົງກ່າວໃນພາຍຫລັງວ່າ "ຜີຮ້າຍແນວນີ້ຈະຂັບໄລ່ອອກດ້ວຍວິທີອື່ນບໍ່ໄດ້ ເວັ້ນໄວ້ແຕ່ດ້ວຍການອະທິຖານເທົ່ານັ້ນ" (9: 29).

## 2. ຄວາມເຊື່ອຕ້ອງມີພຣະເຢຊູເປັນສູນກາງ: ( ມາຣະໂກ 9: 19-23)

ເວລາພຣະເຢຊູຊົງສະເດັດມາເຖິງເຫດການ, ກໍມີຫລາຍຢ່າງໄດ້ເກີດຂຶ້ນ. ປະຊາຊົນທັງຫລາຍເຫັນພຣະອົງ

ແລ້ວແລ່ນມາພົບພຣະອົງ. ອຳນາດຂອງຄວາມເຊື່ອທີ່ແທ້ຈິງແມ່ນຢູ່ທີ່ອົງພຣະເຢຊູ, ແລະບໍ່ແມ່ນທີ່ພວກສາວົກ. ພຣະເຢຊູຊົງຖາມວ່າພວກເຂົາໂຕ້ຖຽງກັນເຣື່ອງຫຍັງ; ພໍ່ຂອງເດັກທີ່ຖືກຜີສິງໄດ້ບອກພຣະອົງວ່າພວກສາວົກບໍ່ສາມາດຂັບໄລ່ຜີຮ້າຍອອກຈາກລູກຊາຍຂອງຕົນ; ລາວໄດ້ເລົ່າພຶດຕິການຕ່າງໆໃຫ້ພຣະອົງຟັງ.

ພຣະເຢຊູຊົງກ່າວແກ່ພວກເຂົາວ່າ "ໂອພວກເຈົ້າທີ່ຂາດຄວາມເຊື່ອເອີຍ" (ມຣກ 9: 19) ໂອກາດໄດ້ມາເຖິງສຳລັບຄົນທັງຫລາຍທີ່ຈະເຂົ້າຢູ່ໃນອານາຈັກສວັນຂອງພຣະເຈົ້າໂດຍທາງພຣະເຢຊູຄຣິດ. ຄວາມເຊື່ອແລະຄວາມໄວ້ວາງໃຈໃນອົງພຣະເຢຊູເປັນສິ່ງຈຳເປັນ ເພາະພຣະອົງກໍຈະຊົງຢູ່ກັບພວກເຂົາອີກບໍ່ດົນ. ພວກສາວົກຈະຕ້ອງຮຽນເພິ່ງຣິດອຳນາດຂອງພຣະເຈົ້າ; ຮຽນຮູ້ວ່າພຣະເຈົ້າກຳລັງເຮັດຫຍັງ ແລ້ວເຂົ້າຮ່ວມງານກັບພຣະອົງ. ພວກເຂົາຈະຕ້ອງເພິ່ງຣິດອຳນາດຂອງພຣະເຈົ້າເພື່ອຈະໄດ້ຊັຍຊະນະອຸປສັກທີ່ຂວາງໜ້າໃນການທີ່ຈະເຮັດວຽກງານຂອງພຣະເຈົ້າໃຫ້ສຳເຣັດ.

ພຣະເຢຊູຊົງໃຫ້ຄຳຕອບສຳລັບບັນຫາ; ທີ່ຈິງແລ້ວພຣະອົງຄືຄຳຕອບ. ພຣະເຢຊູກ່າວວ່າ "ຈົ່ງພາເດັກມາຫາເຮົາເບິ່ງດູ" (9: 19). ພຣະເຢຊູຊົງມີຣິດອຳນາດເໜືອຜີຮ້າຍ, ບໍ່ແມ່ນພວກສາວົກ ຫລືພວກເຮົາ; ພຣະເຢຊູສາມາດປິ່ນປົວຮັກສາພຍາດ;ໜ້າທີ່ພວກເຮົາຄືການນຳຄົນໃຫ້ມາຫາພຣະອົງ ເພາະພຣະອົງສາມາດເຮັດໃນສິ່ງທີ່ເຮົາເຮັດບໍ່ໄດ້.

ພຣະເຢຊູຊົງເວົ້າກັບພໍ່ຂອງເດັກເພື່ອຈະຮູ້ເຣື່ອງເພີ້ມເຕີມ; ພຣະອົງໄດ້ຊົງເຫັນຄວາມຕ້ອງການຂອງພໍ່ຜູ້ນີ້. ໃນຂະນະນັ້ນ ພວກເຂົາໄດ້ນຳເດັກມາຫາພຣະເຢຊູ; ໃນທັນໃດຜີຮ້າຍໄດ້ເຮັດໃຫ້ເດັກນັ້ນຊັກດິ້ນລົ້ມລົງພື້ນດິນ; ຫລັງຈາກພຣະອົງໄດ້ຊົງຖາມພໍ່ຂອງເດັກ ພຣະອົງໄດ້ຮູ້ວ່າເດັກໄດ້ຖືກຜີຮ້າຍພຍາຍາມທຳລາຍຊີວິດລາວມາແຕ່ນ້ອຍ (9: 20-22). ໃນຂໍ້ 22, ພໍ່ຂອງເດັກໄດ້ຖາມພຣະເຢຊູວ່າ, "ຖ້າທ່ານຊ່ວຍໄດ້ຂໍໂຜດສົງສານ..." ພຣະອົງຊົງຕອບວ່າ "ທຸກສິ່ງເປັນໄປໄດ້ສຳລັບຜູ້ເຊື່ອ" (9: 23); ພໍ່ຂອງເດັກຕອບວ່າ "ໂຜດຊ່ວຍຂ້ານ້ອຍໃຫ້ມີຄວາມເຊື່ອຫລາຍກວ່ານີ້ແດ່ທ້ອນ" (9:24).

## 3. <u>ຄວາມເຊື່ອສາມາດປຸ່ງນຊີວິດ</u>: (ມາຣະໂກ 9: 25-29)

ເມື່ອໄດ້ຍິນຄຳສາຣະພາບຂອງພໍ່ເດັກ ພຣະເຢຊູຈຶ່ງຊົງສັ່ງຜີຊົ່ວຮ້າຍໃຫ້ອອກຈາກເດັກນ້ອຍຜູ້ນັ້ນ ແລ້ວຜີຮ້າຍກໍແຜດສຽງຂຶ້ນ ແລະເຮັດໃຫ້ເດັກນັ້ນຊັກດິ້ນຢ່າງແຮງ ແລ້ວກໍໜີອອກໄປ "ເດັກນັ້ນກາຍເປັນເໝືອນຄົນຕາຍ" (9: 25-26). ພຣະອົງຊົງຈັບມືເດັກຜູ້ນັ້ນ ແລະດຶງໃຫ້ລຸກຂຶ້ນ ເດັກນັ້ນກໍລຸກຢືນຂຶ້ນ (9: 27) ພຣະເຢຊູຊົງຊະນະຜີຮ້າຍ ແລະໃຫ້ຊີວິດໃໝ່ກັບເດັກນ້ອຍຜູ້ນັ້ນ. ພຣະອົງພ້ອມທີ່ຈະໃຫ້ຊີວິດໃໝ່ກັບຜູ້ທີ່ເຊື່ອ; ໃນພຣະເຢຊູ, ຊີວິດເກົ່າຜ່ານໄປ ແລະຊີວິດໃໝ່ໄດ້ເລີ້ມຂຶ້ນ.

## <u>ຄວາມໝາຍແລະການປະຕິບັດ</u>

ຄວາມເຊື່ອໝາຍເຖິງການໄວ້ວາງໃຈໃນພຣະເຈົ້າ; ຄວາມເຊື່ອແລະໄວ້ວາງໃຈຈະຕ້ອງຢູ່ທີ່ພຣະເຢຊູຜູ້ຊົງເປັນພຣະເຈົ້າອົງດຽວ. ທຸກຢ່າງເປັນໄປໄດ້ສຳລັບຜູ້ເຊື່ອເພາະພຣະເຈົ້າຊົງສັດຊື່ຕໍ່ພຣະສັນຍາ. ໃນເວລາຕໍ່ມາພຣະເຢຊູ ແລະພວກສາວົກໄດ້ເຂົ້າໄປໃນບ້ານ; ພວກເຂົາຖາມພຣະອົງວ່າເປັນຫຍັງພວກຕົນບໍ່ສາມາດ

ໄລ່ຜີຮ້າຍອອກຈາກເດັກນັ້ນ; ພຣະອົງຊົງຕອບວ່າ "ຜີຮ້າຍແນວນີ້ຂັບໄລ່ອອກດ້ວຍວິທີອື່ນບໍ່ໄດ້ ເວັ້ນໄວ້ແຕ່ດ້ວຍການອະທິຖານເທົ່ານັ້ນ" (9: 29).

ການອະທິຖານແມ່ນການຕິດສນິດ ແລະການສາມັກຄີທັມກັບພຣະເຢຊູ. ພວກເຮົາບໍ່ແມ່ນທີ່ມາຂອງຣິດເດດ; ຣິດເດດມາຈາກພຣະເຢຊູ; ພຣະນາມຂອງພຣະອົງຢູ່ເໜືອນາມໃດໆໃນຟ້າສວັນແລະແຜ່ນດິນໂລກ. ເວລາພວກເຮົາອະທິຖານ ແລະດຳເນີນຊີວິດໂດຍຣິດເດດຂອງພຣະອົງ, ພຣະອົງຈະເຮັດສິ່ງອັສຈັນຜ່ານພວກເຮົາ.

ໜ້າທີ່ຂອງພວກເຮົາຄືເຊື່ອແລະຕັ້ງໝັ້ນຢູ່ໃນຣິດເດດຂອງພຣະເຢຊູ ແລະນຳຄົນມາຫາພຣະອົງ (9: 19) ແລະສິ່ງເສີມຄົນໃຫ້ເຊື່ອວາງໃຈໃນພຣະອົງ. ເວລາຄົນທັງຫລາຍເຊື່ອໃນພຣະອົງ, ພຣະເຢຊູຈະຊົງປ່ຽນແປງຊີວິດພວກເຂົາ. ຊີວິດເກົ່າຜ່ານໄປ ແລະຊີວິດໃໝ່ເລີ້ມຂຶ້ນ. ທຸກຢ່າງເປັນໄປໄດ້ສຳລັບຜູ້ທີ່ເຊື່ອ (9: 23).

**<u>ຄຳຖາມ</u>:**

1. ເປັນຫຍັງພວກເຮົາມັກພົບກັບບັນຫາ ຫລັງຈາກທີ່ມີຊັຍຊະນະແລ້ວ?

2. ທ່ານຕໍ່ສູ້ກັບຄວາມບໍ່ເຊື່ອໃນເຣື່ອງໃດ? ທ່ານໄດ້ສາຣະພາບ ແລະຂໍໃຫ້ພຣະເຈົ້າຊ່ວຍບໍ່?

3. ມີຫຍັງແດ່ທີ່ທ່ານຈະສາມາດເຮັດໄດ້ ຫລັງຈາກຄວາມເຊື່ອໄດ້ຮັບການຟື້ນຟູຈາກພຣະເຈົ້າ?

4. ຊີວິດການອະທິຖານຂອງທ່ານຢູ່ໃນສະພາບໃດ? ເຮັດແນວໃດຈຶ່ງຈະມີສະພາບເຂັ້ມແຂງຂຶ້ນ?

5. ເວລາຄິດເຖິງຄຳວ່າຄວາມເຊື່ອ, ມີພາບແນວໃດເຂົ້າມາໃນຄວາມຄິດຂອງທ່ານ?

*ສຄ*

# ບົດຮຽນທີ 9
# ຄວາມຍິ່ງໃຫຍ່ເທົ່າທຽມກັບການເສັຽສະລະ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ມາຣະໂກ 10: 32-45

**ພູມຫລັງຂອງພຣະຄັມພີ**: ມາຣະໂກ 10: 32-45

**ຈຸດສຳຄັນສຳລັບບົດຮຽນນີ້**: ພຣະເຢຊູແກ້ໄຂຄວາມເຂົ້າໃຈຜິດຂອງພວກສາວົກໂດຍປະກາດຈຸດປະສົງເຣື່ອງຄວາມຮ້ອນຮົນຂອງພຣະອົງ.

**ຄຳຖາມເພື່ອຄົ້ນຄວ້າ**: ທ່ານອະທິບາຍຄຳວ່າ "ຍິ່ງໃຫຍ່" ວິທີໃດ?

**ຈຸດປະສົງຂອງການສຶກສານີ້**: ເພື່ອພິຈາຣະນາຄວາມໝາຍຂອງຄຳວ່າ "ຍິ່ງໃຫຍ່" ຂອງຂ້ອຍເອງ ແລະເລືອກທີ່ຈະຕິດຕາມຕົວຢ່າງຂອງພຣະເຢຊູ.

**ອ່ານລວບ**:ຄຳຕອບຂອງພຣະເຢຊູຕໍ່ຄຳຮ້ອງຂໍຂອງຢາໂກໂບແລະໂຢຮັນເຣື່ອງຕຳແໜ່ງໃນຣາຊອານາຈັກຂອງພຣະອົງ ໄດ້ປ່ຽນແປງຄວາມໝາຍຂອງຄຳວ່າ "ຍິ່ງໃຫຍ່."

## ຄຳນຳ

ທ່ານແປຄວາມໝາຍຄຳວ່າ "ຍິ່ງໃຫຍ່" ຢ່າງໃດ? ທ່ານຍົກຍ້ອງລັກສະນະຢ່າງໃດແດ່ໃນຄົນອື່ນ? ໃນຄວາມຄິດຂອງທ່ານອາດຈະມີລັກສະນະທີ່ເຫັນໄດ້ເຊັ່ນ: ສລາດ, ໜ້າຮັກ, ມີຄົນນິຍົມ, ຄວາມຄິດກວ້າງ, ສາມາດເຮັດງານໃຫ້ສຳເຣັດ, ແລະຕໍ່ໆໄປ. ຫລືອາດຈະມີບາງສິ່ງທີ່ເປັນຫລັກເຊັ່ນ: ຄວາມສຳເຣັດເຣື່ອງເງິນຄຳ, ມີເສັ້ນສາຍດີ, ໂດ່ງດັງ, ມີປະວັດຄວາມສຳເຣັດດີ, ມີບ້ານແລະຊັບສົມບັດ.

ຜູ້ຍິ່ງໃຫຍ່ສຳລັບທ່ານອາດຈະເປັນຄົນທີ່ເວົ້າຈັບໃຈຄົນ, ສັດຊື່, ໜ້ານັບຖື, ເອົາຈິງເອົາຈັງ, ອົດທົນ, ອ່ອນຫວານ, ສຸພາບ, ເຜື່ອແຜ່, ມັກຊ່ວຍເຫລືອ, ເຫັນໃຈຄົນອື່ນ, ນັບຖືຄົນອື່ນ. ຄວາມຍິ່ງໃຫຍ່ເປັນເຣື່ອງທີ່ອະທິບາຍຍາກເພາະບາງຄັ້ງສິ່ງນັ້ນໆປາກົດຂຶ້ນເອງໃນບຸກຄົນເຊັ່ນ ອຸປນິສັຍ, ຄຸນຄ່າ, ບຸກຄະລິກ, ການປະພຶດ, ຫລືຜົນປາກົດໃນການງານ. ໃນບົດຮຽນມື້ນີ້ພວກເຮົາຈະຮຽນຮູ້ວ່າແມ່ນຫຍັງທີ່ພຣະເຢຊູຖືວ່າເປັນຄວາມຍິ່ງໃຫຍ່ໃນຊີວິດຂອງພວກເຮົາ ແລະໃນຊີວິດຂອງຄົນທັງຫລາຍຜູ້ຕິດຕາມພຣະອົງ.

## 1. ຄວາມຍິ່ງໃຫຍ່ຂອງຄວາມກ້າຫານໃນຊີວິດ: ( ມາຣະໂກ 10: 32-34)

ເຫດການຕໍ່ໄປນີ້ເກີດຂຶ້ນໃນລະດູຂອງວັນເພັນເຕຄໍສະເຕ. ພຣະເຢຊູຊົງເດີນທາງໄປກຸງເຢຣູຊາເລັມ; ເວລາສຸດທ້າຍຂອງພຣະອົງໄດ້ໃກ້ເຂົ້າມາແລ້ວ; ການທໍຣະຍົດ ແລະໄມ້ກາງແຂນກໍລໍຄອຍຢູ່ຂ້າງໜ້າ. ບຸກຄົນຜູ້ຍິ່ງໃຫຍ່ສ່ວນຫລາຍເປັນຄົນກ້າຫານ ພວກເຂົາເຈົ້າດຳເນີນຊີວິດທີ່ເປັນແບບຢ່າງບໍ່ວ່າສິ່ງໃດຈະຢູ່ຂ້າງໜ້າ.

ພຣະເຢຊູຊົງຮູ້ທຸກຢ່າງທີ່ຢູ່ຂ້າງໜ້າ ແຕ່ພຣະອົງຊົງກ້າວຕໍ່ໄປເພື່ອພົບກັບສິ່ງເຫລົ່ານັ້ນ. ພຣະເຢຊູກຳລັງກ້າວໜ້າໄປຫາຄວາມຕາຍແບບທຸກທໍຣະມານ; ພຣະອົງໄດ້ຍ່າງອອກໜ້າພວກສາວົກຂຶ້ນພູລະຍະທາງຊາວໄມເພື່ອຈະໄປໃຫ້ເຖິງເຢຣູຊາເລັມຊຶ່ງພວກທີ່ຈະຂ້າພຣະອົງໄດ້ລໍຖ້າຢູ່ ພວກສາວົກໄດ້ຕິດຕາມພຣະອົງໄປດ້ວຍຄວາມຕື່ນເຕັ້ນແລະຢ້ານກົວ ໃນຂະນະທີ່ພຣະອົງສະແດງຄວາມກ້າຫານ (ມຣກ 10: 32-34).

ພວກເຮົາໄດ້ເຫັນຄວາມກ້າຫານທີ່ຍິ່ງໃຫຍ່ໃນພຣະເຢຊູ ເມື່ອຟັງເບິ່ງຄຳອະທິບາຍຂອງພຣະອົງໃຫ້ພວກສາວົກວ່າມີຫຍັງກຳລັງລໍຖ້າພຣະອົງທີ່ນະຄອນເຢຣູຊາເລັມ(ມຣກ 10: 33-34). ທີ່ຈິງແລ້ວພຣະເຢຊູເຄີຍສອນສາວົກໄວ້ກ່ອນແລ້ວເຖິງເຣື່ອງທີ່ພຣະອົງຈະຖືກປະຕິເສດ, ຖືກຂ້າ, ແລະຈະຊົງຄືນເປັນມາຈາກຄວາມຕາຍໃນວັນທີສາມ (ມຣກ 8: 31; 9: 31). ໃນຄາວນີ້ພຣະອົງຊົງໃຫ້ລາຍລະອຽດຫລາຍຂຶ້ນ; ພຣະອົງຈະຖືກທໍຣະຍົດ, ຖືກມອບໃຫ້ຫົວໜ້າປະໂຣຫິດ ແລະຜູ້ນຳຄົນຢິວ , ຖືກຕັດສິນລົງໂທດເຖິງຕາຍ, ຖືກມອບໃຫ້ຄົນຕ່າງຊາດ, ຖືກເຍາະເຍີ້ຍ, ຖົ່ມນ້ຳລາຍໃສ່, ຊ້ຽນຕີ, ແລະຂ້າພຣະອົງເສັຽ. ຄົງຈະບໍ່ມີມະນຸດຄົນໃດທີ່ຈະຟ້າວຍ່າງໄປຫາສິ່ງທີ່ກ່າວມານັ້ນ.

ທ່ານກຳລັງກ້າວໜ້າຂຶ້ນພູໃນຊີວິດບໍ? ທ່ານກຳລັງເຫັນຄວາມມືດຢູ່ຂ້າງໜ້າບໍ? ທ່ານຍ່າງຊ້າລົງ ຫລືຍ່າງໄວຂຶ້ນເພື່ອເຂົ້າສູ່ເຫດການທີ່ຢູ່ຂ້າງໜ້າ?

## 2. <u>ຄວາມຍິ່ງໃຫຍ່ຂອງການເຊື່ອຟັງ:</u> ( ມາຣະໂກ 10: 35-40)

ໃນຂະນະທີ່ກຳລັງເດີນທາງ, ຢາໂກໂບແລະໂຢຮັນໄດ້ຍ່າງເຂົ້າໃກ້ພຣະເຢຊູ. ພວກເຂົາເປັນລູກຊາຍຂອງເຊເບດາຍ ຢາໂກໂບແລະໂຢຮັນຕ້ອງການຂໍຮ້ອງບາງສິ່ງຈາກພຣະອົງແລະບໍ່ໃຫ້ພຣະອົງປະຕິເສດໂດຍທີ່ບໍ່ໄດ້ບອກວ່າຈະຂໍຫຍັງ (10: 35). ພຣະເຢຊູຖາມພວກເຂົາວ່າ "ເຈົ້າທັງສອງຕ້ອງການຫຍັງ?" ພວກເຂົາຂໍຕຳແໜ່ງທີ່ມີອຳນາດແລະກຽດຕິຍົດຮອງລົງຈາກພຣະເຢຊູ (10:37); ພວກເຂົາຕ້ອງການປົກຄອງກັບພຣະອົງ.

ພຣະເຢຊູຊົງຕອບຢາໂກໂບແລະໂຢຮັນວ່າ, "ທີ່ພວກເຈົ້າຂໍຮ້ອງນັ້ນ ພວກເຈົ້າບໍ່ຮູ້ຈັກ" (10: 38). ພວກເຂົາຄິດວ່າຈະຄອງຣາຊບັນລັງເໝືອນໂອຣົດ ແລະຄວບຄຸມຄົນອື່ນໆ. ພຣະເຢຊູກຳລັງຈະຖືກທໍຣະມານແລະຕາຍແບບເປືອຍກາຍຕໍ່ໜ້າຄົນທັງໂລກ. ພຣະເຢຊູຊົງບອກພວກເຂົາເຖິງຈອກທີ່ຈະດື່ມ ແລະການບັບຕິສະມາທີ່ຈະຕ້ອງຮັບກ່ອນທີ່ຈະເຫັນສະຫງ່າຣາສີ; ພຣະອົງຊົງຖາມເຖິງວ່າພວກເຂົາຈະດື່ມໄດ້ ແລະຮັບໄດ້ບໍ່? (10: 38); ສອງນ້ອງອ້າຍຕອບວ່າ "ໄດ້ຢູ່ຂ້ານ້ອຍ." ພຣະເຢຊູກ່າວວ່າ, "ພວກເຈົ້າຈະດື່ມຈາກຈອກທີ່ເຮົາດື່ມແທ້ ແລະບັບຕິສະມາທີ່ເຮົາຮັບ ພວກເຈົ້າຈະຮັບແທ້ (10: 39). ການບັບຕິສະມາເປັນສັນຍາລັກຂອງການຕາຍໃຫ້ກັບຄວາມຢາກແລະການຖືກຝັງໄວ້ກັບພຣະຄຣິດ ແລະການເປັນຂຶ້ນມາຈາກຄວາມຕາຍເພື່ອດຳເນີນຊີວິດໃໝ່ກັບພຣະອົງ ໂດຍຣິດອຳນາດຂອງພຣະເຈົ້າ. ປະວັດສາດຄຣິສຕຽນຊຽນໄວ້ວ່າ ຢາໂກໂບແລະໂຢຮັນໄດ້ພົບກັບຄວາມທຸກທໍຣະມານເພາະຄວາມເຊື່ອໃນພຣະເຢຊູ.

ຈອກທີ່ພຣະເຢຊູຈະດື່ມເປັນຈອກຂອງການເຊື່ອຟັງ ແລະການຕາຍເປັນຄ່າໄຖ່ສຳລັບພວກເຮົາ (2 ກຣທ 5: 21). ການພ້ອມທີ່ຈະມອບຕົນເອງເປັນເຄື່ອງບູຊາເພື່ອຄົນອື່ນໆຈະໄດ້ມາເຖິງອົງພຣະຜູ້ເປັນເຈົ້າບອກເຖິງຄວາມຍິ່ງໃຫຍ່ທີ່ແທ້ຈິງ. ທີ່ສວນເຄັດເຊມາເນ, ພຣະເຢຊູອະທິຖານ, ຂໍພຣະເຈົ້າວ່າມີທາງອື່ນທີ່ຈະໃຫ້ໂລກໄດ້ພົ້ນຈາກບາບບໍ່, ຂໍໃຫ້ຈອກນີ້ຜ່ານໄປ, ຄວາມອັບອາຍ, ຄວາມທໍຣະມານ, ແລະຄວາມຕາຍຂໍໃຫ້ຜ່ານໄປ ໃນທີ່ສຸດພຣະເຢຊູກໍອະທິຖານວ່າ, "ຂໍຢ່າໃຫ້ເປັນໄປຕາມໃຈປາຖນາຂອງລູກ, ແຕ່ໃຫ້ເປັນໄປຕາມພຣະປະສົງຂອງພຣະອົງເທີ້ນ"(ມຣກ 14: 36). ພວກເຮົາສະແດງຄວາມຍິ່ງໃຫຍ່ແລະຄວາມຮັກແບບເສັງສະລະເພື່ອພຣະເຈົ້າເວລາພວກເຮົາພ້ອມທີ່ຈະວາງຊີວິດຕົນເອງເພື່ອຄົນອື່ນໆ, ຖ້າຈຳເປັນ, ເພື່ອພວກເຂົາຈະໄດ້ມາເຖິງພຣະອົງ (ຢຮ 15: 13).

## 3. <u>ຄວາມຍິ່ງໃຫຍ່ຂອງການຮັບໃຊ້:</u> ( ມາຣະໂກ 10: 41-45)

ພຣະເຢຊູແກ້ໄຂຄວາມເຂົ້າໃຈຜິດຂອງຢາໂກໂບແລະໂຢຮັນສອງວິທີກ່ຽວກັບເຣື່ອງຕຳແໜ່ງ; ນຶ່ງ, ພຣະອົງອະທິບາຍວ່າແມ່ນພຣະເຈົ້າເປັນຜູ້ຈັດຕຽມ. ສອງ, ຄວາມຍິ່ງໃຫຍ່ໃນອານາຈັກຂອງພຣະເຈົ້າແມ່ນການຮັບໃຊ້, ບໍ່ແມ່ນການຍົກຍໍຕົນເອງຫລືການຍາດອຳນາດ.

ພຣະຄຳບອກວ່າເມື່ອພວກສາວົກຄົນອື່ນໆໄດ້ຍິນເຖິງເຣື່ອງຂອງຢາໂກໂບ ແລະໂຢຮັນ ພວກເຂົາເຈົ້າກໍເຄືອງໃຈ (10: 41). ຫລາຍເທື່ອພວກເຮົາມັກເອົາມາຕະການຂອງໂລກນີ້ມາວັດຄວາມຍິ່ງໃຫຍ່; ບາງຄົນເບິ່ງວ່າໂບດໃຫຍ່ມີຄຸນຄ່າກວ່າໂບດນ້ອຍ; ການຮັບໃຊ້ໃຫຍ່ໆຈະໄດ້ລາງວັນຫລາຍໃນສວັນ. ແຕ່ພຣະເຢຊູສອນບໍ່ໃຫ້ພວກເຮົາເອົາຈຳນວນຄົນທີ່ພວກເຮົານຳພາ ຫລືຕຳແໜ່ງທີ່ເຮົາມີມາເປັນເຄື່ອງວັດຄວາມຍິ່ງໃຫຍ່ (10: 42). ຄວາມຍິ່ງໃຫຍ່ໃນຣາຊອານາຈັກຂອງພຣະເຈົ້າແມ່ນການປະຕຳແໜ່ງໄວ້ແລະຮັບໃຊ້ຄົນອື່ນໆ ບໍ່ແມ່ນມີຈັກຄົນທີ່ຮັບໃຊ້ພວກເຮົາ ແຕ່ແມ່ນມີຈັກຄົນທີ່ພວກເຮົາຮັບໃຊ້ (10: 43-44). ຄວາມຍິ່ງໃຫຍ່ຂອງພຣະເຢຊູແມ່ນການຍອມປະທານຊີວິດຂອງພຣະອົງເອງເພື່ອເປັນຄ່າໄຖ່ຂອງຄົນຈຳນວນຫລວງຫລາຍ (10: 45). ຄ່າໄຖ່ແມ່ນເຄື່ອງແລກປ່ຽນເພື່ອປົດປ່ອຍຄົນທີ່ຖືກຂັງໄວ້. ຄວາມບາບຄຸມຂັງພວກເຮົາເອົາໄວ້; ພຣະເຢຊູຊົງເປັນຄ່າໄຖ່ເພື່ອປົດປ່ອຍເຮົາຈາກອຳນາດຂອງຄວາມບາບ ແລະຊ່ວຍເຮົາໃຫ້ຄືນດີກັບພຣະເຈົ້າ.

## <u>ຄວາມໝາຍແລະການປະຕິບັດ</u>

ຄວາມຍິ່ງໃຫຍ່ມີຫລາຍແບບ ແລະສະແດງໃຫ້ເຫັນໄດ້ຫລາຍວິທີທາງ ການອະທິບາຍຄວາມຍິ່ງໃຫຍ່ກໍເປັນເຣື່ອງຍາກ ແຕ່ສາມາດເບິ່ງເຫັນໄດ້ງ່າຍ. ບໍ່ວ່າທ່ານຢາກຈະເປັນບຸກຄົນຜູ້ຍິ່ງໃຫຍ່, ພໍ່ແມ່ຜູ້ຍິ່ງໃຫຍ່, ຄຣິສຕຽນຜູ້ຍິ່ງໃຫຍ່, ຫລືພະນັກງານຜູ້ຍິ່ງໃຫຍ່, ຫລັກສູດເພື່ອຄວາມຍິ່ງໃຫຍ່ຈະຕ້ອງມີພື້ນຖານບາງຢ່າງ.

ບຸກຄົນຜູ້ຍິ່ງໃຫຍ່ນັບຖືພຣະເຈົ້າ. ພວກເຂົາເຮັດຕາມແບບຢ່າງຂອງພຣະເຢຊູໃນເຣື່ອງຄຸນຄ່າ, ຈັດລຳດັບຄວາມສຳຄັນ, ແລະການເຮັດກັບຄົນອື່ນໆ. ຊີວິດຂອງເຂົາເຈົ້າກ້າວໄປຕາມພຣະປະສົງຂອງພຣະເຈົ້າ, ບໍ່ແມ່ນໂຄງການຂອງຕົນເອງ. ບຸກຄົນຜູ້ຍິ່ງໃຫຍ່ຖືວ່າຄົນອື່ນມີຄຸນຄ່າຫລາຍກວ່າຕົນເອງ. ຄວາມຍິ່ງໃຫຍ່ຈະ

ປາກົດໃນຊີວິດພວກເຮົາເວລາສິ່ງຕ່າງໆທີ່ກ່າວມາແລ້ວນີ້ກາຍມາເປັນນິສັຍແລະການປະພຶດໃນຊີວິດຂອງພວກເຮົາ.

**<u>ຄຳຖາມ</u>**:

1. ບອກຊື່ບຸກຄົນທີ່ທ່ານຖືວ່າເປັນຜູ້ຍິ່ງໃຫຍ່? ມີລັກສະນະແນວໃດທີ່ເຮັດໃຫ້ບຸກຄົນເຫລົ່ານັ້ນເປັນຜູ້ຍິ່ງໃຫຍ່?

2. ຖ້າທ່ານເປັນນຶ່ງໃນຈຳນວນພວກສາວົກສິບສອງຄົນ, ທ່ານຈະຮູ້ສຶກແນວໃດເວລາພຣະເຢຊູຊົງປະກາດສິ່ງທີ່ໄດ້ອ່ານໃນ ມາຣະໂກ 10: 33-34? ຄວາມປາຖນາແລະສິ່ງຜັກດັນໃນຕົວພວກເຮົາ ຈະມີຜົນສະທ້ອນໃນການແປພຣະຄຳຂອງພຣະເຈົ້າວິທີໃດ?

3. ທ່ານຢາກໃຫ້ພຣະເຈົ້າເຮັດຫຍັງໃຫ້? ມີຫຍັງແດ່ທີ່ຊ້ອນຢູ່ເບື້ອງຫລັງຂອງການຂໍນັ້ນ?

4. ຄົນສ່ວນຫລາຍອະທິບາຍຄວາມຍິ່ງໃຫຍ່ໃນຣາຊອານາຈັກພຣະເຈົ້າວິທີໃດ?

5. ທ່ານພົບວ່າການຮັບໃຊ້ຜູ້ໃດເປັນເຣື່ອງຍາກ?

6. ໃນທີ່ທຳງານຂອງທ່ານທຸກວັນນີ້, ແມ່ນຫຍັງແດ່ເປັນເຄື່ອງວັດແທກຄວາມຍິ່ງໃຫຍ່? ອຳນາດແລະຕຳແໜ່ງ, ບຸກຄະລິກລັກສະນະ, ຫລື ການຮັບໃຊ້ຄົນອື່ນໆ?

*ສຄ*

# ບົດຮຽນທີ 10

## ສັນຍາລັກຂອງການພິພາກສາ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ມາຣະໂກ 11: 12-33

**ພູມຫລັງຂອງພຣະຄັມພີ**: ມາຣະໂກ 11

**ຈຸດສຳຄັນສຳລັບບົດຮຽນນີ້**: ພຣະເຢຊູຊົງສາບແຊ່ງຕົ້ນເດື່ອແລະຊຳຣະພຣະວິຫານ ເປັນສັນຍາລັກຂອງການພິພາກສາອິສຣາເອນ.

**ຄຳຖາມເພື່ອຄົ້ນຄວ້າ**: ຜົນຊີວິດຝ່າຍຈິດວິນຍານຂອງຂ້າພະເຈົ້າແລະຂອງຄຣິສຕະຈັກເປັນຢ່າງໃດ?

**ຈຸດປະສົງຂອງການສຶກສານີ້**: ເພື່ອຈະປະເມີນຜົນຝ່າຍຈິດວິນຍານຂອງຂ້າພະເຈົ້າແລະຂອງຄຣິສຕະຈັກ.

**ອ່ານລວບ**: ພຣະເຈົ້າມີພຣະປະສົງທີ່ຈະເຫັນໝາກຜົນໃນຊີວິດຂອງປະຊາກອນຂອງພຣະອົງ. ພຣະເຢຊູຊົງສາບແຊ່ງຕົ້ນເດື່ອເທດ ແລະຊຳຣະພຣະວິຫານ, ນີ້ເປັນສັນຍາລັກຂອງການຕັດສິນລົງໂທດຂອງພຣະເຈົ້າຕໍ່ການບໍ່ເກີດຜົນຂອງອິສຣາເອນ.

### ຄຳນຳ

ສາມປີທີ່ຜ່ານມາ ຂ້າພະເຈົ້າໄດ້ປູກຕົ້ນໝາກເດື່ອເທດໃນສວນ, ແລະຕົ້ນໝາກເດື່ອນັ້ນກໍໃຫຍ່ຂຶ້ນຢ່າງລວດເລວແລະມີໃບດົກງາມ. ແຕ່ໂຕກວາງມາກິນໃບຂອງມັນໃນຂະນະທີ່ໃບກຳລັງປົ່ງຂຶ້ນ ຂ້າພະເຈົ້າກໍຫງຸດຫງິດເພາະວ່າຕົ້ນເດື່ອເທດນີ້ບໍ່ເຄີຍມີໝາກຈັກໜ່ວຍເລີຍ.

ເວລາພຣະເຢຊູໄດ້ຊົງສາບແຊ່ງຕົ້ນເດື່ອເທດແລະຊຳຣະພຣະວິຫານ, ທັງສອງຢ່າງນີ້ເປັນການສະແດງເຖິງພຣະເຈົ້າປາຖນາເຫັນຜົນຈາກປະຊາກອນຂອງພຣະອົງ. ພຣະອົງຕ້ອງການຢາກເຫັນໝາກໄມ້ເກີດຜົນແລະເຫັນຄຣິສຕະຈັກຈະເຣີນກ້າວໜ້າ. ແຕ່ເວລາຕົ້ນໄມ້ແລະຄຣິສຕະຈັກບໍ່ເກີດຜົນ, ການພິພາກສາຈະຕິດຕາມມາ (ລູກາ 13: 6-9). ທັງສອງເຫດການນີ້ຕ້ອງການທີ່ຈະສອນເຣື່ອງດຽວກັນ.

ພຣະເຢຊູມີເວລາສັ້ນທີ່ຈະຢູ່ກັບພວກສາວົກ ວັນອາທິດກ່ອນນັ້ນພຣະເຢຊູໄດ້ຊົງສະເດັດເຂົ້າກຸງເຢຣູຊາເລັມໂດຍໄດ້ປະທັບເທິງຫລັງລໍໃນຖານະກະສັດຜູ້ຊົງມາໂຜດ(ມາຣະໂກ 11:7-10). ເມື່ອຄ່ຳຫລາຍແລ້ວ, ພຣະເຢຊູໄດ້ສຳຣວດເບິ່ງຮອບພຣະວິຫານ, ບາງທີພຣະອົງຈະຊອກຫາໝາກຜົນດ້ານຈິດວິນຍານ, ຫລັງຈາກນັ້ນພຣະອົງກໍຊົງອອກໄປພັກຄ້າງຄືນທີ່ບ້ານເບັດທານີ.

## 1. <u>ພຣະເຢຊູຊົງຊອກຫາໝາກໄມ້:</u> ( ມາຣະໂກ 11:11-14)

ໃນຂະນະທີ່ພຣະເຢຊູຊົງສະເດັດເຂົ້າໄປກຸງເຢຣູຊາເລັມ ພຣະອົງໄດ້ເຫັນຕົ້ນເດື່ອເທດແຕ່ໄກຊຶ່ງມີໃບດົກໜາດີ, ພໍເຂົ້າໄປເຖິງຕົ້ນໄມ້ພຣະອົງກໍຊົງພົບວ່າຕົ້ນເດື່ອນັ້ນບໍ່ມີໝາກ; ພຣະອົງຈຶ່ງຊົງສາບແຊ່ງຕົ້ນເດື່ອນັ້ນ. (ເຖິງແມ່ນວ່າບໍ່ແມ່ນຣະດູທີ່ຕົ້ນເດື່ອຈະເກີດໝາກເພາະຍັງອີກປະມານສອງເດືອນ, ແຕ່ຕົ້ນເດື່ອສ່ວນຫລາຍຈະມີໝາກນ້ອຍຫລັງຈາກທີ່ໃບປົ່ງແລ້ວ).

ການສາບແຊ່ງຕົ້ນເດື່ອເທື່ອນີ້ ແມ່ນກົງກັນຂ້າມກັບສິ່ງອັສຈັນອື່ນໆທີ່ພຣະເຢຊູໄດ້ຊົງກະທຳມາ. ບາງຄົນເຫັນວ່າມັນບໍ່ເປັນຕາມພຣະລັກສະນະຂອງພຣະເຢຊູ ທີ່ຈະຕ້ອງການເຫັນຕົ້ນເດື່ອເທດເກີດຜົນນອກຣະດູການ, ມີຜົນກະທົບສາມຢ່າງຈາກການສາບແຊ່ງຕົ້ນເດື່ອນີ້.

1. ພຣະເຢຊູບໍ່ມີເວລາສາມເດືອນທີ່ຈະລໍຖ້າໃຫ້ໝາກເດື່ອເທດອອກຜົນ. ພຣະອົງມີເວລາໜ້ອຍກວ່ານຶ່ງອາທິດກ່ອນການສິ້ນພຣະຊົນ. ພຣະອົງໄດ້ຊົງສະແດງໃຫ້ພວກສາວົກເຫັນໂດຍການໃຊ້ຕົ້ນໄມ້ທີ່ຄວນຈະມີໝາກແຕ່ກັບບໍ່ມີໝາກ. ການສາບແຊ່ງຕົ້ນເດື່ອເປັນສ່ວນປະກອບກັບການຊຳຣະພຣະວິຫານ. ໃນຂະນະທີ່ວິຫານນັ້ນມີງານມາກມາຍທີ່ເຮັດຢູ່ແຕ່ບໍ່ມີຜົນດ້ານຈິດວິນຍານ. ພຣະເຈົ້າປາຖນາໃຫ້ພວກເຮົາດຳເນີນຊີວິດໃຫ້ເກີດຜົນຕລອດໄປ. ເມື່ອພວກເຮົາບໍ່ມີຜົນໃນຊີວິດ, ພວກເຮົາກໍບໍ່ໄດ້ເຮັດຕາມພຣະປະສົງຂອງພຣະອົງ.

2. ຕົ້ນເດື່ອເທດເປັນຕົວແທນຂອງສາສນາຢູດາຍ. ພຣະເຈົ້າຊົງໄດ້ໃຫ້ໂອກາດຊົນຊາດອິສຣາເອນເພື່ອນຳຄົນທັງຫລາຍໄດ້ມາຮູ້ພຣະອົງຜ່ານຊີວິດພວກເຂົາ (ປະຖົມມະການ 12:3; ຢຣມ 8:13; ໂຮເສອາ 9:10; ມີກາ 7:1; ນາຮູມ 3:12; ລູກາ 13:6-9). ອ້າງຕາມພຣະຄັມພີເດີມແລ້ວ, ຊົນຊາດອິສຣາເອນເປັນຕົ້ນເດື່ອທີ່ບໍ່ມີໝາກຜົນ.

3. ຕົ້ນເດື່ອເທດເປັນຄຳປຽບທຽບສຳລັບໄພ່ພົນຂອງພຣະເຈົ້າ; ເພາະສະນັ້ນເປັນການສົມຄວນທີ່ຈະມີຜົນເຖິງຈະນອກຣະດູການ. ພຣະເຈົ້າຊົງຕ້ອງການເຫັນຜົນຝ່າຍວິນຍານໃນຊີວິດພວກເຮົາຕລອດເວລາ. ໃນໂຢຮັນ 15:1-8, ພຣະເຢຊູຊົງໃຊ້ເຄືອອະງຸ່ນເພື່ອສອນພວກສາວົກໃຫ້ຮູ້ວ່າພຣະອົງນັ້ນແຫລະເປັນເຄືອອະງຸ່ນແທ້, ແລະສາວົກນັ້ນເປັນກິ່ງ. ຄຳສອນນີ້ບອກໃຫ້ຮູ້ວ່າ ພຣະເຢຊູຕ້ອງການໃຫ້ຜູ້ທີ່ຕິດຕາມພຣະອົງເກີດຜົນສເມີໄປ. ພຣະເຈົ້າຊົງໃຫ້ເກີດຜົນຜ່ານພວກເຮົາ; ຖ້າພຣະອົງຊົງສະຖິດນຳເຮົາ ແລະພວກເຮົາຢູ່ໃນພຣະອົງຜົນກໍຈະເກີດຂຶ້ນ.

ຖ້າພວກເຮົາຕັ້ງໝັ້ນໃນຕົວເຮົາເອງ, ແລ້ວຈະເຕັມໄປດ້ວຍສັນດານມະນຸດ(ຄາລາເຕັຽ 5:19-21; ມາຣະໂກ 11:18). ການປະພຶດຊົ່ວຮ້າຍ, ການຂ້າກັນ, ການກຽດຊັງ, ຄວາມເຫິງສາ, ຄວາມຄຽດແຄ້ນດັ່ງພວກຜູ້ນຳສາສນາຢູດາຍໄດ້ກະທຳຊຶ່ງເຫັນໃນມາຣະໂກ 11: 27-33.

## 2. <u>ພຣະເຢຊູຊົງສຳແດງໃຫ້ເຫັນຣາຄາຂອງການບໍ່ເກີດຜົນ:</u> (ມາຣະໂກ 11:13-21)

ທຸກວັນນີ້ຜູ້ເຊື່ອຫລາຍຄົນບໍ່ມີຄວາມກະຕືລືລົ້ນແລະບໍ່ໄດ້ມອງເຫັນວ່າເຂົາເຈົ້າຈະຕ້ອງໄປເກີດຜົນ; ຄົນທີ່

ຍັງໄປໂບດກໍມັກຈະເຮັດຕາມຫລັກການຂອງສາສນາຊື່ໆ; ດັ່ງນັ້ນບາງເທື່ອສາສນາກໍບໍ່ມີຄວາມໝາຍແລະບໍ່ມີໝາກຜົນໃນຊີວິດ. ດ້ວຍວ່າຜູ້ເຊື່ອບາງຄົນກໍລືມໄປວ່າພຣະເຈົ້າຕ້ອງການໃຫ້ເຂົາມີການສຳຜັດຕິດພັນກັບພຣະອົງ ເໝືອນກັບຕົ້ນອະງຸ່ນແລະກິ່ງທີ່ຈະຕ້ອງຕິດສນິດກັນເພື່ອຈະໄດ້ເກີດຜົນ. ພຣະເຈົ້າບໍ່ໄດ້ພໍໃຈນຳການມາໂບດເທົ່ານັ້ນ ພຣະອົງຢາກເຫັນຜົນປາກົດໃນຊີວິດຈາກແຕ່ລະບຸກຄົນ; ເມື່ອພວກເຮົາຫາກຕິດສນິດກັບພຣະເຢຊູແລະຊີວິດຂອງພຣະອົງຈະປາກົດຜ່ານຊີວິດຂອງພວກເຮົາແລ້ວພວກເຮົາທັງຫລາຍຈະເກີດຜົນທາງຈິດວິນຍານ.

ພຣະເຢຊູຊົງເຂົ້າໄປໃນພຣະວິຫານ ແລະເລີ້ມຂັບໄລ່ຄົນທັງຫລາຍທີ່ຊື້ຂາຍຢູ່ໃນເຂດຂອງຄົນຕ່າງຊາດ. ເນື່ອງຈາກຜູ້ນະມັສການຕ້ອງເດີນທາງມາແຕ່ໄກ ສັດຕ່າງໆ ທີ່ພວກເຂົາໄດ້ນຳມາກໍບໍ່ມີຄຸນພາບດີພໍສຳລັບການຖວາຍບູຊາ; ຜູ້ນຳທາງສາສນາຈຶ່ງອະນຸຍາດໃຫ້ມີການຂາຍສັດຊຶ່ງໃຊ້ໃນການຖວາຍບູຊາ. ຫລາຍກວ່ານັ້ນພວກເຂົາຍັງອະນຸຍາດໃຫ້ມີຜູ້ແລກປ່ຽນເງິນຊຶ່ງໃຊ້ໃນການຖວາຍເຂົ້າພຣະວິຫານ; ການໃຊ້ເຂດຂອງຄົນຕ່າງຊາດໃນພຣະວິຫານເປັນບ່ອນຊື້ຂາຍ ກໍຍ້ອນວ່າທີ່ນັ້ນເປັນບ່ອນດຽວທີ່ຄົນຕ່າງຊາດເຂົ້າໄດ້. ບ່ອນຄ້າຂາຍນີ້ໄດ້ສ້າງຄວາມລຳບາກຕໍ່ຄົນເຮັບເຣີແລະຄົນຕ່າງຊາດຈະເຂົ້າຈະມານະມັສການພຣະເຈົ້າທີ່ວິຫານ .

ພຣະເຢຊູໄລ່ສັດແລະຄົນທີ່ແລກປ່ຽນເງິນອອກຈາກພຣະວິຫານເປັນສັນຍາລັກເຖິງການພິພາກສາຂອງພຣະເຈົ້າ ຕໍ່ສາສນາຢູດາຍແລະການນະມັສການທີ່ໄຮ້ປໂຍດຂອງພວກເຂົາ. ພຣະເຢຊູປະກາດວ່າການກະທຳຂອງພວກເຂົາໄດ້ຜິດຈາກພຣະປະສົງຂອງພຣະເຈົ້າ ເພາະເຂດນັ້ນຂອງວິຫານເປັນບ່ອນສຳລັບການອະທິຖານຂອງຄົນທົ່ວໄປຊຶ່ງຮວມທັງຄົນຕ່າງຊາດ.

ໂບດເຮົາທຸກວັນນີ້ເປັນອຸປສັກສຳລັບຄົນຂ້າງນອກທີ່ຈະມາເຖິງພຣະເຈົ້າບໍ່? ຖ້າເປັນດັ່ງນັ້ນ ພວກເຮົາອາດມີອັນຕະລາຍເພາະຈະຕ້ອງຖືກການພິພາກສາຈາກພຣະເຈົ້າ?

ບາງຄົນອ່ານ ມາຣະໂກ 11:17 ("ຖ້ຳໂຈນ") ວ່າເປັນການຫ້າມບໍ່ໃຫ້ຊື້ຂາຍໃນໂບດ, ແຕ່ກໍເປັນການແນະນຳທີ່ດີກ່ຽວກັບການບໍ່ໃຫ້ຊື້ຂາຍໃນທີ່ນະມັສການພຣະເຈົ້າ. ຄວາມຈິງແລ້ວ, ໃນພຣະຄຳຕອນນີ້ ບໍ່ໄດ້ເວົ້າເຣື່ອງການລັກການປຸ້ນທີ່ເກີດຂຶ້ນໃນຕຶກ. ຖ້ຳເປັນບ່ອນທີ່ພວກໂຈນເຂົ້າລີ້ ແລະບ່ອນວາງແຜນເພື່ອປຸ້ນເທື່ອຕໍ່ໄປ.

ພຣະເຢຊູຊົງສອນໃຫ້ຮູ້ວ່າພວກເຮົາຈະໃຊ້ຊີວິດຢູ່ຢ່າງຊົ່ວຊ້າແຕ່ວັນຈັນເຖິງວັນເສົາ ແລະທຳທ່າເປັນຜູ້ບໍຣິສຸດໃນວັນອາທິດນັ້ນບໍ່ໄດ້; ເພາະສິ່ງນັ້ນເປັນຄວາມບາບທີ່ເຊື່ອມໄປຫາຄົນທີ່ມີຈຸດປະສົງທີ່ຈະໃຫ້ກຽດແລະນັບຖືພຣະເຈົ້າ. ພຣະເຢຊູຮູ້ວ່າພວກປະໂຣຫິດແລະຜູ້ນຳສາສນາໄດ້ເຮັດໃຫ້ພຣະວິຫານເສື່ອມໂຊມເພາະເຫັນແກ່ຜົນປໂຍດສ່ວນຕົວ; ດັ່ງນັ້ນພວກເຂົາຈຶ່ງວາງແຜນທີ່ຈະທຳລາຍຂ້າພຣະອົງ (ມາຣະໂກ 11:18).

ເມື່ອພວກເຮົາເຂົ້າໄປໃນໂບດເພື່ອນະມັສການພຣະເຈົ້າ ພວກເຮົາຕ້ອງຕຽມຈິດໃຈໃສ່ພຣະເຈົ້າແລະຫາວິທີທີ່ຈະມີຄວາມໃກ້ຊິດກັບພຣະອົງ ເມື່ອໃດພວກເຮົາເອົາລາຍການອື່ນໆມາແທນພຣະເຈົ້າຜູ້ຊົງຮັກ, ພວກເຮົາ

ຈະກາຍເປັນໂບດທີ່ບໍ່ເກີດຜົນ. ຄຣິສຕຽນຫລາຍຄົນໄປໂບດເປັນປະຈຳແຕ່ຜິດເປົ້າໝາຍ; ພຣະເຈົ້າຊົງເອີ້ນໃຫ້ຜູ້ເຊື່ອທຸກຄົນໄດ້ມີຜົນສະທ້ອນກັບຊີວິດຜູ້ອື່ນດ້ວຍພຣະຄຸນແລະຄວາມຮັກຂອງພຣະອົງທຸກວັນ.

### 3. <u>ພຣະເຢຊູຊົງເປີດເຜີຍເລື່ອງການເກີດຜົນ:</u> (ມາຣະໂກ 11: 19-28)

ພໍເຖິງເວລາຄ່ຳມາ, ພຣະເຢຊູແລະພວກສາວົກກໍພາກັນອອກໄປຈາກເມືອງເຢຣູຊາເລັມ (ຂໍ້ 11:19), ອາດຈະໄປທີ່ເບັດທານີ. ໃນວັນອັງຄານຕອນເຊົ້າ, ໃນຂະນະທີ່ພຣະເຢຊູກັບພວກສາວົກຍ່າງຜ່ານຕົ້ນເດື່ອເທດ, ພວກເພິ່ນໄດ້ເຫັນຕົ້ນເດື່ອເທດນັ້ນຫ່ຽວແຫ້ງແລະຕາຍໄປ(ຂໍ້ 11:20). ເປໂຕໄດ້ເວົ້າກັບພຣະເຢຊູເຣື່ອງຕົ້ນໄມ້ທີ່ຫ່ຽວແຫ້ງ (11: 21). ພຣະເຢຊູໄດ້ຊົງກ່າວຢ່າງສັ້ນໆວ່າ "ຈົ່ງມີຄວາມເຊື່ອໃນພຣະເຈົ້າ" (11: 22).

ເມື່ອຄິດເຖິງຄຳເວົ້າຂອງພຣະອົງກ່ຽວກັບການທຳລາຍກຸງເຢຣູຊາເລັມ ແລະພຣະວິຫານ ( ມະຣາໂກ 13:2; ລູກາ 19:42-44) ພຣະເຢຊູບອກພວກສາວົກວ່າຈົ່ງຝັງຮາກຂອງຄວາມພົ້ນແລະຄວາມເຊື່ອໄວ້ໃນພຣະເຈົ້າ, ບໍ່ແມ່ນໃນໂລກນີ້. ພວກໂຣມັນອາດຈະທຳລາຍກຸງເຢຣູຊາເລັມແລະພຣະວິຫານ, ແຕ່ຄວາມເຊື່ອໃນພຣະເຈົ້າຈະຍັ້ງຍືນຢູ່ສືບໄປເປັນນິດ.

ດ້ວຍຄວາມເຊື່ອ, ພວກເຮົາໄດ້ຕິດສນິດກັບພຣະເຈົ້າ (ມາຣະໂກ 11:22-23), ຜູ້ຊົງໃຫ້ຜົນເກີດຜ່ານພວກເຮົາ. ຜົນເກີດຂຶ້ນຈາກການອະທິຖານໃຫ້ນ້ຳພຣະທັຍຂອງພຣະເຈົ້າສຳເຣັດ, ແລະເຊື່ອວ່າສິ່ງໃດທີ່ພວກເຮົາອ້ອນວອນຂໍນັ້ນ ພຣະເຈົ້າຊົງກຳລັງຈະທຳໃຫ້ສຳເຣັດ (ຂໍ້11:24). ເມື່ອພວກເຮົາອະທິຖານຢູ່ຖ້າເຮົາມີເຣື່ອງກັບຜູ້ໃດຈົ່ງຍົກໂທດໃຫ້ເຂົາ(ຂໍ້11:25). ບໍ່ວ່າຈະເປັນເຣື່ອງສ່ວນຕົວຫລືເຣື່ອງໂບດ ພວກເຮົາຈະຕ້ອງອະພັຍໃຫ້ກັນແລະກັນ ແລະມອບຜູ້ທີ່ເຮັດໃຫ້ເຮົາເຈັບປວດໄວ້ກັບພຣະເຈົ້າ. ໂຢຮັນ 15:1-8 ສອນວິທີສຳລັບການເກີດຜົນໃນຊີວິດຜູ້ເຊື່ອ.

### <u>ຄວາມໝາຍແລະການປະຕິບັດ</u>

ພຣະເຈົ້າຕ້ອງການໃຫ້ຜູ້ທີ່ຕິດຕາມພຣະອົງເຂັ້ມແຂງແລະເກີດຜົນ ຕົ້ນເດື່ອເທດທີ່ຖືກສາບແຊ່ງເບິ່ງຄືມີຊີວິດແຕ່ບໍ່ມີໝາກ. ຫລາຍກວ່ານັ້ນສາສນາຊຶ່ງມີແຕ່ພິທີແລະຫລັກການບໍ່ໄດ້ນຳຄົນມາຫາພຣະເຈົ້າ. ພວກເຮົາເປັນຜູ້ຕິດຕາມພຣະຄຣິດ, ພວກເຮົາຄວນພິສູດເບິ່ງຊີວິດຂອງຕົນແລະຊີວິດຂອງທຸກຄົນໃນໂບດ; ພວກເຮົາຈະຕ້ອງຮ້ອນຮົນທາງຈິດວິນຍານແລະບຳຣຸງຄົນອື່ນດ້ວຍ. ການສຳເຣັດຜົນມາຈາກພຣະເຈົ້າຊຶ່ງທຳງານຜ່ານພວກເຮົາ. ພວກເຮົາຕ້ອງມີຄວາມສັມພັນກັບພຣະຄຣິດຕລອດເວລາ. ຄວາມເຊື່ອຕ້ອງຢັ່ງຮາກຢູ່ໃນພຣະເຈົ້າ, ບໍ່ແມ່ນໃນມະນຸດ. ພຣະເຈົ້າຕ້ອງການຜົນໃນເຮົາແລະຜ່ານເຮົາ. ພຣະອົງຕ້ອງການຜົນໃນໂບດເຮົາແລະຜ່ານໂບດເຮົາ.

**ຄຳຖາມ:**

1. ຖ້າພຣະເຢຊູທາງກາວດເບິ່ງຕົວທ່ານພຣະອົງຈະເຫັນຜົນໃນຊີວິດທ່ານບໍ່? ທ່າທີ, ອຸປະນິສັຍ, ແລະ ການກະທຳຂອງທ່ານສະແດງໃຫ້ຄົນອື່ນເຫັນວ່າພຣະເຈົ້າຊົງພຣະຊົນຢູ່ໃນຕົວທ່ານບໍ່?

2. ມີຫລັກຖານວ່າພຣະເຈົ້າໄດ້ທຳງານໃນໂບດຂອງທ່ານບໍ່? ໂບດຂອງທ່ານມີຄຸນຄ່າ, ທ່າທີ, ແລະ ຄວາມສັມພັນທີ່ແຕກຕ່າງກັບກຸ່ມຂອງຊາວໂລກແລະສັງຄົມອື່ນໆບໍ່?

3. ຄວາມເຊື່ອຂອງທ່ານໄດ້ຢັ່ງຮາກຢູ່ທີ່ພຣະເຈົ້າບໍ່? ຫລືຕັ້ງໝັ້ນຢູ່ກັບຄວາມຮູ້ສຶກ ຫລືກັບຄົນ ຫລືກັບ ກິຈການໃນໂບດ? ໂບດຂອງທ່ານຊ່ວຍຄົນໃຫ້ເຫັນຄວາມຍິ່ງໃຫຍ່ຂອງພຣະເຈົ້າບໍ່, ຫລືວ່າເນັ້ນແຕ່ ຄວາມຍິ່ງໃຫຍ່ຂອງໂບດ?

4. ທ່ານໄດ້ໃຊ້ເວລາອ່ານພຣະຄັມພີທຸກວັນບໍ່, ໄດ້ຟັງສຽງຂອງພຣະເຈົ້າວ່າຊົງເວົ້າຫຍັງກັບຊີວິດຂອງ ທ່ານແລະພຣະອົງຕ້ອງການຈະກະທຳຫຍັງຜ່ານຊີວິດຂອງທ່ານ? ທ່ານໄດ້ຕິດສນິດກັບພຣະອົງ ດ້ວຍການອະທິຖານ, ດ້ວຍການໂອ້ລົມ, ແລະຍອມຮັບຮູ້ວ່າພຣະເຈົ້າຊົງກຳລັງທຳງານຢູ່ໃສ?

5. ທ່ານໄດ້ດຳລົງຊີວິດໂດຍຮັບຮູ້ວ່າພຣະເຈົ້ານັ້ນເປັນຜູ້ປະເມີນຜົນຝ່າຍຈິດວິນຍານຂອງທ່ານເພື່ອຈະ ໃຫ້ຊີວິດແກ່ຄົນອື່ນໆ? ທ່ານໄດ້ໃຊ້ຊີວິດເໝືອນຜູ້ທີ່ເຂົ້າໃຈວ່າພຣະເຈົ້າຊົງຫວັງທີ່ຈະເຫັນຊີວິດເກີດ ຜົນທີ່ຈະເປັນຕົວຢ່າງເຣື່ອງຄວາມຈິງ, ຊີວິດ, ແລະຄຸນຄ່າຂອງພຣະເຈົ້າສຳລັບຄົນທີ່ທ່ານພົບພໍ້ບໍ່?

*ສຄ*

# ບົດຮຽນທີ 11
## <u>ຊີງທຳນວາຍ, ຄຳສັນຍາ, ຂໍ້ອວດ</u>

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມາຣະໂກ 14: 12-31

**ພູມຫລັງຂອງພຣະຄັມພີ:** ມາຣະໂກ 14: 1-31

**ຈຸດສຳຄັນຂອງບົດຮຽນນີ້:** ໃຫ້ເຂົ້າໃຈເຖິງຄຳສັນຍາໃໝ່, ສາວົກບໍ່ໄດ້ເຮັດຕາມ.

**ຄຳຖາມເພື່ອການຄົ້ນຄວ້າ:** ເຮົາຈະເຮັດແນວໃດເພື່ອເຮົາຈະບໍ່ມີຈິດວິນຍານທີ່ຈອງຫອງບໍ່ເຮັດຕາມ?

**ຈຸດປະສົງຂອງບົດຮຽນ:** ເພື່ອເຮົາຈະຮຽນຮູ້ວ່າ ຈະບໍ່ມີຈິດວິນາຍານທີ່ຈອງຫອງ.

### <u>ບົດນຳ</u>

ບົດຮຽນນີ້ຍາວກວ່າປົກກະຕິ, ທັງໝົດມີຫ້າຫົວຂໍ້ທີ່ຈະຕ້ອງເວົ້າກັນ, ດັ່ງນັ້ນຄຣູແລະນັກຮຽນຈະຕ້ອງຈັດເວລາໃຫ້ຖືກຕ້ອງ ເພື່ອຈະໃຫ້ຈົບບົດຮຽນ ຫລືຫາກບໍ່ສາມາດຈົບໄດ້ພາຍໃນວັນດຽວທ່ານກໍສາດມາແບ່ງເປັນສອງວັນອາທິດໄດ້.

### 1. <u>**ຮັກແລະການທໍຣະຍົດ**:</u> (ມາຣະໂກ 14:1-10)

ສອງມື້ກ່ອນໜ້າຈະເຖິງວັນປັສຄາກິນເຂົ້າຈີ່ບໍ່ມີເຊື້ອແປ້ງນັ້ນ ໄດ້ມີພວກປະໂຣຫິດຕົນໃຫຍ່ແລະພວກນັກທັມຊອກຫາທາງຈັບພຣະເຢຊູໄປປະຫານ ພວກເຂົາວາງກົນອຸບາຍຕ່າງໆ ແຕ່ເຂົາໄດ້ພະຍາຍາມບໍ່ເຮັດການນີ້ໃນວັນເທສການກິນເຂົ້າຈີ່ບໍ່ມີເຊື້ອແປ້ງ ເພາະເຂົາຢ້ານວ່າປະຊາຊົນຈະແຕກຕື່ນຮູ້ເຫັນແຜນການອັນຊົ່ວຂອງພວກເຂົາ. ເວລານັ້ນພຣະເຢຊູຊົງປະກາດພຣະທັມແລະພັກເຊົາທີ່ບ້ານເບັດທານີ ທີ່ບໍ່ຫ່າງໄກຈາກກຸງເຢຣູຊາເລັມ, ເຮືອນຫລັງນີ້ເປັນເຮືອນຂອງ ນາງມາທາ, ນາງມາຣີອາ ແລະລາຊະໂຣ. (ອີງຕາມໂຢຮັນ 12). ສ່ວນມາຣະໂກ ບອກວ່າເປັນເຮືອນຂອງຊີໂມນຄົນຂີ້ທູດ(ມາຣະໂກ 14:3). ເຣື່ອງນີ້ພວກສາສນາກໍບໍ່ແນ່ໃຈວ່າເປັນເຮືອນຜູ້ໃດແທ້, ແຕ່ຈະເປັນເຮືອນຜູ້ໃດນັ້ນບໍ່ສຳຄັນເພາະເຮົາບໍ່ໄດ້ຄົ້ນຄວ້າຫລືສຶກສາເຣື່ອງເຮືອນແຕ່ຈະສຶກສາເຣື່ອງຄວາມຮັກຂອງພຣະເຢຊູ ແລະການທໍຣະຍົດຂອງສາວົກຄົນນຶ່ງໃນພຣະທັມມາຣະໂກໃນເວລານີ້.

ໃນຂະທີ່ພຣະເຢຊູຮັບປທານອາຫານທີ່ເຮືອນຂອງຊີໂມນຄົນຂີ້ທູດນັ້ນ ໄດ້ມີຍິງຜູ້ນຶ່ງໄດ້ເອົານ້ຳມັນຫອມຣາຄາແພງມາຫົດສົງພຣະເຢຊູ (ຂໍ້ 3). ສ່ວນພຣະທັມໂຢຮັນ 12 ໄດ້ກ່າວເຖິງເຣື່ອງຄ້າຍຄືກັນ ແຕ່ແມ່ນເຣື່ອງຂອງນາງມາທາ, ນາງມາຣີອາ ແລະລາຊະໂຣ ທີ່ໄດ້ກ່າວມາຂ້າງເທິງ.

ໃນຂະນະທີ່ຍິງຄົນນີ້ໄດ້ຫົດສົງທີ່ພຣະສຽນ (ຫົວ) ຂອງພຣະອົງນັ້ນ ມີລາງຄົນໃນພວກສາວົກເຄືອງໃຈຈຶ່ງສົນທະນາກັນວ່າ "*ເຫດໃດຈຶ່ງເຮັດໃຫ້ນ້ຳມັນນີ້ເສັຽລ້າ ໆ*" (ຂໍ້ 4). ເຣື່ອງນີ້ອາດຈະມີຄວາມໝາຍວ່າການກະທຳ

ຂອງນາງບໍ່ມີປໂຍດ ຍິ່ງໄປກວ່ານັ້ນເຂົາຍັງບໍ່ເຫັນວ່າພຣະເຢຊູສຳຄັນແຕ່ປະການໃດ. ສາວົກລາງຄົນເວົ້າຕໍ່ໄປວ່າ " *ຖ້າຂາຍນ້ຳມັນນີ້ຄົງຈະໄດ້ເງິນກວ່າສາມຮ້ອຍເດນາຣິອົນ ແລ້ວຈະແຈກໃຫ້ຄົນຍາກຈົນກໍໄດ້* " (ຂໍ້ 5). ການທີ່ເຂົາເວົ້າເຊັ່ນນີ້ເພາະເຂົາບໍ່ເຂົ້າໃຈເຖິງເຣື່ອງທີ່ຈະເກີດຂຶ້ນໃນວັນຕໍ່ໄປ, ດ້ວຍເຫດນີ້ພຣະເຢຊູ ຈຶ່ງເວົ້າໃຫ້ເຂົາຟັງຈາກຂໍ້ 6-9.

ຕໍ່ມາຊາຕານໄດ້ເຂົ້າສິງໃຈ ຢູດາ ສາວົກຜູ້ນຶ່ງໃນຈຳນວນສາວົກຂອງພຣະອົງ, ລາວອອກໄປຫາພວກປະໂຣຫິດຕົນໃຫຍ່ເພື່ອໃຫ້ເຂົາຈັບພຣະເຢຊູ. ເຮົາບໍ່ຮູ້ວ່າຢູດາໄດ້ເປີດໂອກາດໃຫ້ຊາຕານຍາມໃດ? ບໍ່ຮູ້ວ່າຢູດາມີຄວາມໂກດເຄືອງ ຫລືເສັຽໃຈໃຫ້ພຣະເຢຊູແນວໃດ? ຕລອດສາມປີທີ່ຜ່ານມາກໍບໍ່ໄດ້ຍິນວ່າລາວຜິດໃນເຣື່ອງອັນໃດເລີຍ ອາດຈະເປັນເພາະວ່າລາວຂາດຄວາມລະມັດລະວັງທີ່ພຣະເຢຊູໄດ້ເຕືອນໄວ້ໃນ ມາຣະໂກ 13: 32-37 ເຖິງສາມເທື່ອແລ້ວ. ລາວກາຍເປັນຄົນທໍຣະຍົດພຣະເຢຊູໄປຢ່າງບໍ່ຮູ້ສຶກຕົວ, ເຣື່ອງນີ້ສອນເຮົາວ່າເຮົາທັງຫລາຍຈົ່ງມີສະຕິລະວັງຕົວຢູ່ທຸກເວລາ ຢ່າເປີດໃຈຂອງເຮົາໃຫ້ຊາຕານເດັດຂາດ.

## 2. <u>**ພົ້ນດ້ວຍພຣະໂລຫິດ**</u>: (ມາຣະໂກ 14: 12)

ມາຣະໂກໄດ້ບັນທຶກຕອນສຳຄັນຂອງງານປັສຄາກິນເຂົ້າຈີ່ບໍ່ມີເຊື້ອແປ້ງນັ້ນມີຄວາມເປັນມາດັ່ງນີ້: "

1. *ກະສັດຟາຣາໂອຈຶ່ງຊົງຮັບສັ່ງໃຫ້ໂມເຊກັບອາໂຣນເຂົ້າເຝົ້າໃນກາງຄືນນັ້ນຊົງບອກວ່າ, "ເຈົ້າທັງສອງກັບຊາວອິສຣາເອນຈົ່ງອອກໄປເສັຽຈາກປະເທດຂອງເຮົາ ຈົ່ງໄປບົວລະບັດພຣະຜູ້ເປັນເຈົ້າຕາມທີ່ພວກເຈົ້າໄດ້ຂໍຮ້ອງນັ້ນ ໃຫ້ເອົາຝູງແກະແບ້ ແລະຝູງງົວຄວາຍຂອງພວກເຈົ້າໄປດ້ວຍ ຈົ່ງໄປເສັຽໃຫ້ອ້ອນວອນຂໍພອນສຳລັບເຮົາດ້ວຍ" ປະຊາຊົນເອຢິບໄດ້ບັງຄັບໃຫ້ຊາວອິສຣາເອນໄປຈາກປະເທດໂດຍໄວ ພວກເຂົາເວົ້າວ່າ, "ພວກເຮົາຈະຕ້ອງຕາຍກັນໝົດຖ້າພວກເຈົ້າຢູ່ນີ້" ດັ່ງນັ້ນ ຊາວອິສຣາເອນຈຶ່ງໄດ້ເອົາແປ້ງດິບທີ່ຍັງບໍ່ໄດ້ໃສ່ເຊື້ອກັບຮາງນວດແປ້ງທີ່ໃສ່ຜ້າແບກໄປ* " (ອົບພະຍົບ 12:31-34).

2. "*ຈົ່ງຮັບປະທານເຂົ້າຈີ່ບໍ່ໃສ່ເຊື້ອແປ້ງໃຫ້ຄົບເຈັດວັນ ຢ່າໃຫ້ມີເຂົ້າຈີ່ໃສ່ເຊື້ອແປ້ງໃນແຜ່ນດິນຂອງພວກທ່ານໃນວັນນັ້ນ ຈົ່ງອະທິບາຍໃຫ້ບຸດຂອງທ່ານຟັງວ່າທີ່ໄດ້ຈັດພິທີລະນຶກເຖິງນີ້ຂຶ້ນກໍເນື່ອງຈາກວ່າພຣະຜູ້ເປັນເຈົ້າໄດ້ຊ່ອຍເຫລືອເຮົາ ຄາວເມື່ອເຮົາໄດ້ອົບພະຍົບອອກຈາກປະເທດເອຢິບ ງານສລອງນີ້ຈະເປັນເໝືອນຕຳໜິທີ່ໝາຍໄວ້ໃນມືຂອງພວກທ່ານ ຫລືເປັນອະນຸສອນຂອງການລະນຶກເຖິງຢູ່ເທິງໜ້າຜາກຂອງພວກທ່ານ ເພື່ອວ່າພວກທ່ານຈະໄດ້ກ່າວເຖິງພຣະທັມຂອງພຣະຜູ້ເປັນເຈົ້າສືບຕໍ່ໄປ ເພາະພຣະອົງໄດ້ຊົງນຳພວກທ່ານອອກຈາກເອຢິບດ້ວຍຣິດທານຸພາບອັນຍິ່ງໃຫຍ່ ທ່ານທັງຫລາຍຈົ່ງຈັດງານສລອງທຸກໆປີເມື່ອເຖິງກຳນົດ*" (ອົບພະຍົບ 13:7-10).

ສລຸບແລ້ວແມ່ນການຈາຣຶກເຖິງພຣະຄຸນພຣະເຈົ້າທີ່ໄດ້ປົດປ່ອຍເຂົາຈາກການເປັນຂ້າທາດທີ່ປະເທດເອຢິບ ຫລືບໍ່ໃຫ້ລືມຕົວວ່າເຂົາເປັນໃຜມາຈາກໃສ? ໃຜໄດ້ຊ່ອຍເຂົາໃຫ້ພົ້ນ? ໂມເຊໄດ້ສັ່ງເຂົາໃຫ້ພາກັນສເລີມສລອງການເປັນເອກຣາດຂອງເຂົາໂດຍການກິນເຂົ້າຈີ່ບໍ່ມີເຊື້ອແປ້ງ. ດ້ວຍເຫດນີ້ພວກສາວົກຂອງພຣະເຢຊູຈຶ່ງຖາມພຣະເຢຊູໃນເຣື່ອງນີ້. " *ເມື່ອວັນຕົ້ນເທສການກິນເຂົ້າຈີ່ບໍ່ມີເຊື້ອແປ້ງ ເຖິງເວລາເຂົາເຄີຍຂ້າລູກແກະສຳລັບປັສຄານັ້ນ ພວກສາວົກມາທູນຖາມພຣະອົງວ່າ, "ຈະໃຫ້ພວກຂ້ານ້ອຍໄປຈັດແຈງປັສຄາໃຫ້ທ່ານຮັບປະທານບ່ອນໃດ*" (ມາຣະໂກ 14:12).

## 3. <u>ການຈັດຕຽມ ແລະການທຳນວາຍ:</u> (ມາຣະໂກ 14:13-21)

ພຣະເຢຊູໄດ້ສັ່ງສາວົກສອງຄົນໃຫ້ຈັດຕຽມສິນປັສຄາເຫັນຢ່າງແຈ້ງດັ່ງນີ້; 1. ເມື່ອເຂົ້າໄປໃນກຸງຈະພົບຊາຍຄົນນຶ່ງຖືໝໍ້ນ້ຳ ແລ້ວໃຫ້ຕາມຊາຍນັ້ນໄປ (ຂໍ້ 13). 2. ເມື່ອໄປຮອດເຮືອນໃຫ້ຖາມວ່າ ຫ້ອງຮັບແຂກສຳລັບເຮົາທີ່ເຮົາຈະກິນປັສຄາກັບພວກສາວົກຂອງເຮົາໄດ້ນັ້ນຢູ່ທີ່ໃດ? (ຂໍ້ 14). 3. ເຈົ້າຂອງເຮືອນຈະບອກທ່ານວ່າຫ້ອງຊັ້ນເທິງ (ຂໍ້ 15). ສາວົກກໍໄປປະຕິບັດຕາມທີ່ພຣະອົງຊົງສັ່ງ ແລະທຸກຢ່າງກໍເປັນຕາມທີ່ພຣະອົງຊົງບອກນັ້ນທຸກປະການ. ສິ່ງທີ່ໜ້າຄິດແມ່ນ ພຣະເຢຊູຮູ້ໄດ້ຢ່າງໃດວ່າຈະມີຊາຍນຶ່ງຖືໝໍ້ນ້ຳ? ພຣະອົງຈະຮູ້ໄດ້ຢ່າງໃດວ່າເຈົ້າເຮືອນຈະບອກພວກສາວົກວ່າໃຫ້ໃຊ້ຫ້ອງຊັ້ນເທິງເປັນຫ້ອງກິນປັສຄາ? ຄຳຕອບມີຢູ່ວ່າ ຫາກພຣະອົງບໍ່ເປັນພຣະເຈົ້າຄົງຈະບໍ່ຮູ້ຫລາຍປານນີ້ ດັ່ງນັ້ນແຫລະເຮົາທັງຫລາຍຄວນຮຽນເອົາແບບຢ່າງສາວົກທີ່ເຮັດທຸກຢ່າງຕາມຄຳສັ່ງຂອງພຣະອົງ ແລ້ວທຸກຢ່າງກໍຈະເປັນໄປຕາມນັ້ນ.

ເມື່ອເຖິງເວລາແລ້ວພຣະອົງແລະພວກສາວົກຈຶ່ງຮ່ວມກັນຮັປທານປັສຄານຳກັນຕາມສິ່ງທີ່ໄດ້ຈັດຕຽມໄວ້, ນີ້ເປັນພາບພົດອັນນຶ່ງທີ່ພວກເຮົາມີພາເຂົ້າສາມັກຄີໃນໂບດຂອງພວກເຮົາເປັນປະຈຳ ຄືແຕ່ລະຄົນພາກັນຖືມາໂບດຕາມສິ່ງທີ່ຕົນເອງຈັດຕຽມໄວ້ແລ້ວມາຮ່ວມຮັປທານເພື່ອເປັນການສາມັກຄີທັມຕໍ່ກັນແລະກັນ ເພາະວ່າການກິນເຂົ້າຮ່ວມພາ ກິນປາຮ່ວມຕ່ອນ ນັ້ນໄດ້ສະແດງເຖິງຄວາມຮັກ ດ້ວຍການເສັຽສະລະເພື່ອຜົນປໂຍດຮ່ວມກັນໃນອົງພຣະຄຣິດ.

ໃນຂະນະທີ່ຮ່ວມຮັປທານຢູ່ນັ້ນພຣະເຢຊູຊົງກ່າວຄຳທຳນວາຍວ່າ ຈະມີຜູ້ນຶ່ງຈະທໍຣະຍົດຕໍ່ພຣະອົງ " *ເມື່ອເຂົາກຳລັງນັ່ງຮັບປະທານອາຫານຢູ່ ພຣະເຢຊູຊົງກ່າວແກ່ເຂົາວ່າ, "ເຮົາບອກທ່ານທັງຫລາຍຕາມຈິງວ່າ ຄົນນຶ່ງໃນພວກທ່ານຈະທໍຣະຍົດຕໍ່ເຮົາ ແມ່ນຜູ້ນຶ່ງທີ່ກຳລັງຮັບປະທານອາຫານຢູ່ກັບເຮົານີ້ແຫລະ*" (ຂໍ້ 18). ແປວ່າພຣະເຢຊູຊົງຮູ້ເຫັນເຫດການລ່ວງໜ້າ ແລະຊົງຮູ້ວ່າແມ່ນຜູ້ໃດຈະເປັນຜູ້ທໍຣະຍົດຕໍ່ພຣະອົງ ແຕ່ພຣະອົງບໍ່ໄດ້ອອກຊື່ຜູ້ນັ້ນ ພຽງແຕ່ເວົ້າວ່າ *ແມ່ນຜູ້ນຶ່ງທີ່ກຳລັງຮັບປະທານອາຫານຢູ່ກັບເຮົານີ້ແຫລະ* ເມື່ອພວກສາວົກໄດ້ຍິນຄຳທີ່ພຣອົງຊົງກ່າວເຂົາກໍພາກັນຄິດສົງສັຍແລະພາກັນຖາມພຣະອົງເທື່ອລະຄົນວ່າ "*ບໍ່ແມ່ນຂ້ານ້ອຍຕີ້*" ເພາະເຂົາຕ່າງຄົນຕ່າງກໍແນ່ໃຈວ່າຈະບໍ່ປະຖິ້ມພຣະອົງ. ສ່ວນໃນພຣະທັມມັດທາຍໄດ້ບອກວ່າ *ຜູ້ທີ່ຈ້ຳຮ່ວມຊາມດຽວກັບເຮົາ* (ມັດທາຍ 26:23). ຂໍ້ທີ່ໜ້າສັງເກດເຫັນແມ່ນພວກສາວົກພາກັນປລາດໃຈ ສ່ວນພຣະເຢຊູບໍ່ໄດ້ປລາດໃຈເພາະພຣະອົງຊົງຮູ້ແລ້ວ. ແລ້ວພຣະອົງຊົງກ່າວວ່າ "ດ້ວຍວ່າບຸດມະນຸດຈະສະເດັດໄປຕາມທີ່ໄດ້ຂຽນໄວ້ໃນພຣະຄັມພີເຖິງເລື່ອງທ່ານ ແຕ່ວິບັດແກ່ຜູ້ທີ່ທໍຣະຍົດຕໍ່ບຸດມະນຸດ ຖ້າຜູ້ນັ້ນບໍ່ເກີດມາກໍດີກວ່າ " (ຂໍ້ 21). ແປວ່າພຣະເຢຊູຖືກສິ່ງລົງມາຕາຍແທນຄົນຜິດບາບທັງປວງຕາມທີ່ໄດ້ບັນທຶກໄວ້ ແຕ່ຢູດາໄດ້ຮັບວິບັດເມື່ອຜູ້ອື່ນໄດ້ຮັບຄວາມລອດພົ້ນ, ພຣະເຢຊູໄດ້ຕາຍແທນວິບັດຂອງຄົນທັງປວງ, ເຮົາທັງຫລາຍສົມຄວນຈະໄດ້ຮັບວິບັດຄືຢູດາຫາກເຮົາບໍ່ສັດຊື່ຕໍ່ພຣະອົງຄືຢູດາ ແຕ່ຢ່າງໃດກໍດີພຣະເຈົ້າໄດ້ເລືອກເອົາຢູດາໃຫ້ເປັນຜູ້ທໍຣະຍົດເພື່ອລາວຈະໄດ້ຮັບວິບັດ, ທັງນີ້ອາດຈະເປັນຮູບພາບອັນນຶ່ງທີ່ບົ່ງບອກເຖິງຄຣິສຕຽນທີ່ທໍຣະຍົດຕໍ່ພຣະເຈົ້າ, ດັ່ງນັ້ນແຫລະຜູ້ທີ່ບໍ່ສັດຊື່ຄືຢູດາບໍ່ເກີດມາກໍດີກວ່າ.

## 4. <u>ຊົງຕັ້ງສິນມະຫາສນິດ:</u> (ມາຣະໂກ 14:22-26)

ເມື່ອກິນປັສຄາແລ້ວ ຕໍ່ມາພຣະເຢຊູໄດ້ພາສາວົກຕັ້ງພິທີສິນມະຫາສນິດ ຫລືລາງເທື່ອເຮົາຮ້ອງວ່າ ສິນລະນຶກ ອັນໝາຍເຖິງທຸກຄັ້ງທີ່ກິນເຂົ້າຈີ່ແລະນ້ຳອະງຸ່ນແມ່ນເຮົາໄດ້ກິນເພື່ອລະນຶກເຖິງພຣະເຢຊູທີ່ຕາຍແທນຄວາມຜິດບາບຂອງໄພ່ພົນຂອງພຣະອົງ. " *ພຣະເຢຊູຊົງຈັບເຂົ້າຈີ່ມາຂໍພຣະພອນແລ້ວຊົງຫັກເຂົ້າຈີ່ນັ້ນຍື່ນໃຫ້ແກ່ພວກສາວົກໂດຍຊົງກ່າວວ່າ, "ຈົ່ງຮັບເທີນ ນີ້ແຫລະ, ຄືກາຍຂອງເຮົາ" ແລ້ວພຣະອົງຊົງຈັບເອົາຈອກມາໂມທະນາພຣະຄຸນແລະຊົງຍື່ນໃຫ້ເຂົາ ແລະເຂົາກໍຮັບດື່ມທຸກຄົນ ພຣະອົງໄດ້ຊົງກ່າວແກ່ເຂົາວ່າ, "ນີ້ແຫລະ, ຄືເລືອດຂອງເຮົາ ແມ່ນເລືອດກ່ຽວກັບພຣະສັນຍາທີ່ຫລັ່ງອອກເພື່ອຄົນຫລາຍຄົນ* " (ຂໍ້ 22-24). ການທີ່ພຣະເຢຊູຊົງກ່າວເຊັ່ນນີ້ກໍເພາະພຣະອົງຢາກບອກສາວົກວ່າ ກາຍຂອງພຣະອົງຈະຖືກເຂົາແທງຈົນພຣະໂລຫິດຂອງພຣະອົງຈະຫຼັ່ງໄຫລອອກມາ ດ້ວຍເຫດນີ້ພຣະອົງຈຶ່ງບອກໃຫ້ເຂົາກິນເຂົ້າຈີ່ທີ່ບໍ່ມີເຊື້ອແປ້ງແລະນ້ຳອະງຸ່ນທີ່ຈັດຕຽມໄວ້ໃນແລງວັນນັ້ນ. ພຣະເຢຊູຍັງບອກອີກວ່າ " *ເຮົາບອກທ່ານທັງຫລາຍຕາມຈິງວ່າ ເຮົາຈະບໍ່ດື່ມນ້ຳຜົນອະງຸ່ນຕໍ່ໄປອີກຈົນກວ່າວັນນັ້ນມາເຖິງ ຄືວັນທີ່ເຮົາຈະດື່ມອັນໃໝ່ໃນຣາຊແຜ່ນດິນຂອງພຣະເຈົ້າ" ເມື່ອຮ້ອງເພງສັຣເສີນແລ້ວ ເຂົາກໍພາກັນອອກໄປຍັງພູໝາກກອກເທດ* " (ຂໍ້ 25-26).

## 5. <u>**ສັນຍາແບບຂີ້ອວດ**</u>: (ມາຣະໂກ 14:27-31)

ພຣະເຢຊູຊົງກ່າວເຕືອນສາວົກວ່າເມື່ອພຣະອົງຊົງຖືກເຂົາຈັບໄປນັ້ນພວກສາວົກທຸກຄົນຈະສະດຸດໃຈ ຫລືຢ້ານຫລາຍຈົນແຕກຊະກັນໄປ ແຕ່ເປໂຕໃຫ້ຄຳໝັ້ນສັນຍາໂດຍຕົນເອງວ່າ ຜູ້ອື່ນຈະສະດຸດຫລືງລືມພຣະອົງໄປກໍຕາມລາວຈະບໍ່ເປັນຄືຜູ້ອື່ນ " *ເປໂຕໄດ້ທູນພຣະອົງວ່າ, "ເຖິງແມ່ນວ່າທຸກຄົນຈະສະດຸດໃຈ ສ່ວນຂ້ານ້ອຍບໍ່ສະດຸດໃຈ* " (ຂໍ້ 29). ເພາະວ່າໃນໃຈຂອງລາວໄດ້ຄິດແລະຕັ້ງໃຈໄວ້ແນວນັ້ນ ແຕ່ລາວເອງບໍ່ຮູ້ຈັກໃຈລາວເອງດີ, ສ່ວນພຣະເຢຊູຮູ້ຈັກໃຈລາວຫລາຍກວ່າລາວຮູ້ຈັກໃຈລາວອີກຊ້ຳ ຈຶ່ງຊົງຕອບລາວວ່າ "*ເຮົາບອກທ່ານຕາມຈິງວ່າ ໃນຄືນວັນນີ້ແຫລະ, ກ່ອນໄກ່ຈະຂັນສອງເທື່ອ ທ່ານຈະປະຕິເສດເຮົາເຖິງສາມຄັ້ງ, ແຕ່ເປໂຕທູນຕອບຢ່າງແຂງແຮງວ່າ, "ເຖິງແມ່ນວ່າຂ້ານ້ອຍຈະຕ້ອງຕາຍກັບທ່ານ ຂ້ານ້ອຍຈະບໍ່ປະຕິເສດທ່ານຈັກເທື່ອ" ຝ່າຍພວກສາວົກກໍທູນຢ່າງນັ້ນເຫມືອນກັນທຸກຄົນ* " (ຂໍ້ 30-31).

**ຄຳຖາມ**:

1. ຄະນະບັບຕິສເຊື່ອວ່າ ສິນມະຫາສນິດເປັນສັນຍາລັກເຖິງພຣະກາຍແລະພຣະໂລຫິດຂອງພຣະຄຣິດ. ສ່ວນປະກອບຂອງສັນຍາລັກນັ້ນ ໄດ້ເພີ້ມຫລືລົດຄວາມໝາຍຂອງສິນມະຫາສນິດບໍ?
2. ເຖິງແມ່ນທ່ານໄດ້ປະຕິຍານວ່າຈະສັດຊື່ຕໍ່ພຣະຄຣິດ ມີທາງໃດແດ່ທີ່ທ່ານໄດ້ທໍຣະຍົດຕໍ່ພຣະອົງ?
3. ຄິດເບິ່ງສິນມະຫາສນິດເທື່ອແລ້ວໃນໂບດທ່ານ ມີຄົນໃດບໍ່ທີ່ທ່ານມີຄວາມສັມພັນບໍ່ດີກັບລາວ? ມີຄົນໃດບໍ່ທີ່ທ່ານອະພັຍໃຫ້ລາວບໍ່ໄດ້? ເມື່ອຮັບສິນມະຫາສນິດຮ່ວມກັບລາວ ທ່ານຍັງຄິດບໍ່ດີກັບລາວຢູ່ບໍ່?
4. ທ່ານມີບັນຫາເຣື່ອງຄວາມຈອງຫອງຝ່າຍວິນຍານ ຢູ່ໃນພາກສ່ວນໃດໃນຊີວິດຂອງທ່ານບໍ?

*ຫວ*

# ບົດຮຽນທີ 12
## ທໍຣະຍົດ, ຖືກຈັບ, ຂຶ້ນສານ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ມາຣະໂກ 14: 32-52; 15:1-15
**ພູມຫລັງຂອງພຣະຄັມພີ:** ມາຣະໂກ 14: 43-72; 15:1-15
**ຈຸດສໍາຄັນຂອງບົດຮຽນນີ້:** ຊົງອົດທົນຕໍ່ຜູ້ທໍຣະຍົດ ແລ້ວຖືກຈັບ ເມື່ອຂຶ້ນສານກໍຊົງຖ່ອມຕົວ.
**ຄໍາຖາມເພື່ອການຄົ້ນຄວ້າ:** ເມື່ອຖືກຂົ່ມເຫງ ເຮົາຈະຮຽນແບບພຣະເຢຊູແນວໃດ?
**ຈຸດປະສົງຂອງບົດຮຽນ:** ເພື່ອເຮົາຈະຮູ້ຈັກເຮັດເມື່ອຖືກຂົ່ມເຫງດ້ວຍການຖ່ອມຕົວ.

### ບົດນໍາ

ທ່ານຄາຣາເວຈີໂອ ນັກວາດພາບອິຕາລີຊື່ດັງຄົນນຶ່ງ ໄດ້ວາດພາບສາວົກຢູດາຈູບແກ້ມພຣະເຢຊູ ແລະມີທະຫານໂຣມຈ່ອງເສື້ອຄຸມພຣະເຢຊູ ເປັນພາບຈູບແຫ່ງການທໍຣະຍົດ ທີ່ເຮົາຈະເຫັນໃນບົດຮຽນວັນນີ້.

### 1. **ຈູບທໍຣະຍົດ:** (ມາຣະໂກ 14:32-52)

ຫລັງຈາກຕັ້ງສິນມະຫາສນິດແລ້ວ ພຣະເຢຊູໄດ້ນໍາພວກສາວົກໄປຍັງສວນເຄັດເຊມາເນເພື່ອໄຫວ້ວອນ, ພຣະອົງຊົງບອກສາວົກກຸ່ມໃຫຍ່ໃຫ້ນັ່ງຖ້າພຣະອົງຢູ່ຫ່າງໄກນ້ອຍນຶ່ງ ສ່ວນຢາໂກໂບກັບໂຢຮັນພຣະອົງຊົງໃຫ້ໄປຢູ່ໃກ້ກັບພຣະອົງ. ເມື່ອນັ້ນພຣະອົງຊົງເປີດເຜີຍຄວາມໃນໃຈຂອງພຣະອົງວ່າ *"ຈິດໃຈຂອງເຮົາກໍທຸກໜັກແທບຈະຕາຍຢູ່ແລ້ວ ຈົ່ງຄອຍເຝົ້າຢູ່ທີ່ນີ້ເທີນ"* (ຂໍ້ 34). ສັງເກດວ່າພຣະເຢຊູບໍ່ໄດ້ບອກວ່າພຣະອົງຊົງເປັນທຸກໃຈດ້ວຍເຣື່ອງອັນໃດ ແລະກໍບໍ່ມີຜູ້ໃດຖາມພຣະອົງວ່າພຣະອົງຊົງເປັນທຸກດ້ວຍເຣື່ອງອັນໃດ? ແຕ່ເຮົາສັງເກດເຫັນວ່າພຣະອົງຊົງເປັນທຸກບໍ່ຢາກຕາຍ ເພາະພຣະອົງຊົງອ້ອນວອນວ່າ *"ຖ້າເປັນໄປໄດ້ຂໍໃຫ້ໂມງນັ້ນລ່ວງພົ້ນໄປຈາກພຣະອົງ, ພຣະອົງຊົງທູນວ່າ, "ອັບບາບິດາເອີຍ, ພຣະອົງອາດຊົງກະທໍາສິ່ງທັງປວງໄດ້ ຂໍໃຫ້ຈອກນີ້ເລື່ອນພົ້ນໄປຈາກລູກທ້ອນ ແຕ່ຂໍຢ່າໃຫ້ເປັນໄປຕາມໃຈປາຖນາຂອງລູກ ແຕ່ໃຫ້ເປັນໄປຕາມນໍ້າພຣະທັຍຂອງພຣະອົງເທີນ*"(ຂໍ້ 34ຂ-36ກ) ຄໍາວ່າຈອກແປວ່າຈອກແຫ່ງພຣະພິໂຣດຂອງພຣະເຈົ້າຈະຖອກລົງພົ້ນແຜ່ນດິນໂລກທີ່ບໍ່ເຊື່ອຟັງທີ່ກ່າວໄວ້ໃນພຣະນິມິດ, ແຕ່ເຖິງແມ່ນພຣະເຢຊູໄຫວ້ວອນພຣະບິດາກໍຕາມ ແຕ່ພຣະອົງຊົງກ່າວຢໍ້າອີກວ່າ *ແຕ່ຂໍຢ່າໃຫ້ເປັນໄປຕາມໃຈປາຖນາຂອງລູກ ແຕ່ໃຫ້ເປັນໄປຕາມນໍ້າ ພຣະທັຍຂອງພຣະອົງເທີນ* ແປວ່າບໍ່ຈໍາເປັນຕ້ອງເປັນໄປຕາມພຣະອົງທູນຂໍ ແຕ່ຫາກພຣະບິດາມີພຣະປະສົງຢ່າງໃດກໍຂໍໃຫ້ເປັນໄປຕາມນັ້ນ.

ໃນຂະທີ່ພຣະອົງຊົງເປັນທຸກຢູ່ນັ້ນບັນດາສາວົກຂອງພຣະອົງກໍບໍ່ໄດ້ເຮັດຕາມພຣະອົງຊົງສັ່ງ ແຕ່ພາກັນນອນຫລັບ ເພາະມືນຕາບໍ່ຂຶ້ນ, ພຣະເຢຊູກັບມາຫາເຂົາຄັ້ງທີສາມແລ້ວຊົງກ່າວວ່າ " *ພຣະອົງຈຶ່ງຊົງກ່າວແກ່ເຂົາ*

ວ່າ, *“ພວກທ່ານຍັງນອນຫລັບເຊົາເມື່ອຍຢູ່ຫລື ພໍເທາະ ເວລາມາເຖິງແລ້ວ ເບິ່ງແມ, ບຸດມະນຸດກຳລັງຈະຖືກມອບໄວ້ໃນມືຂອງຄົນບາບ ຈົ່ງລຸກຂຶ້ນພາກັນໄປເທາະ ເບິ່ງແມ, ຜູ້ທີ່ມອບເຮົານັ້ນມາໃກ້ແລ້ວ* " (ຂໍ້ 41-42).

" *ເມື່ອພຣະອົງຍັງຊົງກ່າວບໍ່ທັນຂາດຄຳ* " (ຂໍ້ 43ກ). ແປວ່າ ເວົ້າກັບສາວົກຍັງບໍ່ທັນຈົບ ຢູດາຜູ້ທໍຣະຍົດກໍມາຮອດພ້ອມກັບປະຊາຊົນທີ່ຖືດາບແລະໄມ້ຄ້ອນມາຈັບພຣະອົງ, ເຂົາມາໂດຍການນຳຂອງຢູດາ ແລະພວກປະໂຣຫິດ ພວກເຂົາພາກັນຖືອາວຸດມາຂົ່ມຂູ່ເໝືອນພຣະເຢຊູເປັນຜູ້ຮ້າຍຂ້າຄົນ. ຢູດາໄດ້ໃຫ້ສັນຍານເຂົາດ້ວຍການຈູບຕາມທຳນຽມຂອງຊາວຢິວໂດຍກ່າວວ່າ “*ເຮົາຈະຈູບຄຳນັບຜູ້ໃດ ກໍແມ່ນຜູ້ນັ້ນແຫລະ, ຈົ່ງຈັບກຸມເອົາໄປຮັກສາໄວ້ໃຫ້ດີ* ”(ຂໍ້ 44ຂ). ເມື່ອຢູດາເຂົ້າຈູບພຣະເຢຊູ ເຂົາກໍເຂົ້າຈັບກຸມພຣະເຢຊູຕາມແຜນຂອງເຂົາ, ແຕ່ສາວົກຂອງພຣະເຢຊູຜູ້ນຶ່ງຕໍ່ສູ້ປ້ອງກັນພຣະອົງດັ່ງນີ້ ; " *ແຕ່ຜູ້ນຶ່ງທີ່ຢືນຢູ່ທັ້ນຊັກດາບອອກຟັນຂ້ອຍໃຊ້ຄົນນຶ່ງຂອງມະຫາປະໂຣຫິດ ຖືກຫູຂາດເບື້ອງນຶ່ງ* "(ຂໍ້ 47). ຜູ້ທີ່ຟັນຫູນັ້ນແມ່ນເປໂຕຜູ້ມີດາບ ຫລືພ້າຍາວໃນມື (ອ່ານໂຢຮັນ 18:10). ເຮົາບໍ່ຮູ້ວ່າເປັນຫຍັງເປໂຕ ຈຶ່ງຟັນຖືກຫູຈົນຂາດ? ແຕ່ພວກສາສນາສາດສັນນິຖານເຫັນຢູ່ສອງປະເດັນຄື; 1.ເພື່ອເຂົາຈະໄດ້ເຫັນຣິດເດດພຣະເຢຊູ ທີ່ຕໍ່ຫູຂອງຊາຍນັ້ນຄືນ ( ທ່ານໝໍລູກາໄດ້ບັນທຶກການອັສຈັນຄັ້ງນີ້, ອ່ານລູກາ 22:51). 2. ເປໂຕມີອາຊີບເປັນຊາວປະມົງກ່ອນໜ້າຈະຕິດຕາມພຣະເຢຊູ ດ້ວຍເຫດນີ້ລາວອາດຈະບໍ່ມີຄວາມຊຳນານໃນການໃຊ້ດາບ ເພາະລາວບໍ່ແມ່ນນັກຟັນດາບ (ມັດທາຍ 4:18). ສາສນາສາດຍັງກ່າວອີກວ່າ ບາງທີເປໂຕຕັ້ງໃຈຈະຟັນຫົວຂອງຜູ້ເຂົ້າຈັບພຣະເຢຊູ ແຕ່ພາດຈາກຫົວໄປຖືກຫູ. ພຣະເຢຊູຊົງບອກເປໂຕວ່າ " *ຈົ່ງເອົາດາບໃສ່ຝັກໄວ້ເສັຽ* " (ອ່ານໂຢຮັນ 18:11). ແປວ່າພຣະເຢຊູບໍ່ໃຫ້ຕໍ່ສູ້ ແລະຈະຍອມເຮັດຕາມເຂົາ.

ແຕ່ເມື່ອເຂົາຈັບພຣະອົງນັ້ນພຣະອົງຊົງຖາມເຂົາວ່າ "*ພຣະເຢຊູຊົງຖາມພວກເຫລົ່ານັ້ນວ່າ, “ທ່ານທັງຫລາຍຖືດາບຖືໄມ້ຄ້ອນອອກມາຈັບເຮົາເໝືອນຈັບໂຈນຫລື ເຮົາໄດ້ຢູ່ກັບທ່ານທັງຫລາຍທຸກໆວັນສັ່ງສອນໃນບໍຣິເວນພຣະວິຫານແຕ່ພວກທ່ານບໍ່ໄດ້ຈັບເຮົາ ແຕ່ຂໍໃຫ້ພຣະຄັມພີທີ່ຂຽນໄວ້ກ່ຽວກັບເຣື່ອງນີ້ສຳເຣັດເສັຽກ່ອນ* " (ມາຣະໂກ 14:48-49). ແປວ່າພຣະອົງຊົງເທສນາສັ່ງສອນໃນພຣະວິຫານເປັນປະຈຳ ເປັນຫຍັງເຂົາຈຶ່ງບໍ່ຈັບພຣະອົງ ແລະການມາຈັບພຣະອົງນັ້ນບໍ່ຈຳເປັນຕ້ອງມີອາວຸດ ເພາະພຣະອົງປະຕິບັດຕົນໃຫ້ສຳເຣັດຕາມພຣະຄັມພີທີ່ໄດ້ກ່າວໄວ້ລ່ວງໜ້າແລ້ວ, ແຕ່ໃນຂະນະທີ່ເຂົາຈັບພຣະອົງນັ້ນພວກສາວົກກໍພາກັນຢ້ານແລະແລ່ນໜີປະພຣະອົງໄປ. (ຂໍ້ 51).

## 2. <u>ການຂຶ້ນສານ ແລະການປະຕິເສດ:</u> ( ມາຣະໂກ 14:53-72 0 )

ຫລັງຈາກເຂົາຈັບພຣະເຢຊູແລ້ວ ເຂົາກໍນຳພຣະອົງໄປຂຶ້ນສານ ທີ່ເປັນສານສູງສຸດຂອງໂຣມັນທີ່ປົກຄອງຊາດຢິວ, ກ່ອນທີ່ເຂົາຈະນຳໄປສານສູງສຸດເພາະວ່າສານອື່ນໆບໍ່ມີສິດຕັດສິນປະຫານຜູ້ໃດ. ມີແຕ່ສານສູງສຸດນີ້ຈະຕັດສິນພຣະເຢຊູຢ່າງເດັດຂາດ, ແຕ່ໃນຄືນວັນນັ້ນ ເຂົາໄດ້ນຳເອົາພຣະເຢຊູໄປຫາພວກມະຫາປະໂຣຫິດຕົນໃຫຍ່ "*ເຂົາໄດ້ພາພຣະເຢຊູໄປຫາມະຫາປະໂຣຫິດ ແລະມີພວກປະໂຣຫິດຕົນໃຫຍ່ ພວກເຖົ້າແກ່ກັບພວກນັກທັມໄດ້ຊຸມນຸມພ້ອມກັນຢູ່ທີ່ນັ້ນ* " (ຂໍ້ 53). ເຂົາໄດ້ເອົາພຣະເຢຊູຢືນຢູ່ກາງເດີ່ນບ້ານຂອງມະຫາ

ປະໂຣຫິດ ເພື່ອຫາທາງຈັບຜິດໃຫ້ເປັນເຣື່ອງໃຫຍ່ທີ່ສຸດເພື່ອຈະມີໂທດເຖິງຕາຍ ແຕ່ເຂົາບໍ່ມີອັນໃດເປັນເຣື່ອງພໍທີ່ຈະສັ່ງປະຫານພຣະເຢຊູໄດ້ ຈຶ່ງສອບຖາມພຣະອົງວ່າ *"ຂ້າພະເຈົ້າໄດ້ຍິນຄົນນີ້ເວົ້າວ່າ "ຝ່າຍເຮົາຈະມ້າງພຣະວິຫານຫລັງນີ້ທີ່ສ້າງດ້ວຍມືມະນຸດ ແລະພາຍໃນສາມວັນຈະສ້າງຂຶ້ນອີກຫລັງນຶ່ງທີ່ບໍ່ໄດ້ເຮັດດ້ວຍມືມະນຸດ"* (ຂໍ້ 58). ແປວ່າ ເຂົາໄດ້ຟ້ອງປະໂຣຫິດວ່າພຣະເຢຊູກ່າວວ່າ ພຣະອົງຈະມ້າງພຣະວິຫານໃຫຍ່ ແລ້ວສ້າງຂຶ້ນໃໝ່ໄດ້ພາຍໃນສາມວັນ, ເຣື່ອງນີ້ພຣະເຢຊູບໍ່ໄດ້ກ່າວເຖິງພຣະວິຫານທີ່ເປັນຕຶກທີ່ຕັ້ງທີ່ກຸງເຢຣູຊາເລັມ ແຕ່ພຣະອົງໄດ້ກ່າວເຖິງພຣະອົງເອງທີ່ຈະຕ້ອງຕາຍແລ້ວພາຍໃນວັນຖ້ວນສາມພຣະອົງກໍຈະຄືນມາອີກ.

ພຣະເຢຊູອິດກັ້ນບໍ່ຕອບເຂົາຈັກປະການ ດ້ວຍເຫດນີ້ເຂົາຈຶ່ງສອບຖາມອີກວ່າ *"ເຈົ້າເປັນພຣະຄຣິດພຣະບຸດຂອງພຣະເຈົ້າຜູ້ຊົງຄວາມສຸກຫລື" ພຣະເຢຊູຊົງຕອບວ່າ, "ເຮົາເປັນຜູ້ນັ້ນແຫລະ ແລະພວກທ່ານຈະໄດ້ເຫັນບຸດມະນຸດນັ່ງຢູ່ເບື້ອງຂວາຂອງຜູ້ຊົງຣິດທານຸພາບ ແລະກໍາລັງສະເດັດມາໃນເມກແຫ່ງຟ້າສວັນ"* (ຂໍ້ 60-61). ເມື່ອປະໂຣຫິດຕົນໃຫຍ່ໄດ້ຍິນຄໍາທີ່ພຣະອົງຊົງກ່າວແລ້ວກໍສະແດງຄວາມໃຈຮ້າຍຈົນເຖິງຂັ້ນສຸດຂີດຈຶ່ງຈີກເສື້ອຂອງຕົນ ແລ້ວກ່າວວ່າ " *ພວກເຮົາຍັງຕ້ອງການພຍານອັນໃດອີກ ທ່ານທັງຫລາຍໄດ້ຍິນຄໍາໝິ່ນປະມາດພຣະເຈົ້າແລ້ວ ພວກທ່ານຄິດເຫັນຢ່າງໃດ* " (ຂໍ້ 63-64). ແປວ່າເຮົາມີພະຍານພໍແລ້ວ, ພວກທ່ານໄດ້ຍິນຢ່າງຄັກແລ້ວວ່າການກ່າວຢ່າງນີ້ແມ່ນໝິ່ນປມາດພຣະເຈົ້າ ດັ່ງນັ້ນໃຫ້ເຮົາຕັດສິນໄດ້ເລີຍ. ໃນນັ້ນມີລາງຄົນເຮັດແບບດູຖູກ ໝິ່ນປມາດພຣະອົງ ໂດຍການຖົ່ມນໍ້າລາຍໃສ່ພຣະເຢຊູ (ຂໍ້ 65).

ໃນເວລານັ້ນເປໂຕໄດ້ຕິດຕາມພຣະອົງໄປຫ່າງໆ ແລະເຂົ້າໄປຜີງໄຟທີເດີ່ນບ້ານຂອງມະຫາປະໂຣຫິດຮ່ວມກັບຄົນອື່ນໆອີກຫລາຍຄົນ, ບັງເອີນມີສາວໃຊ້ຜູ້ນຶ່ງຂອງມະຫາປະໂຣຫິດຈື່ໜ້າເປໂຕໄດ້ ຈຶ່ງທ້ວງເປໂຕວ່າ " *ໂຕເຄີຍຢູ່ກັບໄທນາຊາເຣັດ ຄືເຢຊູເໝືອນກັນ* " (ຂໍ້ 67). ດ້ວຍຄວາມຢ້ານຫລາຍຈົນເກີນໄປເປໂຕຈຶ່ງຕອບປະຕິເສດວ່າ " *ທີ່ເຈົ້າເວົ້ານັ້ນຂ້ອຍບໍ່ຮູ້ເຣື່ອງ ແລະບໍ່ເຂົ້າໃຈ* " (ຂໍ້ 68). ຈາກຂໍ້ 68 ເຖິງ 72 ເປໂຕໄດ້ປະຕິເສດພຣະເຢຊູເຖິງສາມເທື່ອຕາມທີ່ຊົງໄດ້ທໍານວາຍໄວ້ໃນບໍ່ດົນຜ່ານມານີ້.

## 3. <u>ໄຕ່ສວນຄວາມ ແລະລົງໂທດ</u>: ( ມາຣະໂກ 15:1-15 )

ພໍຮຸ່ງເຊົ້າມາພວກປະໂຣຫິດຕົນໃຫຍ່, ພວກເຖົ້າແກ່, ພວກນັກທັມ ແລະພວກສະມາຊິກສະພາໄດ້ມັດພຣະເຢຊູໄປຫາປີລາດຜູ້ເປັນເຈົ້າເມືອງຂອງໂຣມັນ ເພື່ອວ່າທ່ານຈະໄດ້ຕັດສິນປະຫານເສັຽ. ເມື່ອໄປເຖິງແລ້ວປີລາດຈຶ່ງຖາມພຣະເຢຊູວ່າ *"ເຈົ້າເປັນກະສັດຂອງຊາດຢິວຫລື" ພຣະອົງຊົງຕອບວ່າ, "ທ່ານເວົ້ານັ້ນຖືກຕ້ອງແລ້ວ"* (ຂໍ້ 2). ເປັນຄໍາຖາມແບບນັກການເມືອງຊັ້ນຜູ້ໃຫຍ່ ເພາະທ່ານເອງຢາກຮູ້ວ່າພຣະເຢຊູມີແຜນການຕໍ່ຕ້ານບໍ່? ແຕ່ຄໍາຕອບຂອງພຣະເຢຊູນັ້ນແປວ່າ ແມ່ນທ່ານເວົ້າແນວນັ້ນບໍ່?

ທີ່ຈິງແລ້ວພຣະເຢຊູບໍ່ແມ່ນກະສັດທີ່ຈະນັ່ງບັນລັງຂອງຊາດຢິວ ແຕ່ພຣະເຢຊູຊົງເປັນກະສັດຂອງທຸກຊາດທຸກພາສາ ແຕ່ບໍ່ແມ່ນກະສັດຝ່າຍໂລກນີ້. ການໄຕ່ສວນສອບຖາມຂອງປີລາດນັ້ນບໍ່ເຫັນວ່າພຣະເຢຊູມີການຕໍ່ຕ້ານ ຫລືເປັນກະບົດແຕ່ແນວໃດໃນຄວາມນຶກຄິດຂອງປີລາດ ດັ່ງນັ້ນປີລາດຈຶ່ງວາງແຜນຈະປ່ອຍພຣະເຢ

ຊູ ແຕ່ກໍຍັງເກງໃຈປະຊາຊົນ ແລະພວກມະຫາປະໂຣຫິດທັງຫລາຍທີ່ພາກັນຮ້ອງດ້ວຍສຽງດັງກ່າວໂທດພຣະເຢຊູຢູ່ບໍ່ຂາດ. ໃນເວລານັ້ນປີລາດໄດ້ວາງແຜນປ່ອຍປະເຢຊູໂດຍອີງໃສ່ເທສການຂອງຊາດຢິວ ດັ່ງນີ້;

ຕາມປະເພນີຂອງເຂົາແມ່ນປ່ອຍນັກໂທດ ເພື່ອສເລີມສລອງເທສການອັນເກົ່າແກ່ທີ່ພຣະເຈົ້າຊົງປົດປ່ອຍຊາດຢິວອອກຈາກການເປັນຂ້ອຍຂ້າທີ່ປະເທດເອຢິບ, ດ້ວຍເຫດນີ້ປີລາດຈຶ່ງເອົາໂຈນຮ້າຍຜູ້ນຶ່ງມີຊື່ວ່າ ບາຣາບາ ອອກມາຢືນຢູ່ໃກ້ຄຽງພຣະເຢຊູ ແລ້ວປີລາດຖາມເຂົາວ່າ *"ເຈົ້າທັງຫລາຍຢາກໃຫ້ເຮົາປ່ອຍກະສັດຂອງຊາດຢິວໃຫ້ພວກເຈົ້າຫລື"*(ຂໍ້ 9). ເນື່ອງຈາກວ່າປະໂຣຫິດໄດ້ບອກເຂົາໃຫ້ປ່ອຍບາຣາບາຜູ້ຮ້າຍຂ້າຄົນດ້ວຍເຫດນີ້ເຂົາຈຶ່ງເປັ່ງສຽງຮ້ອງວ່າ " *ປ່ອຍບາຣາບາແທນພຣະເຢຊູ* " (ຂໍ້ 11ຂ). ເມື່ອເຫດການບານປາຍເຊັ່ນນີ້ປີລາດຈຶ່ງຖາມອີກວ່າ *"ຖ້າຢ່າງນັ້ນຢາກໃຫ້ເຮົາເຮັດຢ່າງໃດແກ່ຜູ້ທີ່ພວກເຈົ້າເອີ້ນວ່າກະສັດຂອງຊາດຢິວ"ເຂົາຮ້ອງຂຶ້ນອີກວ່າ, "ຄຶງມັນໄວ້ທີ່ໄມ້ກາງແຂນ* " (ຂໍ້ 13). ແລ້ວປີລາດຈຶ່ງຖາມອີກຄັ້ງນຶ່ງວ່າ " *ຄຶງເຮັດຫຍັງ ຄົນນີ້ໄດ້ເຮັດຜິດອັນໃດ* ? " (ຂໍ້ 14ກ). ປະຊາຊົນບໍ່ໄດ້ຕອບຄຳຖາມປີລາດແຕ່ຢ່າງໃດ ແຕ່ພາກັນຮ້ອງດ້ວຍສຽງດັງວ່າ " *ຄຶງໄວ້ທີ່ໄມ້ກາງແຂນ* " ( ຂໍ້ 14ຂ). " *ປີລາດປາຖນາຈະເອົາໃຈປະຊາຊົນຈຶ່ງປ່ອຍບາຣາບາໃຫ້ເຂົາ ເພື່ອໃຫ້ຂ້ຽນພຣະເຢຊູ ແລ້ວກໍມອບໃຫ້ຄຶງໄວ້ທີ່ໄມ້ກາງແຂນ* " (ຂໍ້ 15).

**<u>ຄຳຖາມ</u>**:

1. ເຮົາເຫັນວ່າຢູດາເປັນສາວົກທີ່ທໍຣະຍົດຕໍ່ພຣະເຢຊູ ສ່ວນເຮົາເດໄດ້ສັດຊື່ຕໍ່ພຣະເຢຊູແນວໃດ?
2. ທ່ານເຄີຍຂຶ້ນສານແນວໃດແນວນຶ່ງບໍ່? ທ່ານໄດ້ຕໍ່ສູ້ແນວໃດ? ພຣະເຢຊູຕໍ່ສູ້ແນວໃດ?
3. ເປັນຫຍັງພຣະເຢຊູຈຶ່ງຫ້າມບໍ່ໃຫ້ເປໂຕ ຕໍ່ສູ້ ແລ້ວສັ່ງໃຫ້ເກັບມ້ຽນດາບໄວ້?
4. ເປັນຫຍັງປີລາດຈຶ່ງປ່ອຍໃຫ້ເຂົາຄຶງພຣະເຢຊູ ທັງໆທີ່ທ່ານຮູ້ວ່າພຣະເຢຊູບໍ່ຜິດ?
5. ເປັນຫຍັງພຣະເຢຊູຈຶ່ງບໍ່ຂັດຂືນຕໍ່ສູ້ຄະດີ ເມື່ອພຣະອົງບໍ່ມີຄວາມຜິດ?
6. ເຮົາຈະຮຽນເອົາແບບຢ່າງພຣະອົງແນວໃດ?

*ຫວ*

# ບົດຮຽນທີ 13
## <u>ສິ້ນພຣະຊົນ ແລະຟື້ນພຣະຊົນ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ມາຣະໂກ 15:33-41; 16: 1-8

**<u>ພູມຫລັງຂອງພຣະຄັມພີ:</u>** ມາຣະໂກ 15:21-45; 16:1-8

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ການຕາຍແລະການຄືນພຣະຊົນເປັນທົນທາງໃຫ້ເຮົາຮັບຄວາມລອດພົ້ນ.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ຂ້າພະເຈົ້າໄດ້ເຊື່ອແນວນັ້ນບໍ່? ການຕາຍແລະການຄືນຂອງພຣະອົງໄດ້ກະຕຸ້ນຈິດໃຈໃຫ້ຂ້າພະເຈົ້າມີຊີວິດເພື່ອພຣະອົງແນວໃດ?

**<u>ຈຸດປະສົງຂອງບົດຮຽນ</u>**: ເພື່ອໃຫ້ເຮົາມີຄວາມເຊື່ອແລະມີຊີວິດຢູ່ເພື່ອພຣະອົງ.

### <u>ບົດນຳ</u>

ການທົນທຸກທໍຣະມານທີ່ໄມ້ກາງແຂນເປັນທົນທາງແຫ່ງການອະພັຍໂທດຂອງຄວາມບາບ, ການຄືນພຣະຊົນກາຍເປັນຄວາມຫວັງໃນຊີວິດໃໝ່ໃນຟ້າສວັນ, ການເຊື່ອ ແລະໄວ້ວາງໃຈເປັນທາງດຽວທີ່ນຳໄປເຖິງຄວາມພົ້ນຈາກຄວາມຜິດຄວາມບາບ.

### 1. <u>ຖືກຄຶງທີ່ໄມ້ກາງແຂນ:</u> (ມາຣະໂກ 15:21-32)

ຫລັງຈາກປີລາດຊ່ອຍພຣະເຢຊູບໍ່ໄດ້ແລ້ວ ທ່ານກໍປ່ອຍໃຫ້ເຂົາເຮັດຕາມໃຈມັກຂອງເຂົາ ແລະເມື່ອນັ້ນເຂົາກໍເອົາໄມ້ກາງແຂນອັນໜັກໃຫ້ພຣະເຢຊູແບກ ເພື່ອຍ່າງໄປບ່ອນທີ່ເຂົາປະຫານນັກໂທດທີ່ມີຊື່ວ່າ ໂຄລະໂຄທາ ພ້ອມທັງຊົ້ງນຕີ ແລະເຍາະເຍີ້ຍພຣະອົງດ້ວຍຄຳເວົ້າອັນຫຍາບຊ້າຕ່າງໆ. ໄມ້ກາງແຂນກໍໜັກ, ຈິດໃຈຂອງພຣະອົງກໍເປັນທຸກ, ສາວົກທີ່ໃຊ້ຊີວິດນຳກັນສາມປີກໍຫາຍໜ້າ, ທ້ອງກໍຫວ້າງທີ່ບໍ່ໄດ້ກິນແລະດື່ມອັນໃດຫລັງຈາກເຂົາຈັບໃນແລງວັນພຣະຫັດຈົນເຖິງບ່າຍວັນສຸກ, ຮ່າງກາຍກໍຖືກທຸບຕີດ້ວຍແສ້ໜັງ ດ້ວຍຄວາມເຈັບປວດແສນສາຫັດ ຈົນເກືອບຈະແບກກາງແຂນຍ່າງຕໍ່ໄປອີກບໍ່ໄດ້. ໃນເວລານັ້ນມີຊາຍຄົນນຶ່ງຊື່ວ່າ ຊີໂມນ ເປັນຊາວເມືອງກີເຣເນ ເດີນທາງມາທາງນັ້ນ ເມື່ອພວກທະຫານທີ່ກຳລັງຄຸມພຣະເຢຊູເຫັນລາວແລ້ວຈຶ່ງສັ່ງໃຫ້ລາວຊ່ອຍແບກກາງແຂນໄປຈົນເຖິງ ໂຄລະໂຄທາ.

ທີ່ໂຄລະໂຄທາ ພຣະອົງຊົງຫິວນ້ຳ, ພວກທະຫານໄດ້ເຮັດຕລົກໂດຍເອົາເຫລົ້າແວງປົນກັບຢາງໄມ້ຫອມມາຖວາຍພຣະອົງ ເພື່ອເປັນການເຍາະເຍີ້ຍ ແຕ່ພຣະອົງບໍ່ຊົງຮັບດື່ມ ແຕ່ຢ່າງໃດ, ເມື່ອພຣະອົງບໍ່ຊົງດື່ມແລ້ວເຂົາກໍແກ້ເອົາເຄື່ອງນຸ່ງຂອງພຣະອົງອອກໃຫ້ເປືອຍກາຍ ແລ້ວເອົາເຄື່ອງນຸ່ງຫົ່ມຂອງພຣະອົງມາເຮັດຕລົກຈົກສລາກປັນກັນອີກ. ເຂົາໄດ້ຄຶງພຣະອົງໄວ້ສາມຊົ່ວໂມງ ແຕ່ພຣະຄັມພີບອກວ່າ "*ເຂົາຄຶງພຣະອົງໄວ້ນັ້ນ*

*ເປັນເວລາສາມໂມງເຊົ້າ* " (ຂໍ້ 25ຂ). ໝາຍເຫດ: ການນັບເວລາໃນສມັຍນັ້ນແມ່ນນັບແຕ່ຫົກໂມງເຊົ້າເປັນຕົ້ນໄປ, ເຊັ່ນ 6-7 ໂມງເປັນຊົ່ວໂມງທີນຶ່ງ, 7-8 ໂມງ ເປັນຊົ່ວໂມງທີສອງ ແລະ 8-9 ໂມງເປັນຊົ່ວໂມງທີສາມຂອງວັນນັ້ນ ສລຸບແລ້ວເຂົາໄດ້ຄຶງພຣະອົງຕັ້ງແຕ່ເກົ້າໂມງເຊົ້າ ຈົນຮອດສາມໂມງແລງພຣະອົງຈຶ່ງສິ້ນໃຈ. ພວກຄົນທີ່ຍ່າງຜ່ານໄປມາ ກໍໝິ່ນປມາດ ເຍາະເຍີ້ຍວ່າ, "*ເຮີຍ, ເຈົ້າຜູ້ມ້າງພຣະວິຫານແລະສ້າງຂຶ້ນໃຫມ່ໃນສາມວັນ ຈົ່ງຊ່ອຍຕົວເອງໃຫ້ພົ້ນດ້ວຍລົງມາຈາກໄມ້ກາງແຂນເສັ້ຽ* " (ຂໍ້ 29-30). ສ່ວນພວກປະໂຣຫິດທີ່ເອີ້ນວ່າເປັນຄົນສິລທັມໃນສາຍຕາຂອງມະນຸດກໍກ່າວຫຍາບຊ້າວ່າ " *ມັນຊ່ອຍຄົນອື່ນໃຫ້ພົ້ນໄດ້ ແຕ່ຊ່ອຍຕົນເອງບໍ່ໄດ້ ໃຫ້ພຣະຄຣິດກະສັດແຫ່ງຊາດອິສຣາເອນລົງມາຈາກໄມ້ກາງແຂນດຽວນີ້ເທາະ ເພື່ອພວກເຮົາຈະໄດ້ເຫັນແລະເຊື່ອ* " (ຂໍ້ 32).

## 2. ຊົງສິ້ນພຣະຊົນ: (ມາຣະໂກ 15:33-43)

ພຣະທັມມາຣະໂກບອກວ່າພຣະເຢຊູຖືກຄຶງທີ່ໄມ້ກາງແຂນເປັນເວລາອັນຍາວນານ "*ຄັນເຖິງເວລາຫົກໂມງກໍບັງເກີດມືດມົວທົ່ວແຜ່ນດິນຈົນເຖິງເກົ້າໂມງ ພໍເກົ້າໂມງແລ້ວພຣະເຢຊູຊົງຮ້ອງສຽງດັງວ່າ, "ເອໂລອີ, ເອໂລອີ ແລມາ ຊະບັກທານີ" (ແປວ່າ "ພຣະເຈົ້າຂອງຂ້າພຣະອົງ ພຣະເຈົ້າຂອງຂ້າພຣະອົງ ເພາະເຫດໃດພຣະອົງຈຶ່ງປະຖິ້ມຂ້າພຣະອົງເສັ້ຽ")* (ຂໍ້ 33-34). ຄຳວ່າເກົ້າໂມງ ແປວ່າຊົ່ວໂມງທີເກົ້າຂອງມື້ນັ້ນ ດັ່ງນັ້ນພຣະຄັມພີພາສາລາວຈຶ່ງເຮັດ ຟຸດນົດ ຂ້າງລຸ່ມວ່າ "ສມັຍນີ້ເຄີຍວ່າ ບ່າຍສາມໂມງ". ພຣະເຢຊູຖືກຄຶງທີ່ໄມ້ກາງແຂນເປັນເວລາຫົກຊົ່ວໂມງເຕັມກ່ອນພຣະອົງຈະສິ້ນລົມຫາຍໃຈ, ສາມຊົ່ວໂມງແຮກພຣະອົງໄດ້ທົນທຸກເວດທະນາຢ່າງແສນສາຫັດ ແລະສາມຊົ່ວໂມງທີສອງຄືເວລາທ່ຽງຈົນເຖິງສາມໂມງແລງ ມີຟ້າມືດມົວທົ່ວແຜ່ນດິນ. ການທີ່ມີຟ້າມືດທົ່ວແຜ່ນດິນຄັ້ງນີ້ບໍ່ມີໃຜຮູ້ ແລະບໍ່ມີນັກວິທະຍາສາດບອກເລົ່າແຕ່ຢ່າງໃດ ສ່ວນຜູ້ທີ່ເຊື່ອໃນພຣະເຢຊູເຂົ້າໃຈວ່າ ພຣະເຢຊູຜູ້ເປັນຄວາມສວ່າງຂອງໂລກກຳລັງທົນທຸກທໍຣະມານ ແລະກຳລັງຈະສິ້ນໃຈຕາຍ ດັ່ງນັ້ນເມື່ອແສງສວ່າງຂອງໂລກຄືພຣະເຢຊູກຳລັງຈະຈາກໄປ ໂລກຈຶ່ງມືດດັ່ງນີ້ແຫລະ. ສລຸບແລ້ວແມ່ນວ່າ ບ່ອນໃດມີພຣະເຢຊູ ບ່ອນນັ້ນກໍມີແສງສວ່າງ, ຈິດໃຈໃດມີພຣະເຢຊູຈິດໃຈນັ້ນກໍສວ່າງ.

ພຣະເຢຊູໄດ້ຮ້ອງໄຫ້ກ່າວວ່າ "*ເອໂລອີ, ເອໂລອີ ແລມາ ຊະບັກທານີ" (ແປວ່າ "ພຣະເຈົ້າຂອງຂ້າພຣະອົງ ພຣະເຈົ້າຂອງຂ້າພຣະອົງ ເພາະເຫດໃດພຣະອົງຈຶ່ງປະຖິ້ມຂ້າພຣະອົງເສັ້ຽ")* ຄຳເວົ້ານີ້ ພວກສາສນາສາດສັນນິຖານວ່າພຣະເຢຊູໄດ້ກ່າວເຖິງເພງສັຣເສີນ 22:1 ທີ່ຮ້ອງມາແລ້ວ ແຕ່ບໍ່ທັນສຳເຣັດຈົນເຖິງເວລານີ້ຄືເວລາທີ່ພຣະເຢຊູຊົງວາຍພຣະຊົນຂອງພຣະອົງ ເພື່ອຄົນຜິດບາບທຸກຄົນທີ່ຍອມເຊື່ອວ່າພຣະອົງຊົງເປັນພຣະເຈົ້າຂອງຕົນ ແຕ່ພຣະເຈົ້າໄດ້ອວ່າຍພຣະພັກ (ຫລຽວໜ້າ) ໜີຈາກຄວາມບາບ. ຈົ່ງເຂົ້າໃຈວ່າພຣະເຈົ້າບໍ່ໄດ້ປະຖິ້ມພຣະເຢຊູ ແລະພຣະເຈົ້າຈະບໍ່ປະຖິ້ມຄຣິສຕຽນຈັກເທື່ອ ພຣະອົງຍັງຢູ່ກັບເຮົາສເມີ ແຕ່ເມື່ອຄວາມບາບເຊິ່ງເປັນຄວາມມືດແຫ່ງຊີວິດເຮັດໃຫ້ເຮົາເບິ່ງບໍ່ເຫັນພຣະເຈົ້າດ້ວຍຈິດວິນຍານເຮົາ ເພາະຄວາມບາບມາປິດບັງໄວ້ເທົ່ານັ້ນ ເມື່ອໃດຄວາມຜິດບາບທີ່ມືດຕຶບນັ້ນຫາຍໄປເຮົາກໍຈະເຫັນວ່າພຣະເຈົ້າຊົງຢູ່ກັບເຮົາໃນທຸກສະຖານທີ່, ທຸກເຫດການດ້ວຍ. ໃນຕົ້ນເດີມນັ້ນພຣະເຈົ້າກັບມະນຸດມີຄວາມສັມພັນໃກ້ຊິດ ແຕ່ເມື່ອຄວາມບາບເຂົ້າມາໃນຊີວິດຂອງມະນຸດແຮກຄືອາດາມແລະເອວາ ພຣະເຈົ້າຈຶ່ງໄລ່ມະນຸດອອກຈາກບ່ອນ

ທີ່ພຣະອົງຊົງໃຫ້ເຂົາຢູ່ອາສັຍໂດຍບໍ່ຕ້ອງເສັຽຄ່າອັນໃດ, ເມື່ອເຂົາກາຍເປັນຄົນບາບແລະອອກຈາກພຣະເຈົ້າແລ້ວ ກໍບໍ່ໄດ້ໃກ້ກັບພຣະເຈົ້າອີກ ເພາະວ່າຄວາມບາບຈະຕ້ອງຖືກແຍກອອກຈາກພຣະເຈົ້າຜູ້ຊົງບໍຣິສຸດ.

ໃນເວລາທີ່ພຣະເຢຊູຊົງຮ້ອງໄຫ້ກ່າວຄຳນັ້ນຢູ່ ໄດ້ມີຜູ້ຄົນຫລາຍຄົນໄດ້ຍິນສຽງຂອງພຣະອົງ ຈຶ່ງກ່າວວ່າ "*ເບິ່ງແມ, ມັນຮ້ອງຫາເອລີຢາ" ມີຄົນນຶ່ງແລ່ນໄປເອົາຟອງນ້ຳຈຸ່ມເຫລົ້າແວງສົ້ມໃຫ້ເຕັມ ຈຶ່ງສຽບໃສ່ປາຍໄມ້ອໍ້ຍື່ນໃຫ້ພຣະອົງສເວີຍໂດຍເວົ້າວ່າ, "ຟ້າວເທື່ອ ຖ້າເບິ່ງກ່ອນວ່າເອລີຢາຈະມາປົດມັນລົງຫລືບໍ* " (ຂໍ້ 35-36). ພຣະເຢຊູຖືກເຂົາເຍາະເຍີ້ຍດ່າວ່າຕ່າງໆ ນາໆ ຈົນເຖິງຂັ້ນເຂົາຖົ່ມນ້ຳລາຍໃສ່ໜ້າຈົນເຖິງລົມຫັນໃຈຄັ້ງສຸດທ້າຍ ດັ່ງນັ້ນຄຣິສຕຽນຜູ້ທີ່ພຣະອົງເອີ້ນໃຫ້ມາເປັນຄືພຣະອົງ ບໍ່ແມ່ນຈະເປັນຄືຕອນພຣະອົງຄືນພຣະຊົນແລ້ວກັບຄືນໄປສູ່ສວັນເທົ່ານັ້ນ, ຄຣິສຕຽນຈະເປັນຄ້າຍຄືພຣະອົງໃນຂະນະທີ່ໃຊ້ຊີວິດຢູ່ໃນໂລກນີ້ດ້ວຍ ແຕ່ຄຣິສຕຽນຕ້ອງເຂົ້າໃຈວ່າ ຊີວິດໃນໂລກນີ້ພຽງແຕ່ລະຍະສັ້ນໆ ເໝືອນຍິງທີ່ເຈັບທ້ອງເກີດລູກຊົ່ວຂະນະນຶ່ງ ແຕ່ເມື່ອລາວເຫັນໜ້າລູກນ້ອຍແລ້ວລາວກໍຈະລືມຄວາມເຈັບປວດທັງໝົດເອງ.

ເມື່ອເຂົາເຍາະເຍີ້ຍພຣະອົງໂດຍເອົາຟອງນ້ຳຈຸ່ມເຫລົ້າແວງ ແລ້ວສຽບໃສ່ປາຍໄມ້ຍື່ນໃຫ້ພຣະອົງທີ່ໄມ້ກາງແຂນ, ໂຢຮັນບອກວ່າ "*ເມື່ອພຣະເຢຊູຊົງຮັບເຫລົ້າແວງສົ້ມແລ້ວ ພຣະອົງກໍຊົງກ່າວວ່າ "ສຳເຣັດແລ້ວ" ແລະເມື່ອກົ້ມພຣະພັກລົງ ພຣະອົງຊົງມອບຈິດວິນຍານໄວ້* " (ໂຢຮັນ 19: 30) ແປວ່າພຣະອົງສິ້ນລົມຫາຍໃຈ ແລະມອບຈິດວິນຍານໄວ້ກັບພຣະບິດາ. ກ່າວກັບຄືນມາຫາພຣະທັມມາຣະໂກກ່າວຕໍ່ວ່າ " *ຂະນະນັ້ນຜ້າກັ້ງໃນພຣະວິຫານກໍຖືກຊົງຈີກເປັນສອງຕ່ອນຕັ້ງແຕ່ເທິງຈົນເຖິງລຸ່ມ ສ່ວນນາຍຮ້ອຍທະຫານທີ່ຢືນຢູ່ຕໍ່ພຣະພັກພຣະອົງ ເມື່ອເຫັນວ່າພຣະອົງສິ້ນພຣະຊົນຢ່າງນັ້ນແລ້ວຈຶ່ງເວົ້າວ່າ, "ຈິງແທ້ແລ້ວ ທ່ານຜູ້ນີ້ແມ່ນພຣະບຸດຂອງພຣະເຈົ້າ* " (ມາຣະໂກ 15: 28-29). ແປວ່າໃນຂະນະທີ່ພຣະເຢຊູຊົງສິ້ນລົມຫາຍໃຈນັ້ນຜ້າກັ້ງທີ່ກັ້ງຫີບພັນທະສັນຍາອັນສັກສິດ ບ່ອນທີ່ຊາຂາຣີຢາໄດ້ເຂົ້າໄປເພື່ອເຜົາເຄື່ອງຫອມບູຊາທີ່ໄດ້ກ່າວໃນພຣະທັມລູກາ 1 ນັ້ນໄດ້ຈີກແລ່ງແຕ່ເທິງຮອດລຸ່ມມີຄວາມໝາຍວ່າ ຕໍ່ໄປນີ້ຜູ້ທີ່ເຊື່ອໃນພຣະເຈົ້າທຸກຄົນສາມາດໄຫວ້ວອນ ຖວາຍເຄື່ອງບູຊາຕ່າງໆ ນັ້ນບໍ່ຈຳເປັນຕ້ອງມີປະໂຣຫິດອີກຕໍ່ໄປ ເພາະວ່າພຣະເຢຊູໄດ້ວາຍພຣະຊົນແລະໄດ້ຍົກຍ້າຍຜ້າກັ້ງທີ່ບັງໄວ້ຣະຫວ່າງມະນຸດກັບພຣະເຈົ້າແລ້ວ, ແລະຄວາມລອດພົ້ນນັ້ນແມ່ນມີແກ່ທຸກຄົນທີ່ຍອມຮັບເອົາພຣະເຢຊູຄຣິດມາເປັນພຣະເຈົ້າຂອງລາວ ທັງນີ້ກໍເພາະວ່າພວກນາຍຮ້ອຍທີ່ຢືນຢູ່ໃກ້ໄມ້ກາງແຂນພຣະເຢຊູນັ້ນໄດ້ຍອມຮັບວ່າພຣະເຢຊູເປັນພຣະບຸດຂອງພຣະເຈົ້າ ແຕ່ບໍ່ໄດ້ຮັບເອົາພຣະອົງເປັນພຣະເຈົ້າຂອງເຂົາ. ເມື່ອພຣະອົງຊົງສິ້ນພຣະຊົນແລ້ວມີຜູ້ນຶ່ງຊື່ໂຢເຊບໄທບ້ານອາຣີມາທາຍ ຜູ້ເປັນສະມາຊິກຂອງສານສູງສຸດໄດ້ຂໍເອົາພຣະສົບຂອງພຣະເຢຊູໄປໄວ້ທີ່ອຸບໂມງຂອງລາວ. (ຂໍ້ 43).

## 3. <u>**ຊົງຄືນພຣະຊົນ**</u>: (ມາຣະໂກ 16:1-8)

ທີ່ຈິງແລ້ວເຮົາກໍແປກໃຈທີ່ເຫັນຊື່ຂອງໂຢເຊບໄທບ້ານອາຣີມາທາຍປາກົດຂຶ້ນໂດຍບໍ່ເຄີຍໄດ້ຍິນເຣື່ອງຂອງລາວມາກ່ອນ, ຍິ່ງໄປກວ່ານັ້ນລາວຍັງເປັນສະມາຊິກສານສູງສຸດອີກທີ່ມາເມດຕາພຣະເຢຊູ ໂດຍນຳເອົາພຣະສົບຂອງພຣະເຢຊູໄປບັນຈຸໄວ້ໃນອຸບໂມງສ່ວນຕົວຂອງລາວ, ນອກນັ້ນລາວຍັງໄດ້ໃຊ້ເງິນຊື້ຜ້າປ່ານເພື່ອຫຸ້ມຫໍ່ພຣະສົບພຣະເຢຊູດ້ວຍ, ສິ່ງທີ່ເຮົາສາມາດເຫັນນັ້ນແມ່ນໃນຕອນທີ່ພຣະເຢຊູຂຶ້ນສານສູງສຸດນັ້ນ

ປີລາດກໍບໍ່ໄດ້ຕັດສິນພຣະອົງ, ພວກສະມາຊິກສະພາກໍບໍ່ໄດ້ມີສ່ວນໃນການຕັດສິນ ມີແຕ່ພວກປະໂຣຫິດ, ພວກນັກທັມ ແລະປະຊາຊົນເທົ່ານັ້ນທີ່ຕັດສິນພຣະເຢຊູຢ່າງເດັດຂາດ ການທີ່ໂຢເຊບເມດຕາຕອນນີ້ອາດຈະເປັນເພາະບັນດາສະມາຊິກສະພາບໍ່ເຫັນຄວາມຜິດຂອງພຣະເຢຊູແຕ່ຢ່າງໃດເລີຍ ຫລືພຣະເຈົ້າບັນດານຈິດໃຈລາວໃຫ້ເຮັດແນວນັ້ນເຮົາກໍບໍ່ຮູ້.

ເມື່ອວັນຊະບາໂຕ (ວັນເສົາ) ລ່ວງໄປ ຫລືໃນວັນອາທິດໄດ້ມີນາງມາຣີອາໄທມັກດາລາ, ມາຣີອາແມ່ຂອງຢາໂກໂບ ແລະນາງຊາໂລເມ ໄດ້ຈັດຕຽມເຄື່ອງຫອມເພື່ອໄປທາສົງພຣະສົບຂອງພຣະເຢຊູແຕ່ເຊົ້າມືດ. ພວກຜູ້ຍິງເຫລົ່ານັ້ນໄດ້ເຫັນພຣະເຢຊູໃນນາທີ່ສຸດທ້າຍທີ່ໄມ້ກາງແຂນດ້ວຍສາຍຕາຂອງເຂົາໃນແລງວັນສຸກນັ້ນ ພວກນາງໄດ້ເຫັນເຂົາເອົາພຣະສົບພຣະເຢຊູໄປບັນຈຸທີ່ອຸບໂມງຂອງໂຢເຊບໄທບ້ານອາຣິມາທາຍແລະວັນນີ້ເປັນວັນອາທິດຊຶ່ງເປັນວັນຖ້ວນສາມ ທີ່ພຣະສົບຂອງພຣະເຢຊູຖືກບັນຈຸໃນອຸບໂມງນັ້ນ. ພວກຜູ້ຍິງເຫລົ່ານີ້ພາກັນໂສກເສົ້າເຫງົາໃຈແລະຮູ້ສຶກໝົດຫວັງ ແລະກໍບໍ່ຮູ້ວ່າເມື່ອເວລາໄປເຖິງອຸບໂມງແລ້ວຈະເຂົ້າໄປທາງໃນໄດ້ບໍ່? ເພາະວ່າປາກອຸບໂມງຖືກປິດດ້ວຍຫີນແຜ່ນໃຫຍ່ (ອ່ານຂໍ້ 1-3). ແຕ່ພໍເມື່ອພວກແມ່ຍິງໄປເຖິງກໍເຫັນວ່າຫີນທີ່ປິດປາກອຸບໂມງນັ້ນຖືກກິ້ງອອກແລ້ວ ແລະພວກຜູ້ຍິງໄດ້ເຫັນເທວະດາບອກເຣື່ອງລາວທຸກຢ່າງແກ່ພວກນາງ ໂດຍສະເພາະຢ່າງຍິ່ງແມ່ນໃຫ້ໄປສົ່ງຂ່າວພວກສາວົກໃຫ້ໄປພົບກັບພຣະອົງທີ່ແຂວງຄາລີເລ ແລ້ວຍິງເຫລົ່ານັ້ນກໍຟ້າວອອກຈາກອຸບໂມງໄປດ້ວຍຄວາມຢ້ານສັ່ນເຊັນ.

ສັງເກດເຫັນວ່າພວກແມ່ຍິງເຫລົ່ານີ້ໄປອຸບໂມງດ້ວຍຄວາມຮັກ, ດ້ວຍຄວາມສັດທາ ທີ່ພວກເຂົາມີຕໍ່ພຣະເຢຊູ ພວກເຂົາຮູ້ແນ່ແກ່ໃຈວ່າເມື່ອໄປຮອດອຸບໂມງ ພວກເຂົາຈະບໍ່ມີແຮງພໍທີ່ຈະກິ້ງຫີນນັ້ນອອກຈາກປາກອຸບໂມງໄດ້ ແຕ່ພໍໄປຮອດກໍເຫັນວ່າປາກອຸບໂມງນັ້ນໄຂແລ້ວ ແຕ່ບໍ່ແມ່ນໄຂເພື່ອໃຫ້ພຣະເຢຊູອອກມາ ແຕ່ແມ່ນໄຂເພື່ອບອກວ່າພຣະອົງຊົງຄືນພຣະຊົນແລ້ວ ຫີນແຜ່ນໃຫຍ່ບໍ່ສາມາດກັ້ນພຣະອົງໄວ້ໃນອຸບໂມງດອກແລະຫີນນີ້ຖືກກິ້ງອອກດ້ວຍຣິດເດດຂອງເທວະດາ ເພື່ອໃຫ້ທຸກຄົນເຫັນວ່າ ພຣະເຢຊູຊົງຊະນະຄວາມຕາຍ, ຮ່າງຂອງພຣະອົງບໍ່ໄດ້ຢູ່ທີ່ນັ້ນ ແລະສະເດັດອອກໄປຮອດແຂວງຄາລີເລແລ້ວ ເພື່ອພົບກັບພວກສາວົກຢູ່ທີ່ນັ້ນ.

<u>**ຄຳຖາມ**:</u>

1. ປ້າຍທີ່ຂຽນວ່າ ກະສັດຂອງຊາດຢິວ ນັ້ນທ່ານຄິດວ່າປີລາດຈະຄິດຢ່າງໃດ? ທະຫານທີ່ໄມ້ກາງແຂນແລະຜູ້ຍິງທີ່ໄມ້ກາງແຂນນັ້ນທ່ານຄິດວ່າມີຄວາມໝາຍແນວໃດ?
2. ເປັນຫຍັງພຣະເຢຊູຈຶ່ງກ່າວວ່າ ພຣະເຈົ້າຂອງຂ້າພຣະອົງ ເພາະເຫດໃດພຣະອົງຈຶ່ງປະຖິ້ມຂ້າພຣະອົງເສັຽ?
3. ພຣະເຢຊູສິ້ນພຣະຊົນດ້ວຍເຫດອັນໃດ?

*ທວ*

# ບົດຮຽນຄຣິສມັສ
# <u>ພຣະເຈົ້າຊົງຢູ່ກັບເຮົາ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ມັດທາຍ 1:1, 17-25
**<u>ພູມຫລັງຂອງພຣະຄັມພີ:</u>** ມັດທາຍ 1
**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ການບັງເກີດພຣະເຢຊູໄດ້ສຳເຣັດໂດຍຊື່ວ່າ ເອມານູເອນ
**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ເຮົາຈະຕ້ອນຮັບການເກີດພຣະເຢຊູທີ່ຊື່ວ່າເອມານູເອນແນວໃດ?
**<u>ຈຸດປະສົງຂອງບົດຮຽນ:</u>** ເພື່ອໃຫ້ເຮົາໄດ້ຮັບເຊື່ອແລະປະຕິບັດ

## <u>ບົດນຳ</u>

ຄຣິສມັສກາຍເປັນວັນຄອບຄົວໃນສັງຄົມຂອງຄົນທີ່ມີພູມລຳເນົາໃນອະເມຣິກາ, ຊາວອະເມຣິກັນມັກຈະກັບບ້ານຈາກການງານຕ່າງຣັດເພື່ອເຕົ້າໂຮມກັນເປັນຄອບຄົວໃຫຍ່, ສ່ວນຫລາຍແລ້ວພວກລູກມັກຈະພາຄອບຄົວຂອງຕົນກັບຄືນໄປບ້ານພໍ່ແມ່ ເພື່ອສເລີມສລອງວັນຄຣິສມັສຮ່ວມກັນ. ໃນປະເທດອະເມຣິກາໄດ້ມີປະເພນີອັນດີງາມກໍເນື່ອງຈາກການເກີດຂອງພຣະເຢຊູນັ້ນເອງ ແຕ່ໜ້າເສັຽດາຍເມື່ອຄົນທັງຫຼາຍສເລີມສລອງຄຣິສມັສໂດຍບໍ່ຮູ້ຈັກຄວາມໝາຍອັນແທ້ຈິງຂອງວັນຄຣິສມັສ. ດ້ວຍເຫດນີ້ແຫລະ ຖານະທີ່ເຮົາເປັນຄຣິສຕຽນ ຫລືເປັນຜູ້ເຊື່ອພຣະເຢຊູ ຢ່າສເລີມສລອງຄຣິສມັສໂດຍບໍ່ມີພຣະເຢຊູເລີຍ ແຕ່ຈົ່ງສເລີມສລອງໂດຍມີພຣະເຢຊູເປັນຈຸດສູນກາງໃນງານນັ້ນ.

## 1. <u>ເຊື້ອວົງຂອງພຣະເຢຊູ:</u> (ມັດທາຍ 1:1-17)

ພຣະທັມມັດທາຍໄດ້ແນະນຳຄວາມເປັນມາຂອງຄຣິສມັສ ໂດຍເລີ້ມຈາກເຊື້ອສາຍຂອງພຣະເຢຊູມີດັ່ງນີ້; ພຣະເຢຊູ ເປັນເຊື້ອສາຍຂອງກະສັດດາວິດ ຊຶ່ງດາວິດເອງກໍເປັນຜູ້ສືບຕະກູນຈາກອັບຣາຮາມ ທີ່ເຮົາເອີ້ນເພິ່ນວ່າເປັນພໍ່ແຫ່ງຄວາມເຊື່ອ ອັບຣາຮາມມີລູກຊາຍສອງຄົນ ຄົນນຶ່ງຊື່ອີຊາກ, ແລ້ວອີຊາກມີລູກຊາຍຊື່ຢາໂຄບ ຕໍ່ໆ ກັນມາຈົນເຖິງພຣະເຢຊູຄຣິດ ສ່ວນລາຍລະອຽດນັ້ນໃຫ້ໄປອ່ານຈາກຂໍ້ 2-16 ແລະເພື່ອຄວາມເຂົ້າໃຈເພີ້ມຣື່ອງລຳດັບເຊື້ອວົງຂອງພຣະເຢຊູ ຈຶ່ງຂໍແນະນຳໃຫ້ໄປຄົ້ນຄວ້ານຳອິນເຕີເນັດ ຫລືໄປຊື້ແຜ່ນກະດາດໃຫຍ່ທີ່ມີຂາຍຕາມຮ້ານຄ້າຄຣິສຕຽນທົ່ວໄປໄດ້. ໃນວົງຕະກູນຂອງພຣະເຢຊູນີ້ເອງ ໄດ້ມີພວກຜູ້ທຳນວາຍໄດ້ທຳນວາຍໄວ້ວ່າ Messiah (ພຣະເມຊີອາ) ຈະເກີດມາຈາກເຊື້ອສາຍຂອງດາວິດ.

ຊື່ຂອງກະສັດດາວິດເປັນກະສັດໃນລຳດັບເຊື້ອວົງຂອງອິສຣາເອນ ແຕ່ທ່ານກໍບໍ່ແມ່ນກະສັດທີ່ດີແລະຖືກຕ້ອງສເມີຕົ້ນສເມີປາຍໃນຊີວິດຂອງທ່ານ, ພຣະເຈົ້າໄດ້ໃຫ້ພວກຜູ້ທຳນວາຍ ທຳນວາຍວ່າພຣະເມຊີອາ ຄືພຣະຜູ້ຊ່ອຍໃຫ້ພົ້ນຈະເກີດມາຈາກເຊື້ອສາຍຂອງກະສັດດາວິດ.

## 2. <u>ວິກິດ(ບັນຫາ)ໃນຄອບຄົວ</u>: (ມັດທາຍ 1: 18-19)

ເຣື່ອງເຊື້ອວົງຂອງພຣະເຢຊູໄດ້ຈົບລົງກັບໂຢເຊບ ຜູ້ເປັນບິດາຝ່າຍໂລກຂອງພຣະອົງ, ເຣື່ອງນີ້ພຣະທັມມັດທາຍບອກຢ່າງແຈ່ມແຈ້ງເຖິງການເກີດຂອງພຣະເຢຊູວ່າ "*ເຣື່ອງພຣະກຳເນີດຂອງພຣະເຢຊູຄຣິດເປັນດັ່ງນີ້: ຄືນາງມາຣີອາຜູ້ເປັນມານດາຂອງພຣະເຢຊູນັ້ນ ໄດ້ເປັນຄູ່ໝັ້ນກັບໂຢເຊບແລ້ວ ກ່ອນເວລາເຂົາໄດ້ເປັນຄູ່ຜົວເມັຽກັນກໍປາກົດວ່າ ນາງມີທ້ອງແລ້ວດ້ວຍຣິດເດດພຣະວິນຍານບໍຣິສຸດ ຝ່າຍໂຢເຊບຜູ້ເປັນຄູ່ໝັ້ນຂອງນາງເປັນຄົນມີສິນທັມ ແຕ່ປານນັ້ນທ່ານບໍ່ຢາກໃຫ້ເຣື່ອງນີ້ເປັນທີ່ອັບອາຍຂາຍໜ້າແກ່ນາງ ຈຶ່ງຕັດສິນໃຈວ່າຈະຖອນໝັ້ນເສັຽຢ່າງລັບໆ* " (ມັດທາຍ 18-18). ແປວ່າ ໂຢເຊບ ແລະມາຣີອາເປັນຄູ່ໝັ້ນຖ້າມຈະແຕ່ງງານກັນໃນອະນາຄົດ, ແຕ່ກ່ອນກຳໜົດວັນແຕ່ງງານນັ້ນປາກົດວ່າ ມາຣີອາ ໄດ້ມີທ້ອງຖືພາແລ້ວ ແຕ່ການຖືພາຂອງນາງເປັນດ້ວຍຣິດເດດຂອງພຣະວິນຍານບໍຣິສຸດເຮັດໃຫ້ນາງມີທ້ອງຕັ້ງຄັນ ຊຶ່ງເປັນການບົ່ງບອກວ່າເປັນການອັສຈັນອັນໃຫຍ່ຫລວງທີ່ບໍ່ເຄີຍມີມາກ່ອນ ແລະຈະບໍ່ມີອີກຕໍ່ໄປໃນອະນາຄົດຂ້າງໜ້າ ດ້ວຍວ່າບໍ່ມີຣິດຫລືອຳນາດ ຫລືນັກວິຊາການໃດໆມີຄວາມສາມາດເຮັດດັ່ງນີ້ໄດ້ ແຕ່ໜ້າເສັຽດາຍການອັສຈັນອັນນີ້ທ່ານໂຢເຊບ ຜູ້ເປັນຄູ່ໝັ້ນບໍ່ຮູ້ເຫັນ ແລະບໍ່ເຂົ້າໃຈ ທັງນີ້ກໍເພາະວ່າ ພຣະເຈົ້າບໍ່ທັນເປີດເຜີຍເຣື່ອງນີ້ແກ່ລາວເທື່ອ ແລະລາວຮູ້ຕົວດີວ່າບໍ່ເຄີຍແຕະຕ້ອງລ່ວງເກີນສົມສູ່ກັບນາງເລີຍ, ດ້ວຍເຫດນີ້ ທ່ານໂຢເຊບຈຶ່ງຄິດຈະຖອນໝັ້ນເສັຽ ແຕ່ການຄິດຖອນໝັ້ນຂອງລາວບໍ່ແມ່ນຈະໄປເປີດໂປງຫລືປະກາດດ້ວຍສຽງດັງ ດ່າປະນາມນາງມາຣີອາແຕ່ຢ່າງໃດ ແຕ່ຈະຖອນໝັ້ນຢ່າງລັບໆເທົ່ານັ້ນ. ເຣື່ອງນີ້ແຫລະຈຶ່ງເປັນທີ່ມາຂອງວິກິດໃນຄອບຄົວ.

ມັດທາຍບອກອີກວ່າ ໂຢເຊບເປັນຄົນສິນທັມ, ຄຳວ່າສິນທັມຕອນນີ້ໝາຍເຖິງຄົນສິນທັມຈະປະຕິບັດຕາມກົດທຸກຢ່າງທີ່ຫ້າມ ເຊັ່ນບໍ່ຮ່ວມເພດກ່ອນແຕ່ງງານ. ໂຢເຊບຮູ້ຕົວເອງດີວ່າຕົນເປັນຜູ້ປະຕິບັດຕາມຫລັກສິນທັມ, ໃນສາຍຕາຂອງພໍ່ແມ່ຂອງລາວກໍເຫັນວ່າລາວເປັນຄົນສິນທັມ ເຫດນັ້ນເມື່ອຄູ່ໝັ້ນຂອງລາວມີທ້ອງກ່ອນແຕ່ງງານລາວຄົງບໍ່ມີຄຳອະທິບາຍໃຫ້ແກ່ພໍ່ແມ່ຂອງລາວ. ໂຢເຊບກາຍເປັນຄົນຄິດໜັກຈົນເຮັດໃຫ້ລາວມີຄວາມຄິດຫວຸ້ນວາຍພາຍໃນຈິດໃຈຂອງລາວຢ່າງໜັກໜ່ວງ ລາວຄິດໄດ້ຢ່າງດຽວຄືຖອນໝັ້ນ ບໍ່ແຕ່ງງານເພາະລາວຄິດວ່ານາງມາຣີອານອກໃຈລາວເສັຽແລ້ວແລະການຖອນໝັ້ນນີ້ຈະເຮັດແບບມິດໆ ດ້ວຍວ່າຫາກລາວເວົ້າຫລືປະກາດດ້ວຍສຽງດັງນາງມາຣີອາຈະຕ້ອງຖືກປະຊາຊົນຄວ່າງຫີນໃສ່ຈົນຕາຍ ເພາະກົດໝາຍຂອງຢິວເປັນດັ່ງນັ້ນ.

## 3. <u>ຄອບຄົວຂອງພຣະເຈົ້າ</u>: (ມັດທາຍ 20-25)

ມີຫລາຍເທື່ອເຮົາບໍ່ເຂົ້າໃຈແຜນການຂອງພຣະເຈົ້າ ຫລືເຮົາເຮັດຕາມຄວາມເຂົ້າໃຈເຮົາຄືໂຢເຊບນັ້ນແຫຼະລາວຄິດຈະຖອນໝັ້ນເພາະລາວເຂົ້າໃຈວ່າ ລາວເປັນຄົນສິນທັມບໍ່ເຄີຍສົມສູ່ກັບນາງມາຣີອາ, ລາວເຂົ້າໃຈວ່າເມື່ອເປັນຄົນສິນທັມຈະບໍ່ໃຫ້ເຣື່ອງນີ້ເປັນທີ່ອັບອາຍຂາຍໜ້າແກ່ນາງມາຣີອາ, ລາວເຂົ້າໃຈວ່າເຂົາຈະຕ້ອງຄວ່າງຫີນໃສ່ນາງມາຣີອາຈົນເຖິງຄວາມຕາຍຕາມກົດໝາຍຂອງຊາດຢິວ ຄວາມເຂົ້າໃຈຂອງລາວເປັນເໝືອນຄົນທົ່ວໄປ ແຕ່ພຣະເຈົ້າໄດ້ກະທຳຫລາຍຢ່າງເກີນກວ່າຄວາມເຂົ້າໃຈຂອງມະນຸດ ດ້ວຍວ່າເຮົາອາສັຍຄວາມຮູ້, ຄວາມສາມາດ, ອາສັຍເງື່ອນໄຂຂອງວັດທະນະທັມສັງຄົມມະນຸດ ມາເປັນເຄື່ອງວັດແທກ ແຕ່ເຮົາ

ລືມໄປວ່າ ສິ່ງເຫລົ່ານັ້ນບໍ່ສາມາດຢັ່ງເຖິງເຣື່ອງຂອງພຣະເຈົ້າໄດ້, ໂປໂລກ່າວວ່າ " *ຄວາມໂງ່ຈ້າຂອງພຣະເຈົ້າ ກໍຍັງສລາດກວ່າປັນຍາຂອງມະນຸດ* " (1ໂກຣິນໂທ 1: 25ກ). ດ້ວຍເຫດນີ້ແຫລະເຮົາບໍ່ລືມຄວນຈະເອົາສະຕິປັນຍາຂອງເຮົາໄປຢັ່ງຮູ້ເຣື່ອງຂອງພຣະເຈົ້າໄດ້.

ໃນຂະນະທີ່ໂຢເຊັບກຳລັງໃຊ້ສະຕິປັນຍາຂອງລາວຄິດເຣື່ອງນີ້ຢູ່ ພຣະເຈົ້າໄດ້ສົ່ງເທວະດາມາບອກຄວາມຈິງແກ່ລາວທາງຄວາມຝັນວ່າ " *ໂຢເຊບບຸດດາວິດເອີຍ* ", ເທວະດາໄດ້ເອີ້ນອອກຊື່ ໂຢເຊບ ອັນເປັນການເອີ້ນໃຫ້ຕັ້ງໃຈຟັງ, ແຕ່ໃນຄວາມຝັນຂອງໂຢເຊບນັ້ນເທວະດາໄດ້ເອີ້ນຊື່ໂຢເຊບຢ່າງຖືກຕ້ອງ ແຕ່ເທວະດາກ່າວເຖິງຊື່ພໍ່ຂອງໂຢເຊບວ່າ "*ໂຢເຊບບຸດດາວິດ*" ທ່ານເຄີຍຄິດແປກໃຈບໍ່ວ່າເປັນຫຍັງເທວະດາຈຶ່ງເວົ້າວ່າ "<u>ໂຢເຊບ ເປັນບຸດຂອງດາວິດ</u> " ທັງໆ ທີ່ຊື່ພໍ່ຂອງໂຢເຊບບໍ່ໄດ້ຊື່ດາວິດ ແຕ່ຊື່ ຢາໂຄບ (ອີງຕາມມັດທາຍ 1: 26). ສ່ວນໂຢເຊບກໍບໍ່ໄດ້ຖຽງວ່າ ພໍ່ຂ້ານ້ອຍບໍ່ໄດ້ຊື່ດາວິດ ແຕ່ຊື່ຢາໂຄບ ລາວບໍ່ຖຽງເພາະລາວຮູ້ວ່າລາວມາຈາກເຊື້ອສາຍຂອງກະສັດດາວິດ ແຕ່ເຖິງຢ່າງໃດກໍດີ ຫາກເທວະທາຕົນນັ້ນເວົ້າວ່າ ໂຢເຊບ ເຊື້ອສາຍຂອງດາວິດເຮົາຄົງຈະເຂົ້າໃຈງ່າຍກວ່າ ແຕ່ເທວະດາໄດ້ກ່າວເຊັ່ນນັ້ນ ເພາະໃຫ້ຖືກຕ້ອງຕາມຄຳທຳນວາຍວ່າພຣະເມຊີອາ ຈະເກີດມາຈາກເຊື້ອສາຍຂອງດາວິດ. (ອ່ານ ເອຊາຢາ 7:13-14).

ເທວະດາກ່າວຕໍ່ໄປວ່າ " *ຢ່າຊູ່ຢ້ານທີ່ຈະຮັບນາງມາຣີອາມາເປັນເມັຽຂອງເຈົ້າ ເພາະວ່າຜູ້ຊຶ່ງປະຕິສົນທິໃນທ້ອງຂອງນາງກໍເປັນໂດຍເດດພຣະວິນຍານບໍຣິສຸດນາງຈະປະສູດບຸດ ແລ້ວເຈົ້າຈົ່ງຖວາຍນາມທ່ານວ່າ ເຢຊູ ເພາະວ່າທ່ານຜູ້ນີ້ແຫລະ, ຈະເປັນຜູ້ໂຜດໄພ່ພົນຂອງຕົນໃຫ້ລອດພົ້ນຈາກຄວາມຜິດບາບຂອງເຂົາ ການທັງປວງນີ້ເກີດຂຶ້ນເພື່ອຈະໃຫ້ສຳເຣັດ ຕາມທີ່ພຣະຜູ້ເປັນເຈົ້າໄດ້ຊົງກ່າວໄວ້ດ້ວຍຜູ້ປະກາດພຣະທັມວ່າ, “ເບິ່ງແມ, ຍິງພົມມະຈາຣີນັ້ນຈະມີທ້ອງແລະປະສູດບຸດຄົນນຶ່ງ ແລະເຂົາຈະເອີ້ນບຸດນັ້ນວ່າ ເອມານູເອນ”* (ແປວ່າ “ພຣະເຈົ້າຊົງສະຖິດຢູ່ກັບເຮົາທັງຫລາຍ”). (ຂໍ້ 20-23). ແປວ່າບໍ່ໃຫ້ສົງສັຍນາງມາຣີອາວ່າເປັນຄົນຢ່າງເຈົ້າຄິດ ບໍ່ໃຫ້ເຮັດຕາມຄວາມຄິດຂອງເຈົ້າ ແລ້ວເທວະດາກໍບອກທຸກຢ່າງທີ່ເກີດຂຶ້ນກັບນາງມາຣີອາ.

ມັດທາຍກ່າວຕໍ່ໄປວ່າ "*ເມື່ອໂຢເຊບຕື່ນຂຶ້ນກໍເຮັດຕາມຄຳທີ່ເທວະດາຂອງພຣະຜູ້ເປັນເຈົ້າສັ່ງນັ້ນ ຄືຮັບເອົານາງມາຣີອາມາເປັນພັຣຍາຂອງຕົນ ແຕ່ບໍ່ໄດ້ສົມສູ່ຢູ່ກັບນາງຈົນປະສູດບຸດຊາຍແລ້ວ ແລະໂຢເຊບໄດ້ເອີ້ນຊື່ບຸດນັ້ນວ່າ ເຢຊູ* " (ມັດທາຍ 24-25).

**<u>ຄຳຖາມ</u>:**

1. ຄວາມດີໃນສາຍເຄືອຍາດວົງຂອງທ່ານໄດ້ມາເຖິງທ່ານຢ່າງໃດ? ທ່ານຈະໃຫ້ສືບຕໍ່ໄປແນວໃດ?

2. ໃນພຣະຄັມພີໄດ້ບົ່ງບອກສາຍເຄືອຍາດຂອງພຣະເຢຊູມາຈາກກະສັດດາວິດ ທ່ານຈະອະທິບາຍຢ່າງໃດ?

3. ເມື່ອໂຢເຊັບເປັນຄູ່ໝັ້ນຂອງມາຣີອານັ້ນ ເປັນຫຍັງລາວຈຶ່ງຢາກຖອນໝັ້ນ?

4. ເປັນຫຍັງ ລາວຈຶ່ງຢາກຖອນໝັ້ນຢ່າງລັບໆ ແທນທີ່ຈະຟ້ອງເອົາຄ່າໝັ້ນສອງເທົ່າ?

5. ໂຢເຊັບເປັນຄົນປະເພດໃດໃນສາຍພຣະເນດຂອງພຣະເຈົ້າ?

6. ລາວອາສັຍອັນໃດເພື່ອເປັນຂໍ້ອ້າງໃນການຖອນໝັ້ນ?, ຫາກລາວຖອນ?

7. ຄວາມຄິດ, ຄວາມສລາດຂອງໂຢເຊບໄດ້ສະທ້ອນອັນໃດເຖິງພວກເຮົາ?

8. ດ້ວຍເຫດໃດໂຢເຊບຈຶ່ງບໍ່ຖອນໝັ້ນ.

*ຫວ*